LAOVIET Bank

2025
ບົດລາຍງານ
ປະຈຳປີ

2025 ANNUAL REPORT

LAOVIET Bank

ທະນາຄານ ຮ່ວມທຸລະກິດລາວ-ຫວຽດ ຈຳກັດ

ບົດລາຍງານປະຈຳປີ 2025

ສາລະບານ

ຈຶດໝາຍ 01

08 ຈຶດໝາຍຂອງປະທານສະພາບໍລິຫານ
10 ລາງວັນທີ່ພົ້ນເດັ່ນ

ພາບລວມຂອງ LAOVIETBANK 2025 02

14 ຂໍ້ມູນໂດຍຫຍໍ້ກ່ຽວກັບ LaoVietBank
16 ໄລຍະຂອງການສ້າງຕັ້ງ ແລະ ພັດທະນາ
18 ພາລະກິດ ແລະ ວິໄສທັດ
19 ບັນດາເປົ້າໝາຍທຸລະກິດຕົ້ນຕໍ
21 ຜະລິດຕະພັນຫຼັກ ແລະ ພົ້ນເດັ່ນ
24 ໂຄງສ້າງຜູ້ຖືຮຸ້ນ ແລະ ກົງຈັກການຄຸ້ມຄອງ
26 ສະພາບໍລິຫານ
30 ຄະນະອຳນວຍການ

ການເຄື່ອນໄຫວທຸລະກິດ ປີ 2025 03

36 ສະພາບການດຳເນີນທຸລະກິດ
42 ການຄຸ້ມຄອງພະນັກງານ, ຜູ້ອອກແຮງງານ
44 ການເຄື່ອນໄຫວດ້ານຊ່ວຍເຫຼືອສັງຄົມເພື່ອຊຸມຊົນ

ບົດລາຍງານຕີລາຄາຂອງຄະນະບໍລິຫານ 04

48 ຜົນການດຳເນີນທຸລະກິດ ທລອ ປີ 2025
50 ບັນດາຄວາມສ່ຽງພາຍນອກ ແລະ ຄວາມສ່ຽງພາຍໃນ

ບົດລາຍງານຂອງນັກກວດສອບອິດສະຫຼະ 05

60 ບົດລາຍງານຂອງນັກກວດສອບອິດສະຫຼະ
64 ໃບລາຍງານຖານະການເງິນ
66 ໃບສະຫຼຸບຜົນໄດ້ຮັບ ແລະ ຜົນໄດ້ຮັບສຸດທິອື່ນ
67 ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
68 ໃບລາຍງານກະແສເງິນສົດ
70 ສຳນັກງານໃຫຍ່, ບັນດາສາຂາ ແລະ ໜ່ວຍບໍລິການທົ່ວປະເທດ

ຈົດໝາຍ

ຈົດໝາຍຂອງປະທານສະພາບໍລິຫານ 08

ລາງວັນທີ່ພົ້ນເດັ່ນ 2025 10

01



ຈົດໝາຍ ຂອງປະທານສະພາບໍລິຫານ

ທ່ານ ຮອ່າງ ຫວຽດ ຮຸ່ງ - ປະທານສະພາບໍລິຫານ LAOVIETBANK

ປີ 2025 ໄດ້ປິດສາກລົງດ້ວຍສັນຍານການຟື້ນຕົວໃນທິດທາງບວກ ແຕ່ກໍຍັງປາສະຈາກບໍ່ໄດ້ເຖິງສິ່ງທ້າທາຍຕ່າງໆຈາກຕະຫຼາດການເງິນທົ່ວໂລກ ແລະ ຄວາມຜັນຜວນທາງດ້ານພູມສາດການເມືອງທີ່ສັບຊ້ອນ. ໃນສະພາບການດັ່ງກ່າວ, ເສດຖະກິດຂອງ ສປປ ລາວ ໄດ້ສະແດງໃຫ້ເຫັນເຖິງຄວາມເຂັ້ມແຂງ ແລະ ເດັດດ່ຽວໝຽວແໜ້ນ, ສາມາດຄວບຄຸມອັດຕາເງິນເຟີ້ເທື່ອລະກ້າວ, ຮັກສາສະຖຽນລະພາບຂອງອັດຕາແລກປ່ຽນ ແລະ ສືບຕໍ່ຮັກສາທ່ວງທ່າການເຕີບໂຕຢ່າງເປັນໜ້າປະທັບໃຈ.

ໃນທ່າມກາງກະແສດັ່ງກ່າວ, ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ ຈຳກັດ (LaoVietBank) ຍັງສືບຕໍ່ຢືນຢັນຈຸດຍືນອັນໜັກແໜ້ນ ໃນຖານະການເປັນໜຶ່ງໃນທະນາຄານຮ່ວມທຶນຊັ້ນນຳ, ເຊິ່ງມີບົດບາດເປັນ "ຂົວຕໍ່" ໃຫ້ແກ່ສາຍພົວພັນການຮ່ວມມືທາງດ້ານເສດຖະກິດແບບພິເສດ ລະຫວ່າງ ສອງຊາດ ລາວ - ຫວຽດນາມ. ພາຍໃຕ້ການຊີ້ນຳຢ່າງໃກ້ຊິດ ແລະ ການຊ່ວຍເຫຼືອຢ່າງຮອບດ້ານຈາກສອງທະນາຄານແມ່ ຄື BIDV ແລະ BCEL, ບວກກັບນ້ຳໃຈສາມັກຄີ, ຫົວຄິດປະດິດສ້າງ ຂອງຄະນະຜູ້ບໍລິຫານ ແລະ ພະນັກງານທຸກທົ່ວໜ້າ, LaoVietBank ບໍ່ພຽງແຕ່ສາມາດຜ່ານຜ່າທຸກສິ່ງທ້າທາຍເທົ່ານັ້ນ ແຕ່ຍັງສາມາດສ້າງບາດກ້າວຂຸມທະລຸຢ່າງແຂງແຮງ, ສາມາດເຮັດສຳເລັດບັນດາຄາດໝາຍແຜນທຸລະກິດທີ່ວາງໄວ້ໃນປີ 2025 ຢ່າງດີເລີດ.

LaoVietBank ໄດ້ຈັດຕັ້ງປະຕິບັດບັນດານະໂຍບາຍເງິນຕາຂອງລັດຖະບານຢ່າງມີປະສິດທິຜົນ, ເປັນເຈົ້າການຄຽງຄູ່ໄປກັບລູກຄ້າ ຜ່ານຫຼາຍໂຄງການສິນເຊື່ອບຸລິມະສິດ, ໂດຍສະເພາະແມ່ນໄດ້ສຸມໃສ່ຊ່ວຍເຫຼືອວິສາຫະກິດຂະໜາດນ້ອຍ ແລະ ຂະໜາດນ້ອຍທີ່ສຸດ (MSME) ເຊິ່ງເປັນເສົາຄ້ຳທີ່ສຳຄັນຂອງລະບົບເສດຖະກິດ. ພ້ອມດຽວກັນນັ້ນ, ທະນາຄານຍັງໄດ້ເປັນຜູ້ບຸກເບີກໃນການຈັດຕັ້ງປະຕິບັດມາດຕະການຫັນເປັນດິຈິຕອນ, ກ້າວໄປສູ່ການສ້າງພື້ນຖານທະນາຄານທີ່ທັນສະໄໝທາງດ້ານເຕັກໂນໂລຊີ, ມີຄວາມເປັນມືອາຊີບ ແລະ ຖືເອົາລູກຄ້າເປັນໃຈກາງ.

ຈຸດພົ້ນເດັ່ນໃນປີທີ່ຜ່ານມາ ແມ່ນການຫັນປ່ຽນຢ່າງແຂງແຮງໃນຍຸດທະສາດການຫັນເປັນດິຈິຕອນ. LaoVietBank ຍັງສືບຕໍ່ພັດທະນາຜະລິດຕະພັນບໍລິການທະນາຄານເອເລັກໂຕຣນິກທີ່ສະດວກສະບາຍ, ຍົກລະດັບປະສົບການຂອງລູກຄ້າ ແລະ ເປີດກວ້າງການເຂົ້າເຖິງການບໍລິການທາງດ້ານການເງິນ, ໂດຍສະເພາະແມ່ນຢູ່ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ. ຄວາມມານະພະຍາຍາມດັ່ງກ່າວ ໄດ້ຊ່ວຍໃຫ້ LaoVietBank ໄດ້ຮັບການຕີລາຄາສູງຈາກບັນດາອົງການຈັດຕັ້ງສາກົນ, ເປັນກຽດໄດ້ຮັບລາງວັນອັນອຸດົມສົມບູນ ໃນຂົງເຂດທະນາຄານຂາຍຍ່ອຍ ແລະ ທະນາຄານດິຈິຕອນ ໃນ ສປປ ລາວ.

ຄຽງຄູ່ກັບການພັດທະນາທຸລະກິດ, LaoVietBank ຍາມໃດກໍຖືເອົາຄວາມຮັບຜິດຊອບຕໍ່ສັງຄົມເປັນພາກສ່ວນໜຶ່ງທີ່ສຳຄັນໃນຍຸດທະສາດການພັດທະນາ. ທະນາຄານ ໄດ້ ແລະ ກຳລັງຈັດຕັ້ງປະຕິບັດຫຼາຍໂຄງການວຽກງານສະຫວັດດີການສັງຄົມທີ່ມີຄວາມໝາຍ ເຊັ່ນ: ການຊ່ວຍເຫຼືອປ້ອງກັນໄພທຳມະຊາດ, ການສະໜັບສະໜຸນການກໍ່ສ້າງໂຮງຮຽນ, ການເບິ່ງແຍງເດັກນ້ອຍຜູ້ດ້ອຍໂອກາດ, ການບໍລິຈາກເລືອດ... ບັນດາກິດຈະກຳດັ່ງກ່າວ ໄດ້ສະແດງໃຫ້ເຫັນເຖິງຈິດໃຈແຫ່ງການແບ່ງປັນ ແລະ ຄວາມຮັບຜິດຊອບຕໍ່ຊຸມຊົນ ທີ່ LaoVietBank ຍາມໃດກໍເຄົາລົບ ແລະ ຮັກສາໄວ້ເປັນຢ່າງດີ.

ຕາງໜ້າໃຫ້ແກ່ສະພາບໍລິຫານ ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ ຈຳກັດ, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຢ່າງຈິງໃຈມາຍັງ ຄະນະຜູ້ບໍລິຫານ ແລະ ພະນັກງານທັງໝົດ ເກືອບ 450 ທ່ານ [v1] ທີ່ພວມອຸທິດເຫື່ອແຮງຢ່າງສຸດຄວາມສາມາດຢູ່ທີ່ LaoVietBank. ພິເສດ, ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ມາຍັງ ທ່ານລູກຄ້າ, ບັນດານັກລົງທຶນ ແລະ ຄູ່ຮ່ວມມື ທີ່ຍາມໃດກໍໃຫ້ຄວາມໄວ້ເນື້ອເຊື່ອໃຈ ແລະ ຄຽງບ່າຄຽງໄຫຼກັບ LaoVietBank ຕະຫຼອດໄລຍະເວລາທີ່ຜ່ານມາ, ແລະ ຫວັງຢ່າງຍິ່ງວ່າ ຈະໄດ້ສືບຕໍ່ຮ່ວມມື ແລະ ກ້າວເດີນໄປພ້ອມກັບ ທ່ານລູກຄ້າ, ນັກລົງທຶນ ແລະ ຄູ່ຮ່ວມມື ໃນຕໍ່ໜ້າ ເພື່ອພ້ອມກັນສ້າງສາບັນດາຄຸນຄ່າທີ່ຍືນຍົງ, ມຸ່ງໜ້າສູ່ອະນາຄົດທີ່ວັດທະນາຖາວອນ ແລະ ຮຸ່ງເຮືองສີວິໄລ!

ພວກຂ້າພະເຈົ້າ ຂໍໃຫ້ຄຳໝັ້ນສັນຍາວ່າ ຈະສືບຕໍ່ເສີມຂະຫຍາຍມູນເຊື້ອ, ຍຶດໝັ້ນໃນວິໄສທັດຍຸດທະສາດ, ສ້າງສາ LaoVietBank ໃຫ້ກາຍເປັນທະນາຄານທີ່ທັນສະໄໝ, ມີປະສິດທິຜົນ, ເປັນມິດ ແລະ ເປັນຂົວຕໍ່ທາງເສດຖະກິດທີ່ໜ້າເຊື່ອຖື ລະຫວ່າງ ສອງຊາດ ລາວ - ຫວຽດນາມ.

ຂໍອວຍພອນໄຊອັນປະເສີດມາຍັງທຸກໆທ່ານ ຈົ່ງມີແຕ່ພະລານາໄມທີ່ສົມບຸນ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດທຸກປະການ!

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ!

ຕາງໜ້າສະພາບໍລິຫານ

ປະທານ

ລາງວັນທີ່ພົ້ນເດັ່ນ

LaoVietBank ໄດ້ຮັບການຄັດເລືອກຮັບລາງວັນ ຈາກວາລະສານສາກົນ
Global Banking & Finance Review ®

ທະນາຄານດີເດັ່ນ ດ້ານບໍລິການລາຍຍ່ອຍ ຢູ່ລາວ ປີ 2025

ລາງວັນ THE NEXT 100 GLOBAL AWARDS 2025 - ດ້ານ ທະນາຄານບໍລິການລາຍຍ່ອຍ





ພາບລວມຂອງ LAOVIETBANK 2025

ຂໍ້ມູນໂດຍຫຍໍ້ກ່ຽວກັບ LaoVietBank 14

ໄລຍະຂອງການສ້າງຕັ້ງ ແລະ ພັດທະນາ 16

ພາລະກິດ ແລະ ວິໄສທັດ 18

ບັນດາເປົ້າໝາຍທຸລະກິດຕົ້ນຕໍ 19

ຜະລິດຕະພັນຫຼັກ ແລະ ພິ້ນເດັ່ນ 21

ໂຄງສ້າງຜູ້ຖືຮຸ້ນ ແລະ ກົງຈັກການຄຸ້ມຄອງ 24

ສະພາບໍລິຫານ 26

ຄະນະອຳນວຍການ 30

02



ຂໍ້ມູນໂດຍຫຍໍ້ກ່ຽວກັບ LaoVietBank

ຊື່ພາສາລາວ: ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ ຈຳກັດ

ຊື່ພາສາຫວຽດນາມ: Ngân hàng Liên doanh Lào - Việt

ຊື່ພາສາອັງກິດ: Lao - Viet Bank Co., Ltd

ຊື່ຫຍໍ້: LAOVIETBANK / LaoVietBank / LVB / ທລວ

ວັນສ້າງຕັ້ງ: 22/06/1999

ໃບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ
ສະບັບເລກທີ 02/ທຫລ ໂດຍ ທະນາຄານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ອອກ
ຄັ້ງວັນທີ 11/01/2021

ໃບທະບຽນວິສາຫະກິດສະບັບປັບປຸງຄັ້ງລ່າສຸດ
ເລກທີ 1891/ຈທວ ໂດຍ ກະຊວງ ອຸດສາຫະກຳ ແລະ ການຄ້າ ສປປ ລາວ ເປັນຜູ້ອອກຄັ້ງວັນທີ 24/11/2020

ທຶນຈົດທະບຽນ:
791,357,560,000

ເປັນຕົວໜັງສື:
ເຈັດຮ້ອຍເກົ້າສິບເອັດ ສາມຮ້ອຍຫ້າສິບເຈັດລ້ານ ຫ້າແສນຫົກສິບພັນກີບ.

ທີ່ຢູ່ສຳນັກງານໃຫຍ່:
ເລກທີ 44 ຖະໜົນລ້ານຊ້າງ, ບ້ານຫັດສະດີ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ

ໂທ: (856) 21 251418 ຫຼື Hotline 1440
ແຟັກ: (856) 21 212197

Website:
www.laovietbank.com.la

Facebook, Youtube, Tiktok:
LaoVietBank

ໄລຍະຂອງການສ້າງຕັ້ງ ແລະ ການພັດທະນາ

ປີ 1999:

ຕອບສະໜອງການຮຽກຮ້ອງຍົກລະດັບການພົວພັນດ້ານການຄ້າ ແລະ ການລົງທຶນໃຫ້ເໝາະສົມກັບສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ຄວາມສາມັກຄີແບບພິເສດລາວ - ຫວຽດນາມ, ລັດຖະບານຫວຽດນາມໄດ້ເລືອກ ທະນາຄານ ລົງທຶນ ແລະ ພັດທະນາຫວຽດນາມ (BIDV) ແລະ ລັດຖະບານລາວໄດ້ເລືອກ ເອົາທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ເປັນ 02 ທະນາຄານລັດວິສາຫະກິດຊັ້ນນຳຂອງສອງປະເທດເພື່ອດຳເນີນ ການຮ່ວມທຸລະກິດສົມທົບທຶນ ສ້າງຕັ້ງທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ ດ້ວຍຍອດເງິນຈົດທະບຽນເບື້ອງຕົ້ນ 10 ລ້ານ ໂດລາສະຫະລັດ. ວັນທີ 22 ມິຖຸນາ 1999 ທີ່ນະຄອນຫລວງ ວຽງຈັນ, ສປປ ລາວ. ທະນາຄານຮ່ວມທຸລະກິດ ລາວ -ຫວຽດ ຈຳກັດ ໄດ້ເປີດການດຳເນີນງານຢ່າງເປັນທາງການ ໂດຍການເຂົ້າ ຮ່ວມຂອງຜູ້ນຳລັດຖະບານຂອງສອງປະເທດ. ເພື່ອປະຕິບັດໜ້າທີ່ ການເມືອງຕາມການມອບໝາຍຂອງພັກ ແລະ ລັດຖະບານຂອງ ສອງປະເທດ, ເປັນຂົວຕໍ່ການຊຳລະສະສາງ, ທັນມາສະໜອງການ ບໍລິການທະນາຄານທີ່ທັນສະໄໝລະຫວ່າງສອງສະກຸນເງິນ ດົ່ງ/ກີບ ແລະ ການປ່ອຍເງິນໃຫ້ແກ່ໂຄງການຮ່ວມມືລະຫວ່າງສອງປະເທດ. ນອກຈາກນັ້ນ, LaoVietBank ຍັງໃຫ້ບໍລິການທະນາຄານທີ່ ທັນສະໄໝໃຫ້ແກ່ລູກຄ້າໃນລາວ.

ປີ 2004:

ເພີ່ມທຶນຈົດທະບຽນຂຶ້ນເປັນ 15 ລ້ານໂດລາ ສຫລ

ປີ 2012:


ເພີ່ມທຶນຈົດທະບຽນຂຶ້ນເປັນ 37,5 ລ້ານໂດລາ ສຫລ ແລະ ຂະຫຍາຍສຳເລັດ ລະບົບທະນາຄານເອ ເລັກໂຕນິກ Corebanking ທີ່ທັນສະໄໝ, ເປັນ ພື້ນຖານຍົກສູງການຄຸ້ມຄອງບໍລິຫານ ແລະ ພັດທະນາ ຜະລິດຕະພັນບໍລິການທີ່ນຳໃຊ້ເຕັກໂນໂລຊີທີ່ທັນສະ ໄໝ.

ປີ 2013:

ເພີ່ມທຶນຈົດທະບຽນຂຶ້ນເປັນ 70 ລ້ານໂດລາ ສຫລ.

ປີ 2015:

ເພີ່ມທຶນຈົດທະບຽນຂຶ້ນເປັນ 100 ລ້ານໂດລາ ສຫລ.



ປີ 2020:

ການເຄື່ອນໄຫວ ດຳເນີນທຸລະກິດຂອງ LaoVietBank ສາມາດຍັນລຸໄດ້ຫາ ມາກຜົນທີ່ຫມັ້ນຄົງ, ຂະຫນາດຂອງ ການເຄື່ອນໄຫວ ແມ່ນຍັງສືບຕໍ່ຈັດຢູ່ ໃນ ອັນດັບ 1 ໃນ 3 ທະນາຄານທຸລະກິດ ຂະຫນາດໃຫຍ່ທີ່ສຸດຢູ່ລາວ ແລະ ເປັນ ທະນາຄານນຳຫນ້າ ບັນດາທະນາຄານ ທຸລະກິດຫວຽດນາມ ທີ່ກຳລັງເຄື່ອນໄຫວ ຢູ່ລາວ.

ປີ 2022:

ດ້ວຍການເອົາໃຈໃສ່ ແລະ ການອະນຸມັດຂອງ ສອງທະນາຄານແມ່ (BIDV ແລະBCEL). LaoVietBank ໄດ້ສຳເລັດຈັດລະບຽບໂຄງຮ່າງ ການຈັດຕັ້ງຄືນໃໝ່, ໄດ້ສຳເລັດການແຕ່ງຕັ້ງ ສະມາຊິກສາພາບໍລິຫານເອກກະລາດເພີ່ມ ແລະ ໄດ້ສ້າງຕັ້ງ ແລະ ເຄື່ອນໄຫວໜ່ວຍງານ Call Center ຢ່າງເປັນທາງການ.




ປີ 2023:

LaoVietBank ວາງທິດທາງການພັດທະນາຂອງຕົນຢ່າງຈະແຈ້ງ ເພື່ອ ເພີ່ມປະສິດທິພາບແຫຼ່ງຊັບພະຍາກອນມະນຸດ, ປັບປຸງສະຖາບັນ, ເພີ່ມ ທະວີຄວາມສາມາດໃນການບໍລິຫານ ແລະ ການເງິນ, ຈັດສັນ ແລະ ຈັດຕັ້ງ ຊຸດອົບຮົມຫຼາຍດ້ານ ເພື່ອປັບປຸງຄວາມສາມາດໃນການນຳພາ ແລະ ພະນັກງານ.

ປີ 2025:

LaoVietBank ເພີ່ມທະວີສິ່ງເສີມການປ່ຽນ ແປງຖານລູກຄ້າມຸ່ງໜ້າປັບປຸງລະບົບທະນາຄານ ດີຈີຕ້ອນໃຫ້ທັນສະໄໝຢ່າງຕໍ່ເນື່ອງ ໂດຍການ ຍົກລະດັບ LVB DigiBank ຕິດຕັ້ງລະບົບ eKYC ແລະເຊື່ອມໂຍງການຊຳລະເງິນຜ່ານ QR ລາວ - ຫວຽດ ພ້ອມກັນນັ້ນ ກໍ່ໃຫ້ຄວາມ ສຳຄັນກັບການຈັດການ ແລະປັບຄືນໂຄງສ້າງໜີ້ ທໍ່ລະບົບ, ຍືນຢັນບົດບາດໃນການເປັນຂົວຕໍ່ ເສດຖະກິດລະຫວ່າງລາວ ແລະ ຫວຽດນາມ.



ພາລະກິດ, ວິໄສທັດ:

ພາລະກິດ: ເຊື່ອມໂຍງສອງພື້ນຖານເສດຖະກິດ, ການຄ້າ ລາວ - ຫວຽດນາມ: ກາຍເປັນທະນາຄານ ນຳໜ້າ ໃນການສະໜອງບັນດາວິທີການ ດ້ານການທະ ນາຄານ, ການເງິນ, ໃຫ້ບັນດານິຕິບຸກຄົນທີ່ມີສາຍພົວ ພັນດ້ານການຄ້າ, ການລົງທຶນລະຫວ່າງຫວຽດນາມ - ລາວ, ລາວ - ຫວຽດນາມ.

ວິໄສທັດ: ປະກອບສ່ວນສຳຄັນເຂົ້າໃນພາລະກິດ ພັດທະນາເສດຖະກິດ-ສັງຄົມຂອງຫວຽດນາມ ແລະ ລາວ, ເຮັດໃຫ້ LaoVietBank ກາຍເປັນສະຖາບັນ ການເງິນໜຶ່ງທີ່ເຂັ້ມແຂງ

ຄຸນຄ່າຫຼັກ:

ລູກຄ້າເປັນສູນກາງ, ເປັນເປົ້າໝາຍ ເຄື່ອນໄຫວທຸລະກິດ;

ການຄຸ້ມຄອງຄວາມສ່ຽງ ແມ່ນພື້ນ ຖານຂອງການຄຸ້ມຄອງບໍລິຫານໃນ ທຸ້ວລະບົບ.

ບຸກຄະລາກອນ ແລະ ເຕັກໂນໂລຊີ ເປັນປັດໃຈຈັດສົ່ນຄວາມສຳເລັດ.

ຜົນການເຄື່ອນໄຫວທຸລະກິດ ຮອດວັນທີ 31/12/2025

- **ດ້ານຍອດຊັບສິນ:** ຍອດຊັບສິນຮອດວັນທີ 31/12/2025 ບັນລຸກວ່າ 22.3 ພັນຕື້ກີບ, ບັນລຸ 100% ຂອງແຜນການປີ 2025, ເພີ່ມຂຶ້ນ 7% ທຽບໃສ່ຕົ້ນປີ.
- **ດ້ານການລະດົມທຶນ:** ຮອດວັນທີ 31/12/2025 ຍອດລະດົມທຶນທັງໝົດ ບັນລຸ ~20.5 ພັນຕື້ກີບ, ເພີ່ມຂຶ້ນ 1,968 ພັນຕື້ກີບ (ທຽບເທົ່າ 11%) ທຽບໃສ່ປີ 2024,ໃນນັ້ນ:

+ ລະດົມທຶນ ບຸກຄົນ ແລະ ອົງການຈັດຕັ້ງ ບັນລຸ 15.3 ພັນຕື້ກີບ, ບັນລຸ 103% ຂອງແຜນການປີ 2025, ເພີ່ມຂຶ້ນ 6% ທຽບເທົ່າ 802 ຕື້ກີບ ທຽບໃສ່ປີ 2024. ໃນນັ້ນ, ລະດົມທຶນ ບຸກຄົນ ບັນລຸ 9.1 ພັນຕື້ກີບ, ບັນລຸ 99% ຂອງແຜນການປີ 2025, ເພີ່ມຂຶ້ນ 11% ທຽບເທົ່າ 883 ຕື້ກີບ ທຽບໃສ່ປີ 2024. ລະດົມທຶນບຸກຄົນ ແລະ ອົງການຈັດຕັ້ງ ຫຼຸດລົງເລັກນ້ອຍເມື່ອທຽບໃສ່ປີ 2024 ຍ້ອນລະດົມທຶນສະກຸນເງິນໂດລາ ຫຼຸດລົງ 13% ແລະ ສະກຸນເງິນບາດ ຫຼຸດລົງ 21% ທຽບໃສ່ທ້າຍປີ 2024 ເຖິງວ່າລະດົມທຶນສະກຸນເງິນກີບເພີ່ມຂຶ້ນກວ່າ 38%, ຄວາມກົດດັນດ້ານການແຂ່ງຂັນກັບ ທະນາຄານອື່ນແມ່ນຂ້ອນຂ້າງຫຼາຍ, ນອກຈາກນັ້ນ ຍ້ອນຜົນກະທົບຈາກສະພາບເສດຖະກິດໂລກ, ເມື່ອບໍ່ດົນມານີ້, ລູກຄ້າບຸກຄົນລາຍໃຫຍ່ບາງຄົນໄດ້ ຖອນເງິນຝາກຂອງເຂົາເຈົ້າເພື່ອລົງທຶນໃນຄຳ. ສະນັ້ນ, ວຽກງານລະດົມທຶນ ບຸກຄົນ ແລະ ອົງການຈັດຕັ້ງຂອງ LaoVietBank ແມ່ນຂ້ອນຂ້າງກົດດັນ. ໂຄງສ້າງການລະດົມທຶນ ບຸກຄົນ ແລະ ອົງການຈັດຕັ້ງ ແຕ່ລະສະກຸນເງິນມີລາຍລະອຽດດັ່ງນີ້:

ລະດົມທຶນຕາມແຕ່ລະສະກຸນເງິນ

314 ລ້ານ
USD
ປີ 2024. 361 ລ້ານ
+87%

7,199 ຕື້
LAK
ປີ 2024. 5,221 ຕື້
+138%

1,888 ລ້ານ
THB
ປີ 2024. 2,404 ລ້ານ
+79%

ລະດົມທຶນຕາມກຸ່ມລູກຄ້າ (ທຽບເທົ່າ ກີບ)

ອົງການຈັດຕັ້ງ	ປີ 2024. 6,281 ຕື້ LAK	+99%	**6,200** ຕື້ LAK
ບຸກຄົນ	ປີ 2024. 8,219 ຕື້ LAK	+111%	**9,102** ຕື້ LAK

+ ການລະດົມທຶນລະຫວ່າງທະນາຄານ: ການລະດົມທຶນລະຫວ່າງທະນາຄານປະສົບກັບຄວາມຫຍຸ້ງຍາກຫຼາຍດ້ານ, ອັດຕາດອກເບ້ຍພື້ນຖານຍັງສູງ ເຖິງວ່າ ທະນາຄານແຫ່ງ ສປປ ລາວ ຈະມີການປັບຫຼຸດອັດຕາດອກເບ້ຍ ຈາກ 10.5% ໃນທ້າຍປີ 2024 ເປັນ 8.5% ໃນທ້າຍປີ 2025. ບັນດາທະນາຄານ ທຸລະກິດໃນລາວລ້ວນແຕ່ປະເຊີນກັບຄວາມກົດດັນດ້ານສະພາບຄ່ອງ. LaoVietBank ໄດ້ມີຄວາມເອົາໃຈໃສ່ໃນວຽກງານການລະດົມທຶນຢ່າງຍືດ ຍຸ່ນລະຫວ່າງທະນາຄານເພື່ອຮັບປະກັນສະພາບຄ່ອງ ແລະ ສອດຄ່ອງກັບການເຕີບໂຕຂອງສິນເຊື່ອ. ການລະດົມທຶນລະຫວ່າງທະນາຄານ ຮອດວັນທີ 31/12/2025 ບັນລຸ ~4.9 ພັນຕື້ກີບ, ເພີ່ມຂຶ້ນ 20% ເມື່ອທຽບກັບຕົ້ນປີ. ໃນນັ້ນ, ມີການເພີ່ມຂຶ້ນຂອງເງິນຝາກຈາກສະຖາບັນການເງິນພາຍໃນປະເທດ 267.5 ຕື້ກີບ ແລະ ການເພີ່ມຂຶ້ນຂອງເງິນຝາກຈາກສະຖາບັນການເງິນຕ່າງປະເທດ 30.5 ລ້ານໂດລາ (ປະມານ 530 ຕື້ກີບທຽບເທົ່າ), ລາຍລະອຽດດັ່ງນີ້:

ຜົນການເຄື່ອນໄຫວທຸລະກິດ ຮອດວັນທີ 31/12/2025 (ຕໍ່)

ໜ່ວຍ: ລ້ານກີບ

No.	ຕາມໄລຍະ	31/12/2024	ປະຕິບັດຮອດ 31/12/2025		
			ມູນຄ່າ	ຂະຫຍາຍຕົວທຽບໃສ່ 31/12/2024	
				ມູນຄ່າ	%
I	**ຕາມໄລຍະຝາກ**				
1	**ເງິນຝາກສະຖາບັນການເງິນພາຍໃນປະເທດ**	**2,918,010**	**3,185,531**	**267,521**	**109%**
1.1	ເງິນຝາກບໍ່ມີກຳນົດ	1,438,718	987,718	-451,000	69%
1.2	ເງິນຝາກມີກຳນົດ	1,479,292	2,197,813	718,521	149%
2	**ເງິນຝາກສະຖາບັນການເງິນສາກົນ**	**1,144,765**	**1,674,650**	**529,885**	**146%**
2.1	ເງິນຝາກບໍ່ມີກຳນົດ	70,565	100,405	29,840	142%
2.2	ເງິນຝາກມີກຳນົດ	1,074,200	1,574,245	500,045	147%
	+ ເງິນຝາກ BIDV	1,074,200	1,574,245	500,045	147%
	+ ເງິນກູ້ CUB	0	-	0	0%
	ລວມເງິນຝາກສະຖາບັນການເງິນ	**4,062,775**	**4,860,181**	**797,406**	**120%**
II	**ຕາມສະກຸນເງິນ**				
1	**ເງິນຝາກສະຖາບັນການເງິນພາຍໃນປະເທດ ທຽບເທົ່າ LAK**	**2,918,010**	**3,185,531**	**-798,625**	**73%**
-	ລ້ານ LAK	1,200,001	850,001	-650,000	46%
-	ພັນ USD	78,618	108,254	-7,151	91%
-	ພັນ THB	46,535	1,535	0	100%
-	ພັນ VND	3.7	3.71	0	100%
2	**ເງິນຝາກສະຖາບັນການເງິນສາກົນ ທຽບເທົ່າ LAK**	**1,144,765**	**1,674,650**	**-79,365**	**93%**
-	ລ້ານ LAK	24,716	17,419	51,771	309%
-	ພັນ USD	50,100	73,100	-5,000	90%
-	ພັນ THB	0	-	0	0%
-	ພັນ VND	52,050	100,222	-29,905	43%
	ລວມເງິນຝາກສະຖາບັນການເງິນ ທຽບເທົ່າ LAK	**4,062,775**	**4,860,181**	**797,406**	**120%**

ຜະລິດຕະພັນຫຼັກ ແລະ ພື້ນເດັ່ນ



ເຕັກໂນໂລຊີທະນາຄານດິຈິຕ້ອນ LVB DigiBank

ປີ 2025 LaoVietBank ສືບຕໍ່ອັບເດດຄຸນລັກສະນະຄຸນລັກສະນະ eKYC ເທິງ LVB DigiBank ລວມມີ: ລົງທະບຽນ LVB DigiBank ອອນລາຍ, ປ່ຽນລະຫັດອອນລາຍ ແລະ ປ່ຽນເບີໂທລະສັບລົງທະບຽນ LVB DigiBank ອອນລາຍ ແລະ ຜັນຂະຫຍາຍສະແກນຄິວອາລະຫວ່າງທະນາຄານຜ່ານທາງ LAPNet ເທິງ LVB DigiBank, ສ້າງຄວາມສະດວກໃຫ້ແກ່ລູກຄ້າໃນການຊຳລະຄ່າສິນຄ້າ ແລະ ຄ່າບໍລິການຕ່າງໆ. ຜະລິດຕະພັນໄດ້ຮັບການອັບເດດ, ພັດທະນາ ຮອບດ້ານ ແລະ ສົມບຸນແບບກ່ອນ LVB DigiBank ເວີຊັນກ່ອນໜ້ານີ້.

LaoVietBank ຍັງນຳໃຊ້ eKYC ໃນການກວດສອບຄວາມຖືກຕ້ອງ ແລະ ການລະບຸຕົວຕົນ ຂອງ ລູກຄ້າ ໃນການລົງທະບຽນ ແລະ ໃຊ້ບໍລິການ LVB DigiBank. ນຳເອົາຄວາມສະດວກສະບາຍທີ່ສຸດໃຫ້ແກ່ລູກຄ້າໂດຍການລວມເອົາ LVB DigiBank ກັບຊ່ອງທາງການເຮັດທຸລະກຳການຄ້າອີເລັກໂຕຣນິກ, ເຄືອຂ່າຍສັງຄົມອອນລາຍ, ຜູ້ສະໜອງການໃຫ້ບໍລິການ; ປະຕິບັດການປັບໂຄງສ້າງ, ການຈັດລຽງຄຸນລັກສະນະໃຫມ່, ຍົກລະດັບຄືນບັນດາຄຸນລັກສະນະ, ຍົກລະດັບແອັບພິເຄຊັ້ນ LVB DigiBank ເພື່ອນຳເອົາປະສົບການໃຫມ່ໃຫ້ກັບລູກຄ້າ, ມີຜົນປະໂຫຍດອັນດີໃຫ້ກັບສຸຂະພາບຂອງຜູ້ຊົມໃຊ້, ປະຢັດແຍັດ ເພື່ອຮັກສາອາຍຸການໃຊ້ງານຂອງອຸປະກອນລູກຄ້າ; ຂະຫຍາຍການເຊື່ອມຕໍ່ການຊຳລະ LVB QR ກັບຄູ່ຮ່ວມທຸລະກິດຢູ່ຕ່າງປະເທດ; ປະສານງານວຽກງານການຂາຍປະກັນໄພ, ກັບບັນດາຫົວໜ່ວຍຂາຍສິນຄ້າອອນລາຍຢູ່ລາວ; ເກັບຄ່າທຳນຽມບັນດາໂຮງຮຽນ, ບໍລິສັດເຊົ່າສິນເຊື່ອ, ພາສີອາກອນ, ບັນດາຄູ່ຮ່ວມທຸລະກິດທີ່ເຮັດທຸລະກິດກ່ຽວກັບກະເປົ໋າເງິນ; ປະຕິບັດການຍົກລະດັບບັນດາຄຸນລັກສະນະຂອງ

LVB DigiBank ເພື່ອແໜ່ໃສ່ສ້າງຄວາມໜ້າເຊື່ອຖືໃຫ້ກັບລູກຄ້າໃນສະພາບຂອງການແຂ່ງຂັນຢ່າງດຸເດືອດທາງດ້ານຄຸນະພາບ ແລະ ຄວາມຫລາກຫລາຍທາງດ້ານການບໍລິການທະນາຄານ.

ກັບບັນດາຈຸດດີທີ່ພົ້ນເດັ່ນ ແລະ ບັນດາຄຸນລັກສະນະອັນດີໃນການນຳໃຊ້, LVB DigiBank ໄດ້ມີການກຳນົດວ່າເປັນຜະລິດຕະພັນເຕັກໂນໂລຢີທີ່ມີທ່າແຮງ ຂອງ LaoVietBank ບົນເສັ້ນທາງຂອງການຢັ້ງຢືນເຄື່ອງໝາຍການຄ້າຂອງ LaoVietBank ວ່າເປັນທະນາຄານທີ່ທັນສະໄຫມທີ່ສຸດຢູ່ພົ້ນແຜ່ນດິນລາວ.

ຜະລິດຕະພັນຫຼັກ ແລະ ພື້ນເດັ່ນ (ຕໍ່)





ບັນດາຜະລິດຕະພັນທີ່ພົ້ນເດັ່ນໃນປີ 2025 ຂອງພະແນກບັດ:

- ນຳໃຊ້ລະບົບບັດໃໝ່ເພື່ອອອກ ແລະ ຍອມຮັບການຊຳລະບັດສາກົນ.

- ຂັນຂະຫຍາຍອອກບັດ VISA ສາກົນ.

- ກຳລັງຢູ່ໃນໄລຍະການຈັດຕັ້ງປະຕິບັດໂຄງການບໍລິການຮັບຊຳລະບັດຜ່ານເຄື່ອງ POS ຜ່ານລະບົບຂອງ LVB.

- ກຳລັງຢູ່ໃນໄລຍະການຈັດຕັ້ງປະຕິບັດໂຄງການອອກບັດສາກົນ UnionPay.

ບັນດານະໂຍບາຍສິນເຊື່ອທີ່ພົ້ນເດັ່ນຂອງ LaoVietBank

ນະໂຍບາຍເງິນກູ້ບຸລິມະສິດເພື່ອສົ່ງເສີມການຜະລິດ, ທຸລະກິດ ແລະ ການຊົມໃຊ້:

ນັບແຕ່ວັນທີ 31 ກໍລະກົດ 2023, LaoVietBank ໄດ້ຂັນຂະຫຍາຍນະໂຍບາຍສິນເຊື່ອອັດຕາດອກເບ້ຍພິເສດມູນຄ່າ 200 ຕື້ກີບ ປີ 2023 ຕໍ່ກັບລູກຄ້າບຸກຄົນ. ດ້ວຍອັດຕາດອກເບ້ຍພຽງແຕ່ 7,5% (ປີ 2022 ອັດຕາດອກເບ້ຍຕ່ຳສຸດຢູ່ທີ່ 7%), ຖືວ່າເປັນອັດຕາດອກເບ້ຍຕ່ຳສຸດໃນປັດຈຸບັນສຳລັບຜະລິດຕະພັນເງິນກູ້ຊົມໃຊ້ ແລະ ການຄ້າ.

ເປົ້າໝາຍຂອງນະໂຍບາຍສິນເຊື່ອແມ່ນເພື່ອແບ່ງປັນຄວາມຫຍຸ້ງຍາກກັບວິສາຫະກິດ ແລະ ປະຊາຊົນລາວ, ໂດຍສະເພາະໃນສະພາບເສດຖະກິດຫຍຸ້ງຍາກ, ສ້າງຕົ້ນທຶນຕ່ຳ ເພື່ອສົ່ງເສີມການເຄື່ອນໄຫວທຸລະກິດ ແລະ ການຜະລິດສົມ ຄ້າໃນລາວ ຕາມການຊີ້ນຳຂອງລັດຖະບານລາວ.

ຕາມນັ້ນແລ້ວ, ບັນດາວິສາຫະກິດ ແລະ ບຸກຄົນທີ່ດຳເນີນທຸລະກິດການຜະລິດ ຈະໄດ້ຮັບການໜສະໜັບສະໜຸນທຶນໝຸນວຽນຈາກ LaoVietBank ດ້ວຍອັດຕາດອກເບ້ຍທີ່ເໝາະ ສົມ. ດ້ວຍໄລຍະເວລາກູ້ຢືມແຕ່ 4 ເດືອນ (ປີ 2023 ແຕ່ 4 ເດືອນລົງມາ) ລົງມາ ອັດຕາດອກເບ້ຍເງິນກູ້ຢູ່ໃນລະດັບພຽງແຕ່ 6,5% (ປີ 2022 ແມ່ນ 6,5%); ແຕ່ໄລຍະ 4 - 6 ເດືອນ ອັດຕາດອກເບ້ຍແມ່ນ 6,5% / ປີ (ປີ 2022 ແຕ່ 4 - 6 ເດືອນ, ອັດຕາດອກເບ້ຍແມ່ນ 6,5%) ແລະ ຕ່ຳກັບບັນດາໄລຍະທີ່ສູງກວ່າແຕ່ 6 - 12 ເດືອນ (ປີ 2022, ຈາກ 6 - 9 ເດືອນ ອັດຕາດອກເບ້ຍ 8% ແລະ 9 - 12 ເດືອນ ອັດຕາດອກເບ້ຍ 8,25%), ລູກຄ້າໄດ້ດອກເບ້ຍນະໂຍບາຍຢູ່ລະດັບ 8%-8,25%/ປີ.

ເປົ້າໝາຍນຳໃຊ້ຂອງນະໂຍບາຍສິນເຊື່ອນີ້ແມ່ນລູກຄ້າໃໝ່ຂອງ LaoVietBank, ລວມທັງລູກຄ້າບຸກຄົນ ແລະ ອົງການຈັດຕັ້ງ ທີ່ມີສາຍພົວພັນດ້ານສິນເຊື່ອກັບ LaoVietBank. ກໍລະນີທີ່ລູກຄ້າກັບມາເຮັດທຸລະກຳຄືນກັບ LaoVietBank ຈະຕ້ອງບໍ່ມີໜີ້ເສຍ, ໜີ້ນອກໃບສະຫຼຸບຊັບສົມບັດຢູ່ LaoVietBank ຫຼື ບັນດາສະຖາບັນສິນເຊື່ອ ອື່ນໆພາຍໃນ 2 ປີຜ່ານມາ.

ຄຽງຄູ່ກັບນະໂຍບາຍເງິນກູ້ເພື່ອສະໜັບສະໜຸນການຜະລິດ ແລະ ທຸລະກິດແລ້ວ, LaoVietBank ຍັງນຳໃຊ້ນະ ໂຍບາຍສິນເຊື່ອຊົມໃຊ້ດ້ວຍອັດຕາດອກເບ້ຍແຕ່ 7,5%, ໄລຍະກູ້ຄ່ອງຕົວ, ແທດເໝາະກັບຄວາມຕ້ອງການດ້ານການເງິນຂອງລູກຄ້າແຕ່ລະຄົນ. ນີ້ເປັນຄວາມເອົາໃຈໃສ່ໜຶ່ງຂອງ LaoVietBank ເພື່ອແບ່ງປັນຄວາມຫຍຸ້ງຍາກ, ຊຸກຍູ້ໃຫ້ປະຊາຊົນນຳໃຊ້ບັນດາບໍລິການດ້ານການເງິນ ການທະນາຄານ ເພື່ອສົ່ງເສີມການບໍລິໂພກ. ລູກຄ້າບຸກຄົນໄດ້ຮັບການຕອບສະໜອງຄວາມຕ້ອງການທາງດ້ານການເງິນໃນການຊື້ລົດໃຫຍ່, ຊື້ເຮືອນ, ຊື້ດິນ, ສ້າງ ແລະ ສ້ອມແປງເຮືອນໄດ້ຢ່າງງ່າຍດາຍ, ວ່ອງໄວ.


ນອກຈາກບັນດານະໂຍບາຍສິນເຊື່ອການຄ້າ, LaoVietBank ຍັງ ຕັ້ງໜ້າຂັນຂະຫຍາຍບັນດານະໂຍບາຍສິນເຊື່ອເພື່ອຕອບສະໜອງ ນະໂຍບາຍຂອງລັດຖະບານລາວ ໃນການຊຸກຍູ້ເສດຖະກິດຜ່ານ ຜ່າຄວາມຫຍຸ້ງຍາກຈາກໂລກລະບາດ Covid-19. ບັນດາ ນະໂຍບາຍສິນເຊື່ອປະກອບມີ: ສິນເຊື່ອໃຫ້ລູກຄ້າ SMEs ອັດຕາ ດອກເບ້ຍ 3%/ປີ ຕາມນະໂຍບາຍຂອງລັດຖະບານ ແລະ ສິນເຊື່ອ ໃຫ້ລູກຄ້າ SMEs ອັດຕາດອກເບ້ຍ 6%/ປີ ໂດຍໃຊ້ທຶນຂອງ ທະນາຄານໂລກ.

ໂຄງສ້າງຜູ້ຖືຮຸ້ນ ແລະ ກົງຈັກການຄຸ້ມຄອງ

ໂຄງສ້າງຜູ້ຖືຮຸ້ນ

ຮຸ້ນທັງໝົດຂອງ ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ ແມ່ນ ຮຸ້ນສາມັນ, ລວມຈຳນວນຮຸ້ນສາມັນທັງຫມົດຂອງທະນາຄານ ຮ່ວມ ທຸລະກິດ ລາວ - ຫວຽດ ຈຳກັດ ແມ່ນ 158,271,512 ຮຸ້ນ,

ຂຽນເປັນຕົວໜັງສື: ໜຶ່ງຮ້ອຍຫ້າສິບແປດລ້ານ ສອງແສນເຈັດສິບເອັດ ພັນຫ້າຮ້ອຍ ສິບສອງຮຸ້ນ.



ຂໍ້ມູນຜູ້ຖືຮຸ້ນ:

ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ ລວມມີ 03 ຂາຮຸ້ນ ຄືດັ່ງນີ້:

ຜູ້ຖືຮຸ້ນຜູ້ທີໜຶ່ງ (01)

ກ. ທະນາຄານ ການຄ້າຮຸ້ນສ່ວນລົງທຶນ ແລະ ພັດທະນາ ຫວຽດນາມ (BIDV)
ຂ. ສັນຊາດ: ຫວຽດນາມ
ຄ. ທີ່ຕັ້ງສຳນັກງານໃຫຍ່ BIDV: ເຮືອນເລກທີ 35, ຣ່າງໂອຍ, ເມືອງ ຮ່ອານກ໋ຽມ, ນະຄອນຫຼວງຮ່າໂນ້ຍ, ປະເທດ ສສ ຫວຽດນາມ
ງ. ທະນາຄານ ການຄ້າຮຸ້ນສ່ວນລົງທຶນ ແລະ ພັດທະນາ ຫວຽດນາມ ປະກອບ **65%** ຂອງທຶນຈົດທະບຽນ, ເທົ່າກັບ 514,382,414,000 ກີບ ຫຼື 102,876,483 ຮຸ້ນ.


ຜູ້ຖືຮຸ້ນຜູ້ທີສອງ (02)

ກ. ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL)
ຂ. ສັນຊາດ: ລາວ
ຄ. ທີ່ຕັ້ງສຳນັກງານໃຫຍ່ BCEL: ເຮືອນເລກທີ 01, ຖະໜົນປາງຄຳ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ.
ງ. ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ປະກອບ **25%** ຂອງທຶນຈົດທະບຽນ, ເທົ່າກັບ 197,839,390,000 ກີບ ຫຼື 39,567,878 ຮຸ້ນ.


ຜູ້ຖືຮຸ້ນຜູ້ທີສາມ (03)

ກ. ບໍລິສັດ ສຸກຮຸ່ງເຮືອງ ຈຳກັດ
ຂ. ສັນຊາດ: ລາວ
ຄ. ທີ່ຕັ້ງສຳນັກງານໃຫຍ່ ບໍລິສັດ ສຸກຮຸ່ງເຮືອງ ຈຳກັດ: ບ້ານຊ້າງຄູ້, ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ສປປ ລາວ
ງ. ບໍລິສັດ ສຸກຮຸ່ງເຮືອງ ຈຳກັດ ປະກອບ **10%** ຂອງທຶນຈົດທະບຽນ, ເທົ່າກັບ 79,135,756,000 ກີບ ຫຼື ເທົ່າກັບ 15,827,151 ຮຸ້ນ.

ກົງຈັກການຄຸ້ມຄອງ



ໂຄງຮ່າງການຈັດຕັ້ງສາຂາ



ສະພາບໍລິຫານ

ສະພາບໍລິຫານ (ສພບ) ແມ່ນອົງການ ປົກຄອງ LaoVietBank, ມີສິດອຳນາດເຕັມ ໃນນາມຂອງ LaoVietBank ເພື່ອຕົກລົງ, ປະຕິບັດບັນດາສິດ, ພັນທະຂອງ LaoVietBank ທີ່ບໍ່ຂຶ້ນກັບສິດອຳນາດຂອງ ກອງປະຊຸມ ຜູ້ຖືຮຸ້ນ. ສະພາບໍລິຫານຍັງມີໜ້າທີ່ກຳນົດ ແລະ ສ້າງບັນດາແຜນການ ແລະ ນະໂຍບາຍ ຄື: ນະໂຍບາຍການຄຸ້ມຄອງທຸລະກິດ, ຍຸດທະສາດ ທຸລະກິດ ແລະ ບັນດາແຜນການພັດທະນາລວມ ຂອງ LaoVietBank.



ທ່ານ ຮອ່າງ ຫວຽດ ຮຸ່ງ

ປະທານ

- ☐ ປີເກີດ: 1972
- ☐ ລະດັບການສຶກສາ: ປະລິນຍາໂທ ບໍລິຫານທຸລະກິດ
- ☐ ເລີ່ມເຮັດວຽກຢູ່ BCEL ແຕ່ປີ 1997
- ☐ ໄດ້ຮັບການແຕ່ງຕັ້ງເປັນຮອງຜູ້ອຳນວຍການໃຫຍ່ BIDV ແຕ່ເດືອນ 5 ປີ 2020
- ☐ ປັດຈຸບັນກຳລັງດຳລົງຕຳແໜ່ງ: ປະທານສະພາບໍລິຫານ LaoVietBank ແລະ ຮອງຜູ້ອຳນວຍການໃຫຍ່ BIDV
- ☐ ເຄີຍດຳລົງບັນດາຕຳແໜ່ງ: ຫົວໜ້າພະແນກບໍລິຫານບຸກຄະລາກອນ; ອຳນວຍການ BIDV ສາຂາເຫງະອານ



ທ່ານ ກົງສັກ ສຸພອນສີ

ຮອງປະທານ

- ☐ ປີເກີດ: 1977
- ☐ ລະດັບການສຶກສາ: ປະລິນຍາຕີ ການເງິນ - ການທະນາຄານ
- ☐ ເລີ່ມເຮັດວຽກຢູ່ BCEL ແຕ່ປີ 2000
- ☐ ໄດ້ຮັບການແຕ່ງຕັ້ງເປັນຮອງຜູ້ອຳນວຍການໃຫຍ່ BCEL ແຕ່ ເດືອນ 05 ປີ 2021
- ☐ ປັດຈຸບັນກຳລັງດຳລົງຕຳແໜ່ງຮອງຜູ້ອຳນວຍການໃຫຍ່ BCEL
- ☐ ເຄີຍດຳລົງບັນດາຕຳແໜ່ງ: ຫົວໜ້າຄະນະກວດກາ ກວດຊອບພາຍໃນ ສຳນັກງານໃຫຍ່ BCEL, ຫົວໜ້າ ສາຂາ ຫຼວງນ້ຳທາ



ທ່ານ ຫງວຽນ ດຶກ ວຸ່ ງ

ສະມາຊິກ

- ☐ ປີເກີດ: 1978
- ☐ ລະດັບການສຶກສາ: ປະລິນຍາໂທ ການເງິນ - ການທະນາຄານ
- ☐ ເລີ່ມເຮັດວຽກຢູ່ BIDV ແຕ່ປີ 2005
- ☐ ໄດ້ຮັບການແຕ່ງຕັ້ງເປັນຜູ້ອຳນວຍການໃຫຍ່ ທະນາຄານ ຮ່ວມ ທຸລະກິດ ລາວ -ຫວຽດ ແຕ່ເດືອນ 01 ປີ 2021
- ☐ ເຄີຍດຳລົງບັນດາຕຳແໜ່ງ: ຮອງຫົວໜ້າ ສູນອະນຸມັດສິນເຊື່ອ ແລະ ການລົງທຶນ BIDV ສຳນັກງານໃຫຍ່, ຮອງຫົວໜ້າສາຂາ BIDV ສາຂາ ດ່ົງດາ.

ສະພາບໍລິຫານ (ຕໍ່)



ທ່ານ ຫງວຽນ ເຕ ຖັງ

ສະມາຊິກ

- ປີເກີດ: 1984
- ລະດັບການສຶກສາ: ປະລິນຍາໂທ ບໍລິຫານທຸລະກິດ
- ເລີ່ມເຮັດວຽກຢູ່ທະນາຄານ BIDV ແຕ່ປີ 2006
- ໄດ້ຮັບການແຕ່ງຕັ້ງເປັນຮອງຜູ້ອຳນວຍການໃຫຍ່ ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ ແຕ່ເດືອນ 12 ປີ 2024
- ເຄີຍດຳລົງບັນດາຕຳແໜ່ງ: ອຳນວຍການຂັ້ນ 2, ສູນການປະເມີນ ແລະ ອະນຸມັດ; ຮອງຜູ້ອຳນວຍການ BIDV ສາຂາຮ້ອຍ



ທ່ານ ນາງ ເລ ເຮືອງ ຢາງ

ສະມາຊິກ

- ປີເກີດ: 1974
- ລະດັບການສຶກສາ: ປະລິນຍາໂທ ບໍລິຫານທຸລະກິດ
- ເລີ່ມເຮັດວຽກຢູ່ທະນາຄານ BIDV ແຕ່ປີ 1994
- ປັດຈຸບັນກຳລັງດຳລົງຕຳແໜ່ງ ຮອງຫົວໜ້າ ຄະນະຄຸ້ມຄອງການລົງທຶນ BIDV



ທ່ານ ສົມຊາຍ ຍົດສະຫວັນ

ສະມາຊິກ

- ປີເກີດ: 1982
- ລະດັບການສຶກສາ: ປະລິນຍາໂທ ບໍລິຫານທຸລະກິດ
- ເລີ່ມເຮັດວຽກຢູ່ BCEL ແຕ່ປີ 2006
- ໄດ້ຮັບການແຕ່ງຕັ້ງເປັນຮອງຜູ້ອຳນວຍການໃຫຍ່ ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ ແຕ່ເດືອນ 01 ປີ 2022
- ປັດຈຸບັນກຳລັງດຳລົງຕຳແໜ່ງ ສະມາຊິກສະພາບໍລິຫານ ຄວບ ຕຳແໜ່ງ ຮອງຜູ້ອຳນວຍການໃຫຍ່ ທະນາຄານ ຮ່ວມ ທຸລະກິດ ລາວ - ຫວຽດ ຈຳກັດ
- ເຄີຍດຳລົງບັນດາຕຳແໜ່ງ: ຫົວໜ້າ ຄະນະຄຸ້ມຄອງລູກຄ້າ ລາຍໃຫຍ່ ສຳນັກງານໃຫຍ່ BCEL, ຮອງຜູ້ອຳນວຍການ ໃຫຍ່ ບໍລິສັດ ປະກັນໄພ ລາວ -ຫວຽດ



ທ່ານ ບົວອັນ ສີມະລີວົງ

ສະມາຊິກເອກະລາດ

- ປີເກີດ: 1960
- ລະດັບການສຶກສາ: ປະລິນຍາໂທ ບໍລິຫານທຸລະກິດ
- ເລີ່ມເຮັດວຽກຢູ່ BCEL ແຕ່ປີ 1990 ແລະ ຖືກ BCEL ສົ່ງມາເຮັດວຽກຢູ່ ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ ຈຳກັດ ແຕ່ປີ 1999
- ເຄີຍດຳລົງຕຳແໜ່ງສະມາຊິກສະພາບໍລິຫານທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ ຈຳກັດ ຈົນເຖິງ ວັນທີ 10/10/2016.
- ເຄີຍດຳລົງຕຳແໜ່ງ ຮອງປະທານ ສະພາບໍລິຫານ ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ ຈຳກັດ ແຕ່ ເດືອນ 2 ປີ 2005 ຈົນເຖິງວັນທີ 31/07/2020
- ເຄີຍດຳລົງຕຳແໜ່ງ ຮອງຜູ້ອຳນວຍການໃຫຍ່ ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ ຈຳກັດ ແຕ່ ເດືອນ 12 ປີ 2005 ຈົນເຖິງວັນທີ 31/07/2020

ຄະນະອຳນວຍການ

ຄະນະອຳນວຍການ ຮັບຜິດຊອບຄຸ້ມຄອງ ວຽກງານປະຈຳວັນ ຂອງ LVB ຕາມ ກົດລະບຽບຂອງ LaoVietBank. ຄະນະອຳນວຍການ ຢູ່ພາຍໃຕ້ ການຕິດຕາມກວດກາ ຂອງສະພາບໍລິຫານ. ຄະນະອຳນວຍການ ປະກອບມີບັນດາ ສະພາ ຄື ສະພາຄຸ້ມຄອງຊັບສິນ-ໜີ້ສິນ, ສະພາຄວາມສ່ຽງ, ສະພາຄຸ້ມຄອງທຶນ,....



ທ່ານ ຫງວຽນ ດິກ ວຸ່ ງ

ຜູ້ອຳນວຍການໃຫຍ່

- ☐ ປີເກີດ: 1978
- ☐ ລະດັບການສຶກສາ: ປະລິນຍາໂທ ການເງິນ - ການທະນາຄານ
- ☐ ເລີ່ມເຮັດວຽກຢູ່ BIDV ແຕ່ປີ 2005.
- ☐ ໄດ້ຮັບການແຕ່ງຕັ້ງເປັນຜູ້ອຳນວຍການໃຫຍ່ ທະນາຄານ ຮ່ວມທຸລະກິດ ລາວ -ຫວຽດ ແຕ່ເດືອນ 01 ປີ 2021.
- ☐ ເຄີຍດຳລົງບັນດາຕຳແໜ່ງ: ຮອງຫົວໜ້າ ສູນອະນຸມັດສິນເຊື່ອ ແລະ ການລົງທຶນ BIDV ສຳນັກງານໃຫຍ່, ຮອງຫົວໜ້າສາຂາ BIDV ສາຂາ ດ່ົງດາ.



ທ່ານ ສົມຊາຍ ຍົດສະຫວັນ

ຮອງຜູ້ອຳນວຍການໃຫຍ່

- ☐ ປີເກີດ: 1982
- ☐ ລະດັບການສຶກສາ: ປະລິນຍາໂທ ບໍລິຫານທຸລະກິດ.
- ☐ ເລີ່ມເຮັດວຽກຢູ່ BCEL ແຕ່ປີ 2006.
- ☐ ໄດ້ຮັບການແຕ່ງຕັ້ງເປັນຮອງຜູ້ອຳນວຍການໃຫຍ່ ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ ແຕ່ເດືອນ 01 ປີ 2022.
- ☐ ປັດຈຸບັນກຳລັງດຳລົງຕຳແໜ່ງ ຮອງຜູ້ອຳນວຍການໃຫຍ່ ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ.
- ☐ ເຄີຍດຳລົງບັນດາຕຳແໜ່ງ: ຫົວໜ້າ ຄະນະຄຸ້ມຄອງລູກຄ້າລາຍ ໃຫຍ່ ສຳນັກງານໃຫຍ່ BCEL, ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ປະກັນໄພ ລາວ -ຫວຽດ.



ທ່ານ ວຽງວິໄລ ແສງຄຳຢອງ

ຮອງຜູ້ອຳນວຍການໃຫຍ່

- ☐ ປີເກີດ: 1980
- ☐ ລະດັບການສຶກສາ: ປະລິນຍາຕີ ພົວພັນສາກົນ, ຮ່າໂນ້ຍ.
- ☐ ເລີ່ມເຮັດວຽກຢູ່ ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ ແຕ່ປີ 2007.
- ☐ ໄດ້ຮັບການແຕ່ງຕັ້ງຕຳແໜ່ງ ຮອງຜູ້ອຳນວຍການໃຫຍ່ ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ ແຕ່ ເດືອນ 04/2016
- ☐ ປັດຈຸບັນກຳລັງດຳລົງຕຳແໜ່ງ ຮອງຜູ້ອຳນວຍການໃຫຍ່ ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ.
- ☐ ເຄີຍດຳລົງບັນດາຕຳແໜ່ງ ຫົວໜ້າພະແນກພົວພັນລູກຄ້າ ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ.

ຄະນະອຳນວຍການ (ຕໍ່)



ທ່ານ ຫງວຽນ ເຖ ຖັງ

ຮອງຜູ້ອຳນວຍການໃຫຍ່

- ☐ ປີເກີດ: 1984
- ☐ ລະດັບການສຶກສາ: ປະລິນຍາໂທ ບໍລິຫານທຸລະກິດ
- ☐ ເລີ່ມເຮັດວຽກຢູ່ທະນາຄານ BIDV ແຕ່ປີ 2006
- ☐ ໄດ້ຮັບການແຕ່ງຕັ້ງເປັນຮອງຜູ້ອຳນວຍການໃຫຍ່ ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ ແຕ່ເດືອນ 12 ປີ 2024
- ☐ ເຄີຍດຳລົງຕຳແໜ່ງ: ອຳນວຍການຂັ້ນ 2, ສູນການປະເມີນ ແລະ ອະນຸມັດ; ຮອງຜູ້ອຳນວຍການ BIDV ສາຂາຮ້ຽ່າ



ທ່ານ ຫງວຽນ ຫວຽດ ຮຶ໋ງ

ຮອງຜູ້ອຳນວຍການໃຫຍ່

- ☐ ປີເກີດ: 1978
- ☐ ລະດັບການສຶກສາ: ປະລິນຍາຕີ ເຕັກໂນໂລຊີຂໍ້ມູນຂ່າວສານ.
- ☐ ເລີ່ມເຮັດວຽກຢູ່ BIDV ແຕ່ປີ 2001.
- ☐ ໄດ້ຮັບການແຕ່ງຕັ້ງຕຳແໜ່ງ ຮອງຜູ້ອຳນວຍການໃຫຍ່ ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ ຈຳກັດ ແຕ່ເດືອນ 01/2021.
- ☐ ປັດຈຸບັນກຳລັງດຳລົງຕຳແໜ່ງ ຮອງຜູ້ອຳນວຍການໃຫຍ່ ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ ຈຳກັດ.
- ☐ ເຄີຍດຳລົງຕຳແໜ່ງ: ຮອງຫົວໜ້າສຸນບັດ BIDV, ຫົວໜ້າພະແນກສູນການບັດ BIDV.

ການເຄື່ອນໄຫວ ທຸລະກິດ ປີ 2025

ສະພາບການດຳເນີນທຸລະກິດ 36

ການຄຸ້ມຄອງພະນັກງານ, ຜູ້ອອກແຮງງານ 42

ການເຄື່ອນໄຫວດ້ານຊ່ວຍເຫຼືອສັງຄົມເພື່ອຊຸມຊົນ 44

03



ຜົນການເຄື່ອນໄຫວທຸລະກິດ

ໃນປີ 2025, ເສດຖະກິດໂລກສືບຕໍ່ມີການປ່ຽນແປງຢ່າງສັບສົນ, ມີຄວາມຫຍຸ້ງຍາກ ແລະ ທ້າທາຍຫຼາຍຢ່າງ, ຄວາມຂັດແຍ່ງທາງດ້ານພູມສາດການເມືອງຍັງສືບຕໍ່ແກ່ຍາວ, ໄພເງິນເຟີ້ຍັງບໍ່ທັນໄດ້ຮັບການຄວບຄຸມ; ອັດຕາດອກເບ້ຍໃນຕະຫຼາດສາກົນແມ່ນສູງ; ລາຄານ້ຳມັນຍັງສູງ,... ໄດ້ສ້າງຜົນກະທົບທາງລົບຕໍ່ສະພາບເສດຖະກິດ-ສັງຄົມໃນລາວ. ເສດຖະ ກິດມະຫາພາກຂອງລາວຍັງສືບຕໍ່ປະສົບກັບຄວາມຫຍຸ້ງຍາກຫຼາຍດ້ານ. ທະນາຄານແຫ່ງ ສປປ ລາວ (ທຫລ) ສືບຕໍ່ອອກນະໂຍບາຍຊຸກຍູ້ການເຕີບໂຕທາງດ້ານເສດຖະກິດ, ປະຕິບັດບາງມາດຕະການແກ້ໄຂຄວາມຫຍຸ້ງຍາກໃຫ້ແກ່ການຜະລິດທຸລະກິດ, ຄວບຄຸມອັດຕາແລກປ່ຽນ ແລະ ການເຄື່ອນໄຫວແລກປ່ຽນເງິນຕາຕ່າງປະເທດ, ສະກັດກັ້ນອັດຕາເງິນເຟີ້, ນະໂຍບາຍຊຸກຍູ້ໃຫ້ປະຊາຊົນນຳໃຊ້, ຊຳລະເງິນກີບ, ນຳໃຊ້ສະກຸນເງິນທ້ອງຖິ່ນກັບປະເທດເພື່ອນບ້ານ.

ເຖິງວ່າ ເສດຖະກິດທົ່ວໂລກເວົ້າລວມ, ເສດຖະກິດລາວເວົ້າສະເພາະ ຍັງຄົງປະສົບກັບຄວາມຫຍຸ້ງຍາກຫຼາຍດ້ານ, ແຕ່ໄດ້ຮັບຄວາມເອົາໃຈໃສ່, ຊີ້ນຳ ແລະ ສະໜັບສະໜຸນຢ່າງໃກ້ຊິດຈາກທະນາຄານແມ່ BIDV, BCEL, ແລະ ສະພາບໍລິຫານຂອງ LVB, ທົ່ວລະບົບ LVB ມີຄວາມສາມັກຄີ, ເອົາໃຈໃສ່ ແລະ ພະຍາຍາມສຸດຄວາມສາມາດເພື່ອບັນລຸຄາດໝາຍທີ່ກອງປະຊຸມໃຫຍ່ຜູ້ຖືຫຸ້ນມອບໝາຍ; ຕິດພັນກັບບົດວິພາກປັບປຸງຄົນໂຄງສ້າງ; ປະຕິບັດຕາມລະບຽບການຂອງລັດຖະບານ, ທະນາຄານແຫ່ງ ສປປ ລາວ; ຕັ້ງໜ້າຜັນຂະຫຍາຍບັນດານະໂຍບາຍຂອງລັດຖະບານ ແລະ ທະນາຄານແຫ່ງ ສປປ ລາວ ໃນການປະຕິບັດນະໂຍບາຍເງິນຕາ, ໄປຄຽງຄູ່ກັບການສະໜັບສະໜຸນວິສາຫະກິດ ແລະ ປະຊາຊົນເພື່ອຊຸກຍູ້ການຟື້ນຟູເສດຖະກິດ. ບັນດາຄາດໝາຍຕົ້ນຕໍບັນລຸໄດ້ໝາກຜົນດັ່ງນີ້:

ໝາກຜົນບັນດາເປົ້າໝາຍທຸລະກິດຫຼັກຂອງ ທລວ

ປະຕິບັດ ຮອດວັນທີ 31/12/2025

ຫົວໜ່ວຍ: ຫຼຽນເທົ່າຕື້ ກີບ

No.	ຄາດໝາຍ	ປະຕິບັດ 2024	ແຜນ ທຸລະກິດ 2025	ປະຕິບັດຮອດ 31/12/2025				
				ມູນຄ່າ	ແຜນທຸລະກິດ 2025		ທຽບໃສ່ 2024	
					ມູນຄ່າ	%	ມູນຄ່າ	%
I	**ດ້ານຂະໜາດ**							
1	ຍອດຊັບສິນ	20,742	22,163	22,253	90	100%	1,511	107%
2	ຍອດສິນເຊື່ອ	12,405	13,521	13,859	338	102%	1,454	112%
3	ລະດົມທຶນທັ້ງໝົດ	18,563	20,381	20,531	150	101%	1,968	111%
4	ລະດົມທຶນ ບຸກຄົນ & ອົງການຈັດຕັ້ງ	14,500	14,790	15,302	512	103%	802	106%
5	ລະດົມທຶນບຸກຄົນ	8,219	9,163	9,102	-61	99%	883	111%
II	**ດ້ານປະສິດທິຜົນ**							
1	ສ່ວນຜົດຕ່າງລາຍຮັບ-ລາຍຈ່າຍ	338	329	343	13	104%		
2	ກຳໄລກ່ອນຫັກອາກອນ	50	50	56	6	112%		
3	ກຳໄລຈາກ ຄ່າບໍລິການ&ທຸລະກິດເງິນຕາ	126	103	115	12	112%		
4	ເກັບໜີ້ນອກໃບສະຫຼຸບຊັບສິນບັດ	242	256	271	15	106%		
5	ROE	3.67%	>2.5%	3.88%	ບັນລຸ			
III	**ດ້ານໂຄງປະກອບ**							
1	ອັດຕາສ່ວນ ເງິນກູ້ໄລຍະກາງ-ຍາວ/ເງິນກູ້ທັງໝົດ	55.01%	≤55%	55.69%			0.68%	
2	ອັດຕາສ່ວນເງິນກູ້ລາຍຍ່ອຍ	23.18%	26.50%	24.00%	-2.50%		0.82%	
3	ອັດຕາສ່ວນໜີ້ NPL	2.81%	≤3%	2.71%			-0.10%	
4	ອັດຕາສ່ວນໜີ້ ກຸ່ມ 2	3.92%	≤7%	2.46%			-1.46%	


ຜົນການປະຕິບັດບັນດາຄາດໝາຍຕາມອັດຕາແລກປ່ຽນວັນທີ 31/12/2025 USD/LAK: 21,565 THB/LAK: 676.15

ຜົນການເຄື່ອນໄຫວທຸລະກິດ (ຕໍ່)

ລວມຍອດຊັບສິນ

22,253 ຕື້ກີບ


ຍອດຊັບສິນຮອດວັນທີ 31/12/2025 ບັນລຸກວ່າ 22.3 ພັນຕື້ກີບ, ບັນລຸ 100% ຂອງແຜນການປີ 2025, ເພີ່ມຂຶ້ນ 7% ທຽບໃສ່ຕົ້ນປີ.



ລວມຍອດສິນເຊື່ອ

13,859 ຕື້ກີບ


ຍອດສິນເຊື່ອ ຮອດວັນທີ 31/12/2025 ບັນລຸໄດ້ 13.9 ພັນຕື້ກີບ, ເທົ່າກັບ 102% ຂອງແຜນການປີ 2025; ເພີ່ມຂຶ້ນ 12% ທຽບໃສ່ຕົ້ນປີ.



ລະດົມທຶນ ບຸກຄົນ ແລະ ອົງການຈັດຕັ້ງ

15,302 ຕື້ກີບ


ລະດົມທຶນ ບຸກຄົນ ແລະ ອົງການຈັດຕັ້ງ ບັນລຸ 15.3 ພັນຕື້ກີບ, ບັນລຸ 103% ຂອງແຜນການປີ 2025, ເພີ່ມຂຶ້ນ 6% ທຽບເທົ່າ 802 ຕື້ກີບ ທຽບໃສ່ປີ 2024. ໃນນັ້ນ, ລະດົມທຶນ ບຸກຄົນ ບັນລຸ 9.1 ພັນຕື້ກີບ, ບັນລຸ 99% ຂອງແຜນການປີ 2025, ເພີ່ມຂຶ້ນ 11% ທຽບເທົ່າ 883 ຕື້ກີບ ທຽບໃສ່ປີ 2024



ລວມຍອດລະດົມທຶນ

20,531 ຕື້ກີບ

ຮອດວັນທີ 31/12/2025 ຍອດລະດົມທຶນທັງໝົດ ບັນລຸ ~20.5 ພັນຕື້ກີບ, ເພີ່ມຂຶ້ນ 1,968 ພັນຕື້ກີບ (ທຽບເທົ່າ 11%) ທຽບໃສ່ປີ 2024



ຜົນການເຄື່ອນໄຫວທຸລະກິດ (ຕໍ່)

- ດ້ານການລົງທຶນໃນເງິນຝາກ, ພັນທະບັດ, ການລົງທຶນອື່ນໆ:

ຮອດວັນທີ 31/12/2025, ມູນຄ່າການລົງທຶນພັນທະບັດທັງໝົດ 1.5 ພັນຕື້ກີບ, (ໃນນັ້ນ, ລົງທຶນພັນທະບັດອ່ອຍໜີ້ສາມແຈ ~610 ຕື້ກີບ, ລົງທຶນພັນທະບັດ ສະກຸນເງິນບາດ 500 ລ້ານບາດ, ເພີ່ມຂຶ້ນ 408.5 ຕື້ກີບ ທຽບໃສ່ຕົ້ນປີ, ມູນຄ່າການລົງທຶນເງິນຝາກບັນລຸ ~301,6 ຕື້ກີບ ເພີ່ມຂຶ້ນ 8.2 ຕື້ກີບ ທຽບໃສ່ຕົ້ນປີ. ລະອຽດດັ່ງລຸ່ມນີ້:

- ດ້ານສິນເຊື່ອ:

ຍອດສິນເຊື່ອ ຮອດວັນທີ 31/12/2025 ບັນລຸໄດ້ 13.9 ພັນຕື້ກີບ, ເທົ່າກັບ 102% ຂອງແຜນການປີ 2025; ເພີ່ມຂຶ້ນ 12% ທຽບໃສ່ຕົ້ນປີ.

+ ດ້ານໂຄງສ້າງສິນເຊື່ອແຕ່ລະສະກຸນເງິນ: ຍອດສິນເຊື່ອສະກຸນເງິນ LAK ກວມເອົາ 50.90%/ຍສຊ; ຍອດສິນເຊື່ອ ສະກຸນເງິນ USD ກວມເອົາ 46.58%/ຍສຊ; ຍອດສິນເຊື່ອສະກຸນເງິນ THB ກວມເອົາ 2.52%/ຍສຊ. ເພື່ອແນ່ໃສ່ນຳໃຊ້ທຶນຢ່າງມີປະສິດທິຜົນ, ໃນປີ 2025 LaoVietBank ໄດ້ສຸມໃສ່ຂະຫຍາຍສິນເຊື່ອສະກຸນເງິນກີບ, ແນວໃດກໍ່ຕາມຕ້ອງຊອກຫາລູກຄ້າຊັ້ນດີເພື່ອຂະຫຍາຍສິນເຊື່ອສະກຸນເງິນຕ່າງປະເທດ:

+ ດ້ານຄຸນນະພາບສິນເຊື່ອ: ອັດຕາສ່ວນໜີ້ NPL/ຍອດສິນເຊື່ອທັງໝົດ ຢູ່ໃນລະດັບ 2.71% (ຮັບປະກັນຕາມລະບຽບຂອງ ທຫລ ≤3%), ອັດຕາສ່ວນໜີ້ກຸ່ມ B/ຍອດສິນເຊື່ອທັງໝົດ ຢູ່ໃນລະດັບ 2.46%.

- ດ້ານໝາກຜົນການດຳເນີນທຸລະກິດ:

+ ຜິດດ່ຽງລາຍຮັບ ແລະ ລາຍຈ່າຍກ່ອນຫັກຄ່າໃຊ້ຈ່າຍຄ່ຽງ ບັນລຸ 343 ຕື້ກີບທຽບເທົ່າ, ສຳເລັດ 104% ຂອງແຜນປີ 2025.

+ ກຳໄລກ່ອນຫັກອາກອນທົ່ວລະບົບ ບັນລຸ 56 ຕື້ກີບທຽບເທົ່າ, ສຳເລັດ 112% ຂອງແຜນປີ 2025.

+ ກຳໄລສຸດທິຈາກຄ່າບໍລິການ ແລະ ທຸລະກິດເງິນຕາ: ຜົນການເກັບຄ່າບໍລິການ ແລະ ທຸລະກິດເງິນຕາສຸດທິ ບັນລຸຜົນໄດ້ຮັບທີ່ແນ່ນອນ 115 ຕື້ກີບ ເທົ່າກັບ 112% ຂອງແຜນທຸລະກິດປີ 2025.

- ດ້ານວຽກງານການຂະຫຍາຍລູກຄ້າ:

ປະຕິບັດຕາມແນວທາງການຂະຫຍາຍຖານລູກຄ້າລາຍຍ່ອຍ, LaoVietBank ສືບຕໍ່ຂະຫຍາຍຖານລູກຄ້າ ກໍ່ຄືລູກຄ້າທີ່ນຳໃຊ້ຜະລິດຕະພັນ ແລະ ການບໍລິການຂອງ LaoVietBank, ແນວໃດກໍ່ຕາມ, ໃນປີຍັງ ບໍ່ທັນບັນລຸໄດ້ຕາມຄາດໝາຍ. ໃນປີ 2025, ທົ່ວລະບົບ LVB ຂະຫຍາຍລູກຄ້າໃໝ່ (CIF) ໄດ້ 25,640 ລາຍ, ບັນລຸ 73% ຂອງແຜນການປີ 2025, ໃນນັ້ນ, ລູກຄ້າໃຊ້ Digibank ຈຳນວນ 23,920 ລາຍ, ບັນລຸ 63% ຂອງແຜນການປີ 2025 ແລະ ຂະຫຍາຍລູກຄ້ານຳໃຊ້ບັດ ATM ໄດ້ຈຳນວນ 19,420 ລາຍ ບັນລຸ 90% ຂອງແຜນການປີ 2025.

- ບາງຜົນໄດ້ຮັບອື່ນໆ:

ໃນປີ 2025, ທົ່ວລະບົບຈະສືບຕໍ່ເຂັ້ມງວດກົດລະບຽບ, ວິໄນ, ຕັ້ງໃຈຫັນປ່ຽນ, ດ້ວຍແນວຄິດທີ່ເປັນລະບົບ, ຍຶດໝັ້ນໃນເປົ້າໝາຍຂອງການຫັນປ່ຽນ ແລະ ພັດທະນາຖານລູກຄ້າ, ຄ່ອຍໆກ້າວໄປສູ່ປະສິດທິພາບທີ່ເປັນຮູບປະທຳ, ສືບຕໍ່ຫັນປ່ຽນວິທີການຄຸ້ມຄອງບໍລິຫານ, ຍຶດໝັ້ນຄຳຂວັນ " ວິໄນ, ຄວາມຮັບຜິດຊອບ, ປະສິດທິພາບ," ແລະ ເອົາໃຈໃສ່ປະຕິບັດຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ ແລະ ກົດໝາຍຂອງລາວຢ່າງເຂັ້ມງວດ. ເຖິງວ່າຈະດຳເນີນທຸລະກິດຢູ່ໃນສະພາບແວດລ້ອມທີ່ຕະຫຼາດມີຄວາມຫຍຸ້ງຍາກ, ສະພາບການປັດຈຸບັນຂອງລະບົບຍັງມີບັນຫາຫຼາຍຢ່າງທີ່ຕ້ອງໄດ້ຮັບການແກ້ໄຂ, ເຖິງຢ່າງໃດກໍ່ຕາມ, ທົ່ວລະບົບໄດ້ພະຍາຍາມປະຕິບັດໜ້າທີ່ທີ່ໄດ້ຮັບມອບໝາຍໃຫ້ສຳເລັດຜົນດີ, ບັນລຸຜົນໄດ້ຮັບທາງບວກຫຼາຍດ້ານ, ລະອຽດຄື:

(i). ສືບຕໍ່ຮັກສາຂະໜາດ; ປະຕິບັດຕາມລະບຽບການ ແລະ ນະໂຍບາຍຂອງລັດຖະບານ, ທະນາຄານແຫ່ງ ສປປ ລາວ ຢ່າງເຂັ້ມງວດ; ເປັນເຈົ້າການຈັດຕັ້ງປະຕິບັດມາດຕະການແກ້ໄຂຄວາມຫຍຸ້ງຍາກຢ່າງທ້າວທັນ, ສະໜັບສະໜູນລູກຄ້າໃນການຟື້ນຟູການເຄື່ອນໄຫວການຜະລິດທຸລະກິດ:

+ ປະຕິບັດຕາມລະບຽບການ, ນະໂຍບາຍຂອງລັດຖະບານ, ທະນາຄານແຫ່ງ ສປປ ລາວ ກ່ຽວກັບນະໂຍບາຍສະໜັບສະໜູນລູກຄ້າ SME ຈາກທຶນ WB ແລະ ກອງທຶນ SME; ນະໂຍບາຍການຄຸ້ມຄອງເງິນຕາຕ່າງປະເທດ, ນະໂຍບາຍເງິນຕາທີ່ເຂັ້ມງວດຂອງ ທຫລ

+ ຈັດຕັ້ງປະຕິບັດຊຸດສິນເຊື່ອເພື່ອພັດທະນາຖານລູກຄ້າບຸກຄົນ ຂະໜາດ 260 ຕື້ກີບ.

(ii) ຈັດຕັ້ງປະຕິບັດເຊື່ອມປະສານບັນດາວິທີການແກ້ໄຂແຜນທຸລະກິດ; ຍຶດໝັ້ນຈຸດປະສົງການຫັນປ່ຽນຖານລູກຄ້າ; ສົ່ງເສີມການພັດທະນາທະນາຄານຂາຍຍ່ອຍ; ມີຄວາມຍືດຫຍຸ່ນ, ສ້າງສັນ ໃນເງື່ອນໄຂສະພາບຕະຫຼາດຫຍຸ້ງຍາກ; ລາຍຮັບຈາກການບໍລິການ ແລະ ທຸລະກິດເງິນຕາສຸດທິບັນລຸຜົນໄດ້ຮັບດີ, ຜົນການເກັບໜີ້ ແລະ ການແກ້ໄຂໜີ້ເສຍ, ໜີ້ນອກໃບສະໜູບຊັບສົມບັດ ສຳເລັດເກີນແຜນການທີ່ໄດ້ຮັບມອບໝາຍ.

+ ຍອມຮັບຢ່າງກົງໄປກົງມາເຖິງບັນດາຂໍ້ຄົງຄ້າງຂອງລະບົບ ເພື່ອເປັນເຈົ້າການ, ເດັດຂາດໃນການຈັດຕັ້ງປະຕິບັດວິທີການແກ້ໄຂໜີ້ເສຍ, ໜີ້ນອກໃບສະໜູບຊັບສົມບັດ, ໜີ້ເຊື່ອງຊ້ອນຄວາມສ່ຽງ. ເຂັ້ມງວດລະບຽບວິໄນ; ເພີ່ມທະວີການກວດກາ, ຕິດຕາມ; ເພື່ອຍົກສູງຄວາມຮັບຜິດຊອບຂອງຜູ້ຊີ້ນຳໃນວຽກງານແກ້ໄຂໜີ້.

(iii) ພັດທະນາຊ່ອງທາງການໂຄສະນາທີ່ທັນສະໄໝຢ່າງເຂັ້ມແຂງ; ສົ່ງເສີມການຄົ້ນຄວ້າບັນດາວິທີການນຳໃຊ້ເຕັກໂນໂລຊີໃໝ່ໃນການດຳເນີນງານຂອງທະນາຄານ, ວຽກງານການພັດທະນາເຄື່ອງໝາຍການຄ້າ ເຊັ່ນ: ການເຊື່ອມຕໍ່ການຊຳລະດ້ວຍສະກຸນເງິນທ້ອງຖິ່ນ LAK-VND; ການຍົກລະດັບ LVB DigiBank ເວີຊັ່ນໃໝ່; ການຈັດຕັ້ງປະຕິບັດການຍົກລະດັບລະບົບລາຍງານທີ່ດີທີ່ສຸດ; ໂຄງການສຳລັບການເກັບຮັກສາ ແລະ ການຄົ້ນຫາເອກະສານສິນເຊື່ອເອເລັກໂຕຣນິກ; ການຕິດຕັ້ງ ອຸປະກອນແກ້ໄຂສຳລັບການຄຸ້ມຄອງບັນຊີທີ່ມີສິດທິພິເສດ; ບັນຊີເລກງາມ

+ ຊ່ອງທາງການໂຄສະນາລາຍຍ່ອຍທີ່ທັນສະໄໝ ທີ່ມີເນື້ອຫາເຕັກໂນໂລຢີສູງ, ເຊັ່ນ LVB DigiBank ກຳລັງໄດ້ຮັບການສົ່ງເສີມໃນລັກສະນະທີ່ປອດໄພ, ມີປະສິດທິພາບ, ເພີ່ມການພົວພັນກັບລູກຄ້າຜ່ານ Call center ແລະ ສື່ສັງຄົມອອນລາຍ.

+ ໃນປີ 2025, ຄຽງຄູ່ກັບຮູບແບບການໂຄສະນາເຄື່ອງໝາຍການຄ້າ, LaoVietBank ໄດ້ສຸມໃສ່ການສົ່ງເສີມວຽກງານໂຄສະນາຜະລິດຕະພັນ ແລະ ການບໍລິການທີ່ສະດວກສະບາຍ, ສົ່ງເສີມການດູແລລູກຄ້າດ້ວຍລາຍການໂປຼໂມຊັ່ນ, ມອບຂອງຂວັນ, ການຈັດກິດຈະກຳ, ລົມມະນາຄຸນລູກຄ້າ, ນຳມາເຊິ່ງຜົນໄດ້ຮັບທີ່ຊັດເຈນ, ໂຄສະນາພາບລັກຂອງ LaoVietBank ພ້ອມກັບຜະລິດຕະພັນ ແລະ ການບໍລິການທີ່ສະດວກສະບາຍ ຂອງທະນາຄານ, ຍົກສູງລະດັບຄວາມເຊື່ອໝັ້ນຂອງ ເຄື່ອງໝາຍການຄ້າ LaoVietBank ກັບລູກຄ້າ ແລະ ຄູ່ຮ່ວມງານ

(iv). ສືບຕໍ່ເສີມສ້າງວຽກງານກໍ່ສ້າງ ແລະ ສຳເລັດການປັບປຸງສະຖາບັນ, ຫັນປ່ຽນ ແລະ ເສີມຂະຫຍາຍຄວາມສາມາດໃນການຄຸ້ມຄອງບໍລິຫານ, ຍົກສູງຄວາມຮັບຜິດຊອບຂອງພະນັກງານ ແລະ ຂັ້ນບໍລິຫານແຕ່ລະຄົນ, ໂດຍສະເພາະແມ່ນບົດບາດຂອງຫົວໜ້າໃນການຈັດຕັ້ງປະຕິບັດແຜນທຸລະກິດ; ສຸມໃສ່ການລົງທຶນໃນການພັດທະນາຊັບພະຍາກອນມະນຸດ.



+ ໃນປີ 2025, LaoVietBank ໄດ້ຈັດກອງປະຊຸມສາມັນຜູ້ຖືຫຸ້ນ ແລະ ຈັດກອງປະຊຸມສະພາບໍລິຫານປະຈຳໄຕມາດຕາມລະບຽບການທີ່ກຳນົດໄວ້.

+ ປັບປຸງບຸກຄະລາກອນຄະນະບໍລິຫານງານ; ທົບທວນຄືນ, ຍົກຍ້າຍ, ແຕ່ງຕັ້ງພະນັກງານບາງຄົນ, ພະນັກງານຫຼັກແຫຼ່ງບາງຫົວໜ່ວຍຢູ່ສຳນັກງານໃຫຍ່ ແລະ ສາຂາ; ຮັບສະໝັກ ແລະ ຈັດສັນພະນັກງານຕາມຄວາມຕ້ອງການໂດຍໃຫ້ບຸລິມາສິດກັບພະນັກງານໃນພະແນກທຸລະກິດ, ຫຼຸດຜ່ອນ ແລະ ຈຳກັດການຮັບສະໝັກພະນັກງານໃນພະແນກສະໜັບສະໜູນ, ພາຍໃນ.

(vi). ສຸມໃສ່ການຍົກສູງຊີວິດການເປັນຢູ່, ຈິດໃຈ ຂອງພະນັກງານທົ່ວລະບົບ, ສະແດງໃຫ້ເຫັນເຖິງປະເພນີ ແລະ ວັດທະນະທຳຂອງ LaoVietBank ຢ່າງຈະແຈ້ງ. ໃນປີ 2025, LaoVietBank ໄດ້ສຳເລັດການປັບປຸງລະບຽບເງິນເດືອນໃໝ່, ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2025.

(vii) ໄດ້ຈັດໂຄງການຫຼາຍໂຄງການ ແລະ ຈັດກອງປະຊຸມໃຫຍ່ເພື່ອໃຫ້ທັນກັບແນວທາງ, ການຊີ້ນຳການຈັດຕັ້ງປະຕິບັດບັນດາເນື້ອໃນສຳຄັນຂອງລະບົບ. ໄດ້ຕ້ອນຮັບຄະນະຜູ້ແທນຈາກ ທ່ານ ຜູ້ນຳພັກ, ລັດ, ກະຊວງ ແລະ ອົງການຂອງທັງສອງປະເທດ ຫວຽດນາມ ແລະ ລາວ, ສືບຕໍ່ຢືນຢັນບົດບາດເປັນ "ຂົວຕໍ່" ລະຫວ່າງສອງພື້ນຖານເສດຖະກິດ, ເປັນສັນຍາລັກ, ແບບຢ່າງຂອງການຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນລະຫວ່າງ 2 ປະເທດ ລາວ - ຫວຽດນາມ, ປະກອບສ່ວນຢ່າງຕັ້ງໜ້າໃນການໂຄສະນາພາບລັກ, ຕຳແໜ່ງ ແລະ ຊື່ສຽງ ຂອງ BIDV ໃນຕະຫຼາດລາວ.

(viii) ສືບຕໍ່ປະກອບສ່ວນຢ່າງຕັ້ງໜ້າຕໍ່ກິດຈະກຳຊ່ວຍເຫຼືອສັງຄົມ ແລະ ປະຕິບັດຄວາມຮັບຜິດຊອບຂອງຕົນຕໍ່ຊຸມຊົນເປັນຢ່າງດີ. ໃນປີ 2025, LVB ຍັງໄດ້ຈັດຕັ້ງປະຕິບັດການຊ່ວຍເຫຼືອສັງຄົມຫຼາຍໂຄງການ: ສະໜັບສະໜູນລັດຖະບານ ແລະ ອຳນາດການປົກຄອງທ້ອງຖິ່ນໃນໂອກາດຕ່າງໆ, ຊ່ວຍເຫຼືອໄພພິບັດທາງທຳມະຊາດ, ພາຍຸ, ນ້ຳຖ້ວມ,...



ການຄຸ້ມຄອງພະນັກງານ, ຜູ້ອອກແຮງງານ

☐ **ສະພາບບຸກຄະລາກອນ:**

ຈຳນວນພະນັກງານທີ່ວລະບົບ LaoVietBank ຮອດວັນທີ 31/12/2025 ແມ່ນພະນັກງານສົມບຸນ 428 ຄົນ, ຫຼຸດລົງ 17 ຄົນທຽບກັບທ້າຍປີ 2024. ໃນນັ້ນ, ອັດຕາສ່ວນຂອງພະນັກງານຄົນລາວແມ່ນ 400 ຄົນ/ຈຳນວນພະນັກງານທັງໝົດ, ທຽບເທົ່າ 93.46%; ອັດຕາພະນັກງານຄົນລາວທີ່ຮູ້ ແລະ ໃຊ້ພາສາຫວຽດນາມແມ່ນ 278 ຄົນ/ພະນັກງານຄົນລາວທັງໝົດເທົ່າກັບ 65%; ລະດັບປະລິນຍາຕີຂຶ້ນໄປມີພະນັກງານຈຳນວນ 411 ຄົນເທົ່າກັບ 96%; ລະດັບຊັ້ນສູງລົງມາມີ 17 ພະນັກງານ/ພະນັກງານທັງຫມົດເທົ່າກັບ 4%.

ຍ້ອນການຊີ້ນຳທີ່ໃກ້ຊິດ, ການສະໜັບສະໜຸນຢ່າງຮອບດ້ານຂອງ 02 ທະນາຄານແມ່ BIDV ແລະ BCEL ແລະ ຄວາມພະຍາຍາມຂອງລະບົບ ບຸກຄະລາກອນຂອງ LaoVietBank ສືບຕໍ່ສຳເລັດໜ້າທີ່ ແລະ ຍົກສູງດ້ານຄຸນນະພາບ. ໄດ້ຮັບພະນັກງານບຸກຄະລາກອນຈາກແຫຼ່ງການສຶກສາທີ່ມີຄຸນນະພາບ, ການຝຶກອົບຮົມເປັນຢ່າງດີຢູ່ມະຫາວິທະຍາໄລທີ່ມີຊື່ສຽງຈາກປະເທດຫວຽດນາມ, ລາວ ແລະ ບາງປະເທດເຊັ່ນ: ຈີນ, ອິດສະຕາລີ, ໄທ... ສົມທົບກັບການນຳ, ຜູ້ຊ່ຽວຊານທີ່ລະດົມຈາກ BIDV, BCEL. ພະນັກງານຂອງ LaoVietBank ສາມາດຕອບສະໜອງໄດ້ຄວາມຕ້ອງການຂອງໜ້າວຽກໜ້າທີ່ໜັກໜ່ວງ ບົນພື້ນຖານເສດຖະກິດປະສົບກັບຄວາມຫຍຸ້ງຍາກ. ເຖິງແມ່ນວ່າມາຈາກພື້ນຖານວັດທະນາທຳທີ່ແຕກຕ່າງກັນ ແຕ່ຄວາມສາມັກຄີ, ມີຈິດໃຈມະນຸດສະທຳ ໄດ້ຊ່ວຍໃຫ້ LaoVietBank ໄດ້ມີວັດທະນາທຳສະພາບແວດລ້ອມການເຮັດວຽກທັນສະໄໝ, ກ້າວໜ້າ.

ລະບົບການຄຸ້ມຄອງບຸກຄະລາກອນຈາກແຜນຍຸດທະສາດ, ລະບົບ ຂະບວນການ ແລະ ລະບຽບການຕ່າງໆທີ່ໄດ້ກຳນົດໄວ້ຈາກການຈັດຕັ້ງ ຮັບສະໜັກງານ, ການຝຶກອົບຮົມ, ການສັບຊ້ອນແຮງງານ, ເງິນເດືອນ ແລະ ນະໂຍບາຍຕ່າງໆສ້າງແຮງຈູງໃຈຕໍ່ຜູ້ອອກແຮງງານ ເພື່ອສົ່ງເສີມແຮງງານນັບມື້ນັບສົມບຸນແບບຂຶ້ນ; ຫລາຍນະໂຍບາຍ ແລະ ລະບຽບສຳລັບຜູ້ອອກແຮງງານໄດ້ຖືກນຳໃຊ້ຢ່າງມີປະສິດທິຜົນ, ໄດ້ຮັບການຕີລາຄາສູງຈາກອົງການຄຸ້ມຄອງຂອງລັດຖະບານ ແລະ ທະນາຄານແຫ່ງ ສປປ ລາວ.

☐ **ການຮັບສະໜັກງານ:**

ວຽກງານການຮັບສະໜັກງານໃນປີ 2025 ຍັງສືບຕໍ່ໄດ້ຮັບການປັບປຸງໃນດ້ານຄຸນນະພາບ, ປະສິດທິຜົນ ແລະ ວິທີການຈັດຕັ້ງປະຕິບັດ. ຂັ້ນຕອນໃນຂະບວນການຮັບສະໜັກພະນັກງານ ແມ່ນເຮັດຈັດຕັ້ງປະຕິບັດຢ່າງເປີດເຜີຍແບບມືອາຊີບ, ຮັບປະກັນຄວາມໂປ່ງໃສ ແລະ ຄວາມເອກະພາບທົ່ວລະບົບ, ຮັບປະກັນການຮັບບຸກຄະລາກອນທີ່ຖືກຕ້ອງ ເຂົ້າກັບຄວາມຕ້ອງການຂອງແຕ່ລະຫົວໜ່ວຍ, ແຕ່ລະພາກສ່ວນ. ດັ່ງນັ້ນ, LaoVietBank ໄດ້ດຶງດູດຜູ້ສະໜັກທີ່ມີຄຸນນະພາບສູງຈາກທຸກພາກທົ່ວປະເທດລາວ, ສ້າງພາບລັກຕໍ່ສັງຄົມເວົ້າລວມ ແລະ ຜູ້ສະໜັກເວົ້າສະເພາະ. ປະກອບສ່ວນເຂົ້າໃນການໂຄສະນາ ແລະ ຍົກສູງພາບພົດເຄື່ອງໝາຍການຄ້າ, ພາບພົດ BIDV ໃນຕະຫຼາດການທະນາຄານ. ໃນປີ 2025, ທົ່ວລະບົບ LaoVietBank ໄດ້ຮັບສະໜັກພະນັກງານ 24 ຄົນທີ່ຕອບສະໜອງຄົບເງື່ອນໄຂເປັນພະນັກງານສົມບຸນ.

☐ **ຝຶກອົບຮົມພະນັກງານ:**

ໃນແຕ່ລະປີ LaoVietBank ໄດ້ລົງທຶນໃນການຝຶກອົບຮົມ ແລະ ສົ່ງເສີມພະນັກງານ ເພື່ອຮັບປະກັນວ່າແຜນການພັດທະນາແຫລ່ງບຸກຄະລາກອນຂອງ LaoVietBank ໃນແຕ່ລະໄລຍະ, ແຕ່ລະເປົ້າໝາຍ. ແຜນການຝຶກອົບຮົມປະຈຳປີໄດ້ສ້າງຂຶ້ນ ເພື່ອຮັບປະກັນຄວາມຖືກຕ້ອງຕາມຄວາມຕ້ອງການ, ເໝາະສົມກັບຄວາມຕ້ອງການສະເພາະໜ້າວຽກ ແລະ ປະສົບການຂອງພະນັກງານທີ່ສັງກັດຢູ່ແຕ່ລະໜ່ວຍງານ. ບັນດາຫຼັກສູດການຝຶກອົບຮົມແມ່ນດຳເນີນໃນຫຼາຍໆສາຂາວິຊາສະເພາະ, ຫົວຂໍ້ ແລະ ກໍ່ສ້າງຝຶກອົບຮົມໂດຍກົງຜ່ານການປະຕິບັດວຽກງານຕົວຈິງ.

ໃນປີ 2025, LaoVietBank ໄດ້ຈັດຕັ້ງປະຕິບັດ 33 ຫຼັກສູດການຝຶກອົບຮົມດ້ວຍເນື້ອໃນແຕກຕ່າງກັນ ເຊິ່ງໄດ້ຝຶກອົບຮົມໃຫ້ພະນັກງານກວ່າ 866 ຄົນ ໃນນັ້ນ, ມີ 18 ຫຼັກສູດ ອົບຮົມຕາມຮູບແບບການອົບຮົມພາຍໃນເຊິ່ງໄດ້ຈັດຂຶ້ນຢູ່ສຳນັກງານໃຫຍ່ ແລະ ຜ່ານລະບົບ Video Conferrence, 0 ຫຼັກສູດອົບຮົມ ຜ່ານຮູບແບບການຊັບປ່ຽນເຮັດວຽກຕາມຕົວຈິງຢູ່ສຳນັກງານໃຫຍ່, ໄດ້ສົ່ງພະນັກງານເຂົ້າຮ່ວມ 8 ຫຼັກສູດທີ່ອົງການອື່ນຈັດຂຶ້ນ ແລະ ເຂົ້າຮ່ວມ 5 ຫຼັກສູດອົບຮົມຢູ່ຫວຽດນາມ, ທະນາຄານແມ່ BIDV, 2 ຫຼັກສູດອົບຮົມຜ່ານລະບົບ Online ຂອງທະນາຄານແມ່ BIDV. ນອກຈາກນັ້ນ, ໄດ້ຜັນຂະຫຍາຍ ຮູບແບບການອົບຮົມແບບພະນັກງານທີ່ສົ່ງມາຈາກທະນາຄານແມ່BIDV ສອນໂດຍກົງໃຫ້ພະນັກງານຄົນລາວ (ມີຄວາມສາມາດ, ມີການພັດທະນາຕົນເອງ) ເພື່ອແນ່ໃສ່ການອົບຮົມ ແລະ ກຽມພ້ອມແຫລ່ງບຸກຄະລາກອນສືບທອດ, ປ່ຽນແທນ.

☐ **ນະໂຍບາຍຕ່າງໆສຳລັບຜູ້ອອກແຮງງານ:**

LaoVietBank ປະຕິບັດຢ່າງເຂັ້ມງວດນະໂຍບາຍຕ່າງໆຂອງລັດສຳລັບຜູ້ອອກແຮງງານ, ຊຸກຍູ້ບັນດາຫົວໜ່ວຍສະມາຊິກສ້າງເງື່ອນໄຂສູງສຸດເພື່ອປັບປຸງຊີວິດການເປັນຢູ່ບ່ວ່າຈະເປັນທາງດ້ານວັດຖຸ ແລະ ຈິດໃຈຂອງພະນັກງານ. ການຊຳລະເງິນເດືອນ ແລະ ລາຍຮັບໃຫ້ແກ່ພະນັກງານແມ່ນຕິດພັນກັບຜົນການດຳເນີນທຸລະກິດ, ລະດັບການສຳເລັດໜ້າທີ່ ແລະ ການປະກອບສ່ວນຂອງພະນັກງານແຕ່ລະຄົນ. ນອກຈາກເງິນເດືອນແລ້ວ, LaoVietBank ຍັງມີຄວາມເອົາໃຈໃສ່ໃນການປະຕິບັດນະໂຍບາຍຕ່າງໆໃຫ້ແກ່ພະນັກງານເຊັ່ນ: ປະກັນສັງຄົມ, LVI Care ແລະ ນະໂຍບາຍສຳລັບພະນັກງານໄປຝຶກອົບຮົມ, ໄປປະຕິບັດໜ້າທີ່ຕ່າງແຂວງ, ເບ້ຍບຳນານ, ສົ່ງສະການ, ແຕ່ງງານ ແລະ ອື່ນໆ.

☐ **ການກໍ່ສ້າງ, ແຕ່ງຕັ້ງພະນັກງານ:**

ວຽກງານກໍ່ສ້າງພະນັກງານສືບທອດໄດ້ດຳເນີນຢ່າງຮອບຄອບ, ບົນພື້ນຖານລວມສູນປະຊາທິປະໄຕ, ຮັບປະກັນລັກສະນະເປີດກວ້າງ ແລະ ເຄື່ອນໄຫວດີ. ລາຍຊື່ກໍ່ສ້າງໄດ້ຮັບການກວດກາຄືນ, ເພີ່ມເຕີມໃນແຕ່ລະໄລຍະເພື່ອຮັບປະກັນ ພະນັກງານດີເກັ່ງມີທັດສະນະພັດທະນາ ແລະ ຄັດຜູ້ທີ່ບໍ່ສາມາດສະໜອງຄວາມຕ້ອງການໜ້າວຽກໄດ້ອອກ. ໃນບັນດາລາຍຊື່ດັ່ງກ່າວ, LaoVietBank ໄດ້ສຸມໃສ່ຝຶກອົບຮົມ, ຕິດຕາມ ແລະ ຕີລາຄາບັນດາພະນັກງານທີ່ໄດ້ຮັບການຕີລາຄາດີ ແລະ ມີທ່າອ່ຽງພັດທະນາທີ່ໄດ້ຮັບການແຕ່ງຕັ້ງໃໝ່, ແຕ່ງຕັ້ງຄືນຢ່າງເໝາະສົມ ແລະ ກົງກັນຂ້າມ ພະນັກງານຫຼັກແຫຼ່ງທີ່ບໍ່ຕອບສະໜອງໄດ້ເງື່ອນໄຂພາຍຫຼັງຫາມິດວາລະການແຕ່ງຕັ້ງຈະໄດ້ພິຈາລະນາແຕ່ງຕັ້ງຢູ່ຕຳແໜ່ງ, ໜ່ວຍງານອື່ນທີ່ຕ້ອງການຄວາມສາມາດ, ວຸດທິ ການສຶກສາ ແລະ ໄດ້ເບີກຈ່າຍລາຍໄດ້ຕ່ຳກວ່າຢ່າງເໝາະສົມ.

ໃນປີ 2025, ໄດ້ເຮັດສຳເລັດການປະຕິບັດຂະບວນການການຄັດເລືອກແຕ່ງຕັ້ງ, ແຕ່ງຕັ້ງຄືນໃໝ່ຢູ່ທີ່ທຸກໜ່ວຍງານທີ່ເໝາະສົມກັບຄວາມຕ້ອງການຂອງວຽກງານຕົວຈິງເຊັ່ນ: ແຕ່ງຕັ້ງໃໝ່ 21 ຄົນ, ແຕ່ງຕັ້ງຄືນໃໝ່ 15 ຄົນ. ໂດຍພື້ນຖານແລ້ວ, ພະນັກງານຫຼັກແຫຼ່ງທີ່ຢູ່ພາຍໃຕ້ການພິຈາລະນາແຕ່ງຕັ້ງ ແລະ ແຕ່ງຕັ້ງຄືນໃໝ່ ຕອບສະໜອງໄດ້ມາດຕະຖານທີ່ກຳນົດໄວ້ເປັນຢ່າງດີ. LaoVietBank ປະຕິບັດ ສັບຊ້ອນແຫຼ່ງບຸກຄະລາກອນ, ສັບຊ້ອນປັບປຸງພະນັກງານເພື່ອຮັບປະກັນ ບຸກຄະລາກອນທີ່ຖືກຕ້ອງ, ຕິງຕ່ຳກັບຄວາມສາມາດຂອງພະນັກງານ ແລະ ຄວາມຕ້ອງການຂອງໜ້າວຽກ, ເໝາະສົມກັບຂະໜາດຂອງແຕ່ລະຫົວໜ່ວຍ, ຍົກສູງຄວາມສາມາດ ແລະ ເພີ່ມທະວີໄດ້ສູງສຸດຄວາມອາດສາມາດຂອງຖົ່ນແຖວພະນັກງານທົ່ວລະບົບ.

428 ພະນັກງານທັງໝົດ

400 ພະນັກງານຄົນລາວ

28 ພະນັກງານຄົນຫວຽດນາມ

96% ລະດັບການສຶກສາປະລິນຍາຕີ



ການເຄື່ອນໄຫວດ້ານຊ່ວຍເຫຼືອສັງຄົມເພື່ອຊຸມຊົນ



ປີ 2025 ຜ່ານມານອກຈາກການເຄື່ອນໄຫວວຽກ ງານທຸລະກິດແລ້ວ, ທລຈ ຍັງໄດ້ສຸມໃສ່ ທຸກກຳລັງ ແລະ ເຫື່ອແຮງເຂົ້າໃນວຽກງານຊ່ວຍເຫຼືອສັງຄົມ. ທລຈ ໄດ້ຈັດຕັ້ງປະຕິບັດ ການຊ່ວຍເຫຼືອສັງຄົມໃນບັນດາແຂວງ ແລະ ບັນດາເມືອງ ໃນ ສປປ ລາວ. ດ້ວຍງົບປະມານ ທັງໝົດ ກວ່າ 3,2 ຕື້ກີບ.

ທລຈ ຍັງໃຫ້ທິດທາງແກ່ບັນດາ ພໍ່ແມ່ປະຊາຊົນ ໃນການແກ້ໄຂຊີວິດການເປັນຢູ່, ຊ່ວຍເຫຼືອ ປະຊາຊົນທີ່ໄດ້ຮັບຜົນກະທົບ ຈາກໄພ ທຳມະຊາດ, ອຸປະຖຳຊ່ວຍເຫຼືອເຄື່ອງນຸ່ງຫົ່ມ ທີ່ຈຳເປັນ ໃຫ້ແກ່ບັນດາຄອບ ຄົວທີ່ທຸກຍາກ ຂາດເຂີນ.





ບົດລາຍງານ ຕີລາຄາຂອງຄະນະບໍລິຫານ

ຜົນການດຳເນີນທຸລະກິດ ຫລວ ປີ 2025 48
ບັນດາຄວາມສ່ຽງພາຍນອກ ແລະ ຄວາມສ່ຽງພາຍໃນ 50

04

ຜົນການດຳເນີນທຸລະກິດ ທລວ ປີ 2025



1. ສະພາບເສດຖະກິດຂອງລາວ ປີ 2025

ໃນປີ 2025 ເສດຖະກິດຂອງລາວ ຂະຫຍາຍຕົວ ຢູ່ລະດັບ 4,8%. ອັດຕາເງິນເຟີ້ຂອງລາວໃນເດືອນ 12/2025 ຢູ່ລະດັບ 5.6%, ຫຼຸດລົງ 11.27% ເມື່ອທຽບໃສ່ເດືອນ 12/2024 (16.87%), ສະເລ່ຍປີ 2025 ຢູ່ລະດັບ 7.7%. ອັດຕາເງິນເຟີ້ຫຼຸດລົງຂ້ອນຂ້າງຫຼາຍເມື່ອທຽບໃສ່ປີ 2024, ເຖິງຢ່າງໃດກໍຕາມ ມີແນວໂນ້ມທີ່ຈະເພີ່ມຂຶ້ນອີກໃນສອງເດືອນສຸດທ້າຍຂອງປີ 2025.

- ດ້ານເງິນຕາ: ອັດຕາແລກປ່ຽນເງິນຕາຕ່າງປະເທດຂອງບັນດາທະນາຄານທຸລະກິດໃນທ້າຍປີ 2025 ເມື່ອທຽບໃສ່ທ້າຍປີ 2024, ເງິນກີບອ່ອນຄ່າລົງ 0.38% ເມື່ອທຽບກັບເງິນໂດລາ ແລະ 8.55% ເມື່ອທຽບກັບເງິນບາດ. ຄວາມແຕກຕ່າງຂອງອັດຕາແລກປ່ຽນລະຫວ່າງທະນາຄານທຸລະກິດ ແລະ ຕະຫຼາດພາຍນອກ ~0.95% ສຳລັບເງິນໂດລາ ແລະ 2.93% ສຳລັບເງິນບາດ. ຄັງສຳຮອງເງິນຕາຕ່າງປະເທດໃນທ້າຍປີ 2025 ພຽງພໍສຳລັບການນຳເຂົ້າ 6.45 ເດືອນ. ລວມຍອດເງິນຝາກທັງໝົດຂອງຫ້ວຍລະບົບທະນາຄານທຸລະກິດ ກວມເອົາ 96.58% ຂອງ GDP, ລວມຍອດໜີ້ທັງໝົດຂອງຂະແໜງທະນາຄານກວມເອົາ 61.35% ຂອງ GDP, ອັດຕາສ່ວນໜີ້ເສຍ (NPL) ບັນລຸລະດັບທີ່ສະພາແຫ່ງຊາດອະນຸມັດ (ຢູ່ລະດັບ 1.41%, ແຜນການບໍ່ໃຫ້ເກີນ 3% ຂອງຍອດໜີ້ທັງໝົດ). ຜົນການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອຊຸກຍູ້ການເຕີບໂຕທາງເສດຖະກິດ ຮອດເດືອນ 10/2025 ບັນລຸ 4,755.20 ຕື້ກີບ. ນະໂຍບາຍສິນເຊື່ອເພື່ອແຈກຢາຍຫຶນໃຫ້ແກ່ທ້ອງຖິ່ນໄດ້ຮັບການອະນຸມັດເປັນຈຳນວນເງິນ 2,240.39 ຕື້ກີບ, ປ່ອຍກູ້ຕົວຈິງ 2,104.75 ຕື້ກີບ, ກວມເອົາ 93.95% ຂອງຈຳນວນເງິນທີ່ໄດ້ຮັບການອະນຸມັດ. ສຳລັບການຄຸ້ມຄອງລາຍຮັບຜ່ານລະບົບທະນາຄານ ບັນລຸ 72.46% ຂອງມູນຄ່າການສົ່ງອອກທັງໝົດ (ບໍ່ລວມຫ໋ວຍໜ່ວຍທີ່ໄດ້ຮັບການຍົກເວັ້ນພາຍໃຕ້ບາງມາດຕາຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ).

- ດ້ານລາຍຮັບ-ລາຍຈ່າຍງົບປະມານ: ໃນປີ 2025, ລາຍຮັບງົບປະມານບັນລຸ 75.4 ພັນຕື້ກີບ, ເທົ່າກັບ 109% ຂອງແຜນການປີ; ລາຍຈ່າຍງົບປະມານບັນລຸ 59.6 ພັນຕື້ກີບ, ເທົ່າກັບ 73% ຂອງແຜນການປີ. ການຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດສຳເລັດຕາມຂໍ້ຕົກລົງ, ການກູ້ຢືມເງິນໃໝ່ທີ່ບໍ່ມີປະສິດທິພາບໄດ້ຖືກຈຳກັດ, ຄ່ອຍໆຫຼຸດຜ່ອນແຮງກົດດັນດ້ານໜີ້ສິນສາທາລະນະ, ແລະ ຄວາມໜ້າເຊື່ອຖືທາງດ້ານການເງິນໄດ້ຮັບການປັບປຸງເທື່ອລະກ້າວ.

- ດ້ານມູນຄ່າການນຳເຂົ້າ - ສົ່ງອອກ: ລວມມູນຄ່າການສົ່ງອອກ - ນຳເຂົ້າ ທັງໝົດໃນປີ 2025 ບັນລຸ ~19,215 ລ້ານໂດລາ (ບໍ່ລວມຄ່າໄຟຟ້າ), ຂາດດຸນ 88.8 ລ້ານໂດລາ. ໃນນັ້ນ, ລວມມູນຄ່າການສົ່ງອອກທັງໝົດ ບັນລຸ 9,563 ລ້ານໂດລາ, ໂດຍສິນຄ້າສົ່ງອອກຕົ້ນຕໍແມ່ນເຄື່ອງໃຊ້ໄຟຟ້າ, ອຸປະກອນໄຟຟ້າ, ຄຳປະສົມ, ຄຳແທ່ງ, ເກືອ, ຢາງພາລາ, ແຮ່ທອງແດງ, ເຈ້ຍ,... 05 ປະເທດສົ່ງອອກຕົ້ນຕໍແມ່ນ ຈີນ, ຫວຽດນາມ, ໄທ, ອິດສະຕາລີ, ອາເມລິກາ; ລວມມູນຄ່າການນຳເຂົ້າບັນລຸ 9,651.8 ລ້ານໂດລາ, ສິນຄ້ານຳເຂົ້າຕົ້ນຕໍແມ່ນ ນ້ຳມັນ, ທາດປະສົມເຄມີສຳເລັດຮູບ, ພາຫະນະສັນຈອນ, ອຸປະກອນກົນຈັກ, ເຫຼັກກ້າ ແລະ ຜະລິດຕະພັນເຫຼັກກ້າ, ເຄື່ອງໃຊ້ໄຟຟ້າ, ເຫຼັກເສັ້ນ... 05 ປະເທດນຳເຂົ້າຕົ້ນຕໍແມ່ນ ໄທ, ຈີນ, ຫວຽດນາມ, ອາເມລິກາ ແລະ ຍີ່ປຸ່ນ.

2. ແຜນການຈຸດສຸມຂອງລັດຖະບານສຳລັບປີ 2026

- ສຸມໃສ່ 7 ທິດທາງລວມ, ບັນດາເປົ້າໝາຍ, ແລະ 6 ຈຸດປະສົງທີ່ໄດ້ລະບຸໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10 (2026-2030), ໂດຍສະເພາະແມ່ນການອັດຕາການເຕີບໂຕທາງເສດຖະກິດສະເລ່ຍ ບັນລຸ 6% ຂຶ້ນໄປ, ລາຍໄດ້ສະເລ່ຍຕໍ່ຫົວຄົນ 3,104 ໂດລາ.

- ສືບຕໍ່ສຸມໃສ່ການຮັບປະກັນສະຖຽນລະພາບທາງດ້ານການເມືອງ ທີ່ເຂັ້ມແຂງ, ສັງຄົມມີຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍ, ພ້ອມທັງໃຫ້ຄວາມສຳຄັນກັບການຈັດຕັ້ງປະຕິບັດແຜນການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ສ້າງພື້ນຖານທາງດ້ານການເມືອງ-ການພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ, ພ້ອມທັງສຸມໃສ່ການປ້ອງກັນ ແລະ ແກ້ໄຂປະກົດການທຍ້ທ໋ ຕ່າງໆ.

- ສືບຕໍ່ຈັດຕັ້ງປະຕິບັດມາດຕະການເພື່ອແກ້ໄຂຄວາມທຍ້ງຍາກທາງດ້ານເສດຖະກິດ, ການເງິນຕາມແຜນການເຮັດວຽກຂອງຄະນະ 19/BCTD, ລວມທັງສືບຕໍ່ຊຸກຍູ້ ແລະ ສົ່ງເສີມການຜະລິດພາຍໃນປະເທດເພື່ອທົດແທນການນຳເຂົ້າ, ແລະ ການຄຸ້ມຄອງລາຄາສິນຄ້າ.

- ສູ້ຊົນເກັບລາຍຮັບງົບປະມານແຫ່ງລັດໃນປີ 2026 ບໍ່ຕ່ຳກວ່າ 20% ຂອງ GDP ຕາມແຜນພັດທະນາແຫ່ງຊາດ, ປ້ອງກັນການສູນເສຍງົບປະມານ, ເລັ່ງແກ້ໄຂໜີ້ສິນສາທາລະນະເພື່ອຫຼຸດຜ່ອນໜີ້ສິນ, ແລະ ຈັດຕັ້ງປະຕິບັດການໃຊ້ຈ່າຍງົບປະມານດ້ວຍຈິດໃຈປະຢັດ.

- ສືບຕໍ່ຄວບຄຸມອັດຕາເງິນເຟີ້ ແລະ ຮັກສາສະຖຽນລະພາບອັດຕາແລກປ່ຽນ, ຈັດຕັ້ງປະຕິບັດນະໂຍບາຍເພື່ອເພີ່ມມູນຄ່າຂອງເງິນກີບ, ແລະ ສ້າງກົນໄກໃນການໃຊ້ສະກຸນເງິນທ້ອງຖິ່ນເພື່ອຊຳລະຄ່າສິນຄ້າ ແລະ ການບໍລິການໃນລາວກັບປະເທດເພື່ອນບ້ານ ແລະ ຄູ່ຄ້າສອງຝ່າຍ.

- ສືບຕໍ່ສຸມໃສ່ໂຄງການພະລັງງານສະອາດ ແລະ ພະລັງງານທົດແທນ, ສົ່ງເສີມການພັດທະນາ ແລະ ການລົງທຶນໃນການກໍ່ສ້າງສາຍສົ່ງໄຟຟ້າແຮງສູງທີ່ເຊື່ອມຕໍ່ກັບປະເທດເພື່ອນບ້ານ.

- ສືບຕໍ່ຄຸ້ມຄອງໂຄງການສຳຫຼວດ ແລະ ປຸງແຕ່ງແຮ່ທາດຢ່າງເຂັ້ມງວດ, ພ້ອມທັງສົ່ງເສີມການປຸງແຕ່ງແຮ່ທາດໃຫ້ເປັນຜະລິດຕະພັນສຳເລັດຮູບກ່ອນການສົ່ງອອກ, ສຸມໃສ່ການຕິດຕາມກວດກາ ແລະ ການຄຸ້ມຄອງສິ່ງແວດລ້ອມຢ່າງມີປະສິດທິພາບ, ແລະ ຈັດຕັ້ງປະຕິບັດມາດຕະການທີ່ເຂັ້ມງວດສຳລັບໂຄງການຂຸດຄົ້ນແຮ່ທາດທີ່ຖືກຈັດປະເພດເປັນໂຄງການທີ່ມີຄວາມອ່ອນໄຫວ ແລະ ມີຄວາມອ່ອນໄຫວສູງ.

- ສຸມໃສ່ການພັດທະນາພື້ນຖານໂຄງລ່າງການຂົນສົ່ງທາງບົກ, ທາງລົດໄຟ, ທາງນ້ຳ, ແລະ ທາງອາກາດທີ່ເຂັ້ມແຂງ ແລະ ຍືນຍົງຕາມແລວທາງເສດຖະກິດຕ່າງໆ.

ຂັນດາຄວາມສ່ຽງພາຍໃນ ແລະ ຄວາມສ່ຽງພາຍນອກ

1. ຄວາມສ່ຽງດ້ານເສດຖະກິດ

ປີ 2025, ເສດຖະກິດຂອງ ສປປ ລາວ ສືບຕໍ່ຟື້ນຕົວ ແລະ ຂະຫຍາຍຕົວ ທຽບໃສ່ປີຜ່ານມາ, ໂດຍອັດຕາການຂະຫຍາຍຕົວຂອງເສດຖະກິດ ຢູ່ທີ່ 4,8% ແລະ ອັດຕາເງິນເຟີ້ມີການຫຼຸດລົງມາຢູ່ລະດັບຕົວເລກດຽວຫຼັງຈາກເພີ່ມຂຶ້ນສູງໃນ2-3ປີຜ່ານມາ. ແຕ່ເຖິງຢ່າງໃດກໍຕາມ, ເສດຖະກິດມະຫາພາກ ຂອງ ສປປ ລາວ ຍັງປະເຊີນກັບບັນດາຄວາມສ່ຽງ ແລະ ສິ່ງທ້າທາຍ ທັງພາຍນອກ-ພາຍໃນ ຫຼາຍຢ່າງ ເປັນຕົ້ນແມ່ນ:

- ພັນທະໜີ້ສິນຕ່າງປະເທດ, ຕະຫຼາດແຮງງານຍັງປະສົບກັບບັນຫາຂາດແຄນໃນບາງຂົງເຂດ, ກຳລັງການຊື້ຟື້ນຕົວຊ້າ, ໃນຂະນະທີ່ຄວາມສ່ຽງດ້ານອັດຕາແລກປ່ຽນ ແລະ ກະແສການນຳໃຊ້ເງິນຕາຕ່າງປະເທດຍັງຄົງມີຢູ່.

- ເສດຖະກິດລາວ ຍັງຄົງໄດ້ຮັບຜົນກະທົບຢ່າງຫຼວງຫຼາຍຈາກການຜັນແປຂອງເສດຖະກິດໂລກ, ການປ່ຽນແປງນະໂຍບາຍເງິນຕາສາກົນ, ຄວາມຜັນຜວນຂອງລາຄາສິນຄ້າ, ກະແສເງິນທຶນ ແລະ ລະດັບອັດຕາແລກປ່ຽນ. ນອກຈາກນີ້, ການກຽມຄວາມພ້ອມເພື່ອອອກຈາກສະຖານະພາບປະເທດດ້ອຍພັດທະນາ ອາດຈະເຮັດໃຫ້ມີການປ່ຽນແປງດ້ານກົນໄກບຸລິມະສິດທາງການຄ້າ ແລະ ການເງິນ, ເຊິ່ງຖືເປັນສິ່ງທ້າທາຍເພີ່ມເຕີມໃນໄລຍະຕໍ່ໜ້າ.

ຕໍ່ສະພາບການດັ່ງກ່າວ, ລັດຖະບານລາວ ກໍຄື ຂະແໜງການລັດ ໄດ້ສຸມໃສ່ຄົ້ນຄວ້າ ແລະ ປັບປຸງນະໂຍບາຍ ຂອງຕົນ ຕາມທິດທາງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ເພື່ອສະໜັບສະໜຸນເສດຖະກິດພາຍໃນໃຫ້ນັບມື້ມີຄວາມເຂັ້ມແຂງຂຶ້ນ.

2. ຄວາມສ່ຽງດ້ານສິນເຊື່ອ

ໂດຍຮູ້ດີເຖິງຄວາມສຳຄັນຂອງວຽກງານການຄຸ້ມຄອງຄວາມສ່ຽງດ້ານສິນເຊື່ອໃນໄລຍະການດຳເນີນທຸລະກິດໄປສູ່ເປົ້າຫມາຍທີ່ປອດໄພ, ປະສິດທິຜົນ ແລະ ຍືນຍົງ, LVB ຍາມໃດກໍເປັນເຈົ້າການ, ປະຕິບັດຕາມລະບຽບການສາກົນໃນການຄຸ້ມຄອງຄວາມສ່ຽງດ້ານສິນເຊື່ອ. ລະບົບ LVB ທັງໝົດ ນັບຕັ້ງແຕ່ສຳນັກງານໃຫຍ່ ຮອດສາຂາ, ໄດ້ຈັດຕັ້ງໂຄງປະກອບການຈັດຕັ້ງຢ່າງເໝາະສົມ, ກຳນົດໜ້າທີ່, ຂອບເຂດສິດຂອງບັນດາພາກສ່ວນ/ບຸກຄົນ ທີ່ກ່ຽວຂ້ອງຕາມຈຸດປະສົງຂອງການຄຸ້ມຄອງຄວາມສ່ຽງດ້ານສິນເຊື່ອ. ລະບົບເອກະສານ ແລະ ລະບຽບການໃຫ້ສິນເຊື່ອ ແລະ ວຽກງານຄຸ້ມຄອງຄວາມສ່ຽງດ້ານສິນເຊື່ອ, ນະໂຍບາຍການຄຸ້ມຄອງຄວາມສ່ຽງທັງໝົດໄດ້ຮັບການປະກາດໃຊ້ຢ່າງຄົບຖ້ວນ, ກວດກາ ແລະ ປັບປຸງຢ່າງເປັນປົກກະຕິ ເພື່ອໃຫ້ສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປ ລາວ, LVB ໄດ້ປະຕິບັດມາດຕະຖານຄວາມພຽງພໍຂອງທຶນຕາມ ພື້ນຖານຂອງ Basel II (ມາດຕະຖານ), ສືບຕໍ່ໃຫ້ສຳເລັດ ແລະ ຈັດຕັ້ງປະຕິບັດບັນດາໂຄງການທີ່ກຳລັງ/ກະກຽມຈັດຕັ້ງປະຕິບັດຕາມ ແຜນວຽກ ແລະ ສ້າງແຜນການໃຫ້ບັນດາໂຄງການທີ່ຍັງເຫຼືອເພື່ອປະກອບສ່ວນຍົກສູງ ຄວາມສາມາດການຄຸ້ມຄອງຄວາມສ່ຽງຂອງ LVB. ຄົ້ນຄວ້າ ແລະ ນຳໃຊ້ເຄື່ອງມືການວັດແທກຄວາມສ່ຽງດ້ານສິນເຊື່ອຕາມວິທີການທີ່ກ້າວໜ້າເຂົ້າໃນວຽກງານຄຸ້ມຄອງຄວາມສ່ຽງ ເພື່ອຮັບປະກັນຄວາມພ້ອມທີ່ຈະຕອບສະໜອງໄດ້ຕາມຄວາມຕ້ອງການຂອງທະນາ ຄານແຫ່ງ ສປປ ລາວ.

3. ຄວາມສ່ຽງດ້ານການດຳເນີນງານ

ຄວາມສ່ຽງດ້ານການດຳເນີນງານ ແມ່ນຄວາມສ່ຽງເນື່ອງຈາກຂະບວນການພາຍໃນທີ່ກຳນົດບໍ່ພຽງພໍ ຫຼື ມີຂໍ້ຜິດພາດ, ຍ້ອນປັດໃຈຂອງມະນຸດ, ຍ້ອນຄວາມຜິດພາດຂອງລະບົບ ຫຼື ປັດໃຈພາຍນອກ. ຄວາມສ່ຽງດ້ານການດຳເນີນງານສາມາດເກີດຂຶ້ນໃນທຸກໆກິດຈະກຳ ຂອງທະນາຄານ ແລະ ເປັນສິ່ງທີ່ບໍ່ສາມາດຄາດເດົາໄດ້. LVB ກຳລັງຢູ່ໃນຂະບວນການສ້າງ, ປະກາດໃຊ້ລະບຽບການທີ່ສົມບູນ, ເປັນເອກະພາບ ລະບົບເອກະສານເພື່ອຮັບປະກັນການຄຸ້ມຄອງຄວາມສ່ຽງໃນການດຳເນີນງານ. ເພື່ອຮັບປະກັນບັນດາຈຸດປະສົງຕົ້ນຕໍໃນການເຄື່ອນໄຫວທຸລະກິດ, LVB ຮູ້ເຖິງຄວາມສຳຄັນຂອງລະບົບການຄຸ້ມຄອງຄວາມສ່ຽງ ແມ່ນປັດໃຈສຳຄັນທີ່ສົ່ງຜົນໂດຍກົງຕໍ່ການບັນລຸເປົ້າໝາຍທາງທຸລະກິດ ແລະ ຕໍ່ຜົນກຳໄລຂອງທະນາຄານ. ດ້ວຍເຫດນີ້, ທະນາຄານໄດ້ຈັດຕັ້ງກົນໄກການຄຸ້ມຄອງຄວາມສ່ຽງທີ່ເຂັ້ມແຂງ ເພື່ອປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຈາກເຫດການທີ່ບໍ່ໄດ້ຄາດຄິດ ພ້ອມທັງໄດ້ນຳໃຊ້ມາດຕະການທີ່ທັນເວລາ ແລະ ເໝາະສົມໃນການຈຳກັດ ແລະ ຫຼຸດຜ່ອນຄວາມສູນເສຍທີ່ອາດເກີດຂຶ້ນໃຫ້ຢູ່ໃນລະດັບຕ່ຳສຸດ.

ໃນທາງກາງສະພາບແວດລ້ອມທາງທຸລະກິດທີ່ຜັນຜວນ ແລະ ໄພທຳມະຊາດທີ່ສົ່ງຜົນກະທົບເປັນວົງ ກວ້າງ, ການຍົກສູງຄຸນະພາບການບໍລິຫານຄວາມສ່ຽງດ້ານການດຳເນີນງານ ຈຶ່ງຖືກກຳນົດໃຫ້ເປັນໜຶ່ງໃນວຽກງານທີ່ສຳຄັນ. LVB ມຸ່ງໝັ້ນທີ່ຈະຫັນວຽກງານນີ້ໃຫ້ເປັນສ່ວນໜຶ່ງຂອງວັດທະນະທຳອົງກອນ, ພ້ອມທັງຍົກລະດັບການບໍລິຫານໃຫ້ສອດຄ່ອງກັບມາດ ຕະຖານສາກົນ ເພື່ອສ້າງພື້ນຖານໃຫ້ແກ່ການເຕີບໂຕທີ່ໝັ້ນຄົງໃນໄລຍະຍາວ.

4. ຄວາມສ່ຽງດ້ານການຕະຫລາດ

ຄວາມສ່ຽງດ້ານການຕະຫຼາດ ແມ່ນຜົນກະທົບຈາກການຜັນຜວນທີ່ບໍ່ຄາດຄິດຂອງອັດຕາດອກເບ້ຍ, ອັດຕາແລກປ່ຽນ, ລາຄາຫຸ້ນ ແລະ ສິນຄ້າ. ໃນສະພາບການທີ່ກະແສໂລກາພິວັດ ແລະ ການເຊື່ອມໂຍງທາງເສດຖະກິດໃນພາກພື້ນ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ປະກອບກັບຂະບວນການປະຕິຮູບກົນໄກການຄຸ້ມຄອງທີ່ກຳລັງດຳເນີນຢູ່, ທ່າອ່ຽງດັ່ງກ່າວໄດ້ສ້າງສິ່ງທ້າທາຍທີ່ຫຼີກລ່ຽງບໍ່ໄດ້ ຕໍ່ເສດຖະກິດ ສປປ ລາວ ແລະ ການດຳເນີນທຸລະກິດຂອງທະນາຄານ.

ເພື່ອຮັບມືກັບຄວາມສ່ຽງດັ່ງກ່າວຢ່າງມີປະສິດທິຜົນ, LVB ໄດ້ເອົາໃຈໃສ່ປັບປຸງລະບົບການຄຸ້ມຄອງໃຫ້ມີຄວາມເຂັ້ມງວດ ແລະ ຄົບຖ້ວນ, ເລີ່ມຕັ້ງແຕ່ການກຳນົດນະໂຍບາຍ, ລະບຽບການ ຈົນເຖິງຂັ້ນຕອນການປະຕິບັດຕົວຈິງ. ພ້ອມກັນນັ້ນ, LVB ຍັງໄດ້ຕິດຕາມການໝັ້ນຕົງຂອງອັດຕາແລກປ່ຽນ ແລະ ສະພາບຄ່ອງຂອງເງິນຕາຕ່າງ ປະເທດຢ່າງໃກ້ຊິດໃນແຕ່ລະວັນ ເພື່ອສ້າງຄວາມເຊື່ອໝັ້ນ ແລະ ເພື່ອຮັບປະກັນຫຼີກລ່ຽງ ຄວາມສ່ຽງທີ່ອາດຈະເກີດຂຶ້ນກັບທະນາຄານ.

5. ຄວາມສ່ຽງດ້ານການຊຳລະ

ຄວາມສ່ຽງດ້ານການຊຳລະ ແມ່ນຄວາມສ່ຽງທີ່ເກີດຂຶ້ນເມື່ອທະນາຄານບໍ່ສາມາດປະຕິບັດພັນທະການຊຳລະໜີ້ສິນໄດ້ຕາມກຳນົດເວລາ ຫຼື ສາມາດຊຳລະໄດ້ ແຕ່ຕ້ອງແບກຫາບຕົ້ນທຶນທີ່ສູງກວ່າລະດັບສະເລ່ຍຂອງຕະຫຼາດ.

ເພື່ອບໍລິຫານຄວາມສ່ຽງດັ່ງກ່າວ, LVB ກຳລັງຜັນຂະຫຍາຍບັນດາເນື້ອໃນເພື່ອຄຸ້ມຄອງຄວາມສ່ຽງດ້ານ ການຊຳລະຕາມລະບຽບການ, ພ້ອມກັບການສຶກສາຄົ້ນຄວ້ານຳໃຊ້ ການປະຕິບັດຂັ້ນສູງທີ່ເໝາະສົມ. ລະບົບເອກະ ສານໄດ້ປະກາດນຳໃຊ້ ເປັນເອກະພາບລວມທັງນະໂຍບາຍ, ລະບຽບ, ບັນດາເອກະສານແນະນຳ. LVB ຍັງໄດ້ປະຕິ ບັດການຕິດຕາມ, ກວດກາຄວາມສ່ຽງ ແລະ ລາຍງານຕາມລະບຽບການຂອງທະນາຄານ ແຫ່ງ ສປປ ລາວ ແລະ ຕອບສະໜອງຄວາມຮຽກຮ້ອງ ຕ້ອງການຂອງ ວຽກງານຄຸ້ມຄອງພາຍໃນ.

ຄຽງຄູ່ການຮັບປະກັນບັນດາຕົວຊີ້ວັດ, ອັດຕາສ່ວນສະພາບຄ່ອງ, LVB ຍັງພັດທະນາຕົວຊີ້ວັດການຄຸ້ມຄອງຄວາມສ່ຽງດ້ານສະພາບຄ່ອງພາຍໃນ, ຊຸດຕົວຊີ້ວັດເພື່ອກຳນົດຄວາມກົດດັນດ້ານສະພາບຄ່ອງ.... LVB ຕິດຕາມຄວາມປ່ຽນແປງຂອງຕະຫຼາດຢ່າງໃກ້ຊິດ, ຄວາມຕ້ອງການ



ຊຳລະຂອງລູກຄ້າ, ກະແສເງິນເຂົ້າອອກຂອງລູກຄ້າ ແລະ ຄາດຄະເນສະຖານະການທີ່ບໍ່ເອື້ອອຳນວຍເພື່ອກະກຽມການດຸ່ນດ່ຽງ ທຶນທີ່ເຫມາະສົມ.

6. ຄວາມສ່ຽງດ້ານດອກເບ້ຍບັນຊີເງິນຝາກ ທະນາຄານ

ຄວາມສ່ຽງດ້ານດອກເບ້ຍບັນຊີເງິນຝາກທະນາຄານ ແມ່ນຄວາມສ່ຽງ ທີ່ ເກີດຈາກການໝັ້ນຕົງທາງລົບຂອງອັດຕາດອກເບ້ຍເຊິ່ງສົ່ງຜົນກະທົບ ໂດຍກົງຕໍ່ລາຍຮັບ, ມູນຄ່າຊັບສິນ, ໜີ້ສິນ ກໍຄືພັນທະນອກໜ້າບັນຊີຂອງ ທະນາ ຄານທຸລະກິດ.

LVB ໄດ້ປະກາດນຳໃຊ້ຄົບຖ້ວນ, ເປັນເອກະພາບລະບົບເອກະສານ ເຊິ່ງ ລວມທັງນະໂຍບາຍ, ລະບຽບການ, ເອກະສານແນະນຳ, ພ້ອມກັນນັ້ນ ປະຕິບັດກຳນົດ, ວັດແທກ, ຕິດຕາມ, ຄວບຄຸມຄວາມສ່ຽງ ແລະ ລາຍງານ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ, ຕອບສະໜອງ ຄວາມຕ້ອງການຂອງລະບຽບຄຸ້ມຄອງພາຍໃນ. LVB ໄດ້ນຳໃຊ້ເຄື່ອງມືຢ່າງຄົບຖ້ວນເພື່ອວັດແທກຄວາມສ່ຽງອັດຕາດອກເບ້ຍຕາມລະບຽບການ ຂອງທະນາຄານແຫ່ງ ສປປ ລາວ.

ໃນປີ 2026, LVB ຈະສືບຕໍ່ປະຕິບັດຄົບຖ້ວນວຽກງານການຄຸ້ມຄອງ ຄວາມສ່ຽງດ້ານດອກເບ້ຍບັນຊີເງິນຝາກທະນາຄານ ຕາມຂໍ້ກຳນົດຂອງ ກົດໝາຍ ແລະ ຂອງທະນາຄານແຫ່ງ ສປປ ລາວ; ກວດກາ ແລະ ປັບປຸງ ລະບົບເອກະສານ; ພ້ອມກັນນັ້ນ ສືບຕໍ່ຄົ້ນຄວ້າປັບປຸງລະບົບເຄື່ອງມືວັດແທກຕາມ Basel II, ສືບຕໍ່ຄົ້ນຄວ້າສ້າງລະບົບຊອບແວຄຸ້ມຄອງຊັບສິນ ແລະ ໜີ້ສິນ (ALM) ເພື່ອຮັບໃຊ້ວຽກງານຄຸ້ມຄອງຄວາມສ່ຽງ ດ້ານດອກເບ້ຍບັນຊີເງິນຝາກທະນາຄານ

7. ຄວາມສ່ຽງດ້ານກົດໝາຍ

ປັດຈຸບັນ, ສປປ ລາວ ໄດ້ໃຫ້ຄວາມສຳຄັນສູງໃນການປັບປຸງ ແລະ ປະກາດໃຊ້ລະບົບກົດໝາຍ ກົດລະ ໂຍບາຍເສດຖະກິດໃຫ້ມີຄວາມເປັນເອກະພາບ. ການຫັນປ່ຽນນີ້ບໍ່ພຽງແຕ່ເພື່ອໃຫ້ສອດຄ່ອງກັບກົນໄກຕະຫຼາດເທົ່ານັ້ນ, ແຕ່ຍັງແມ່ນບາດກ້າວສຳຄັນເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາ, ແນໃສ່ເຮັດໃຫ້ປະເທດຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາໂດຍໄວ. ໄລຍະຜ່ານມາ, ສະພາແຫ່ງຊາດ ສປປ ລາວ ແລະ ພາກ ສ່ວນກ່ຽວຂ້ອງ ໄດ້ຮັບຮອງ ແລະ ປະກາດໃຊ້ບັນດາກົດໝາຍ, ມະຕິ ແລະ ຂໍ້ຕົກລົງສຳຄັນຫຼາຍສະບັບ ເພື່ອສ້າງສະພາບແວດລ້ອມທາງທຸລະກິດໃຫ້ມີຄວາມເຂັ້ມແຂງ ແລະ ສ້າງ ພື້ນຖານທາງດ້ານນິຕິກຳທີ່ຮັດກຸມ ໃຫ້ແກ່ການ ເຄື່ອນໄຫວຂອງບັນດາ ສະຖາບັນການເງິນຢູ່ ລາວ ໃຫ້ສາມາດດຳເນີນງານໄດ້ຢ່າງມີປະສິດທິພາບ ແລະ ຍືນຍົງ ເຊິ່ງປະກອບມີ: ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ), ເລກທີ 39/ສພຊ, ລົງວັນທີ 17/07/2023; ກົດໝາຍ ວ່າດ້ວຍວິສາຫະກິດ(ສະບັບປັບປຸງ), ເລກທີ 33/ສພຊ, ລົງວັນທີ 29/12/2022; ກົດໝາຍວ່າດ້ວຍອາກອນທີ່ດິນ, ເລກທີ 35/ສພຊ, ລົງ ວັນທີ 17/07/2023; ກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ), ເລກທີ 24/ສພຊ, ລົງວັນທີ 29/12/2022; ດຳລັດວ່າດ້ວຍຄອນໂດ ມີນຽມ, ເລກທີ 352/ລບ, ລົງວັນທີ 14/11/2023; ດຳລັດວ່າດ້ວຍ ດິນບໍລິເວນນ້ຳ, ເລກທີ 350/ລບ, ລົງວັນທີ 13/11/2023; ຂໍ້ຕົກລົງ ວ່າດ້ວຍບໍລິສັດບໍລິຫານໜີ້ ແລະ ຊັບສິນ, ເລກທີ 323/ທຫລ, ລົງ ວັນທີ 07/04/2023; ຂໍ້ຕົກລົງວ່າດ້ວຍວົງເງິນປົກປ້ອງ, ເລກທີ 1170/ ທຫລ, ລົງວັນທີ 28/11/2023; ຄຳແນະນຳວ່າດ້ວຍການປະເມີນລາຄາ ທີ່ດິນ, ເລກທີ 0040/ກສຊ, ລົງວັນທີ 12/01/2023; ຂໍ້ຕົກລົງວ່າ ດ້ວຍການປັບປຸງອັດຕາສ່ວນເງິນແຮຝາກບັງຄັບ, ເລກທີ 483/ທຫລ, ລົງວັນທີ 16/06/2025; ຂໍ້ຕົກລົງວ່າດ້ວຍອັດຕາດອກເບ້ຍພື້ນຖານ ຂອງທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 1127/ທຫລ, ລົງ

ຂັ້ນຕອນ ແລະ ຄວາມສ່ຽງພາຍໃນ ແລະ ຄວາມສ່ຽງພາຍນອກ (ຕໍ່)

ວັນທີ 24/11/2025; ຂໍ້ຕົກລົງວ່າດ້ວຍການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ ຂອງທະນາຄານທຸລະກິດ ແລະ ສາຂາ ທະນາຄານທຸລະກິດຕ່າງປະເທດ, ສະບັບເລກທີ 45/ນຍ, ລົງວັນທີ 11/04/2025; ຄຳແນະນຳວ່າດ້ວຍການຂຶ້ນທະບຽນກຳມະສິດຫ້ອງຊຸດ, ການຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງ ກຳມະສິດຫ້ອງຊຸດ ໃນຄອນໂດມິນຽມ ສະບັບເລກທີ 0190/ກຊສ, ລົງວັນທີ 14/02/2025; ຄຳແນະນຳວ່າດ້ວຍການຈົດທະບຽນເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ, ສະບັບເລກທີ 0564/ກຊສ, ລົງວັນທີ 28/03/2024; ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນສານ, ສະບັບເລກທີ 1786/ກຍ, ລົງວັນທີ 28/12/2023. ນອກຈາກນັ້ນ, ຍັງມີບັນດາກົດໝາຍທີ່ສຳຄັນຕໍ່ກັບວຽກງານຂອງ ທະນາຄານທຸລະກິດ ທີ່ກຳລັງມີຜົນສັກສິດ ເຊິ່ງປະກອບມີ: ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ, ລົງວັນທີ 06/12/2018; ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ(ສະບັບປັບປຸງ) ເລກທີ 62/ສພຊ, ລົງວັນທີ 28/06/2024; ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ(ສະບັບປັບປຸງ), ເລກທີ 12/ສພຊ, ລົງວັນທີ 17/11/2021; ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ 21/05/2019; ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ(ສະບັບປັບປຸງ), ເລກທີ 67/ສພຊ, ລົງວັນທີ 11/12/2024; ກົດໝາຍວ່າດ້ວຍການ ດຳເນີນຄະດີອາຍາ(ສະບັບປັບປຸງ), ເລກທີ 37/ສພຊ, ລົງວັນທີ 14/11/2017; ຂໍ້ຕົກລົງ ວ່າດ້ວຍ ຂອບເຂດການສະໜອງສິນເຊື່ອ ຂອງທະນາຄານທຸລະກິດ, ສະບັບເລກທີ 1062/ທຫລ, ລົງວັນທີ 03/11/2025.

ບັນດາລະບຽບທີ່ຫາກໍ່ປະກາດໃຊ້ ເຊິ່ງປະເມີນເຫັນວ່າ ແທດເໝາະ ເມື່ອປຽບທຽບກັບບາດກ້າວການປ່ຽນແປງຂອງສະພາບແວດລ້ອມ ທາງເສດຖະກິດໃນປະຈຸບັນ ແລະ ໄດ້ສ້າງບາດກ້າວປ່ຽນແປງສຳ ລັບພື້ນຖານໃນການເຄື່ອນໄຫວຂອງບັນດາທຸລະກິດ. ແຕ່ເນື້ອໃນຂອງ ກົດໝາຍທີ່ໄດ້ປະກາດໃຊ້ ຫຼື ປັບປຸງໃໝ່ ມີບາງສ່ວນທີ່ສົ່ງຜົນກະທົບເຖິງ ຄວາມສ່ຽງທາງດ້ານກົດໝາຍ ໃນການເຄື່ອນໄຫວຂອງທະນາຄານ ເວົ້າ ລວມ ແລະ LVB ເວົ້າສະເພາະ, ປະກອບມີເນື້ອໃນລະອຽດ ດັ່ງຕໍ່ໄປນີ້:

1) ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ), ເລກທີ 39/ ສພຊ, ລົງວັທີ 17/07/2023;

ມາດຕາ 13 (ປັບປຸງ): ທຶນຈົດທະບຽນ ແລະ ເງິນລົງທຶນ.

ທະນາຄານທຸລະກິດ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຕາມກົດໝາຍ ສະບັບນີ້ ຕ້ອງມີທຶນຈົດທະບຽນແຕ່ ໜຶ່ງພັນຕື້ກີບ ຂຶ້ນໄປ.

ທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງສາຂາ ຢູ່ ສປປ ລາວ ຕ້ອງມີ ເງິນລົງທຶນ ໃຫ້ສາຂາດັ່ງກ່າວ ແຕ່ ຫົກຮ້ອຍຕື້ກີບ ຂຶ້ນໄປ;

- ຂໍ້ຕົກລົງວ່າດ້ວຍການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ ຂອງ ທະນາຄານທຸລະກິດ ແລະ ສາຂາ ທະນາຄານທຸລະກິດຕ່າງປະເທດ, ສະບັບເລກທີ 45/ນຍ, ລົງວັນທີ 11/04/2025:

ມາດຕາ 2 ການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ.

ໃຫ້ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ໄດ້ຮັບການສ້າງຕັ້ງຂຶ້ນກ່ອນກົດ ໝາຍວ່າດ້ວຍທະນາຄານ ທຸລະກິດ (ສະບັບປັບປຸງ) ສະບັບເລກທີ 39/ສພຊ, ລົງວັນທີ 17/07/2023, ໃຫ້ເພີ່ມທຶນຈົດທະບຽນ ໃຫ້ຄົບຈຳນວນ ໜຶ່ງພັນ ຕື້ (1,000,000,000,000) ກີບ ຂຶ້ນໄປ ແລະ ເພີ່ມເງິນລົງທຶນ ໃຫ້ ສາຂາທະນາຄານທຸລະກິດຕ່າງປະເທດ ໃຫ້ຄົບຈຳນວນຫົກຮ້ອຍຕື້ (600,000,000,000) ກີບ ຂຶ້ນໄປ ຕາມທີ່ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບດັ່ງກ່າວ ພາຍໃນເວລາ ສິບປີ ນັບແຕ່ວັນທີ 02 ມິຖຸນາ 2025 ເປັນຕົ້ນໄປ.

ໃນນັ້ນ, ໃນໄລຍະ ຫ້າປີ ທຳອິດ ທະນາຄານທຸລະກິດ ແລະ ສາຂາ ທະນາຄານທຸລະກິດຕ່າງປະເທດ ຕ້ອງເພີ່ມທຶນຈົດທະບຽນ ແລະ ເງິນ ລົງທຶນ ຢ່າງໜ້ອຍ ສາມສິບສ່ວນຮ້ອຍ (30%) ຂອງຈຳນວນທຶນທີ່ຕ້ອງ ເພີ່ມ.

ສຳລັບທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ມີຄວາມພຽງພໍຂອງທຶນ ຕ່ຳກວ່າລະດັບຕາມລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ ໃຫ້ທະນາຄານດັ່ງກ່າວ ເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ ຂອງຕົນ ເພື່ອແກ້ໄຂຄວາມພຽງພໍຂອງທຶນ ໃຫ້ສຳ ເລັດພາຍໃນເວລາ ສາມປີ ແລະ ຄຽງຄູ່ກັນນັ້ນ ຕ້ອງສ້າງແຜນເພີ່ມທຶນ ຈົດທະບຽນ ແລະ ເງິນລົງທຶນຕ່ຳສຸດຂອງຕົນ ຕາມທີ່ກຳນົດໄວ້ໃນວັກທີ 1 ຂອງມາດຕານີ້.

ມາດຕາ 3 ແຜນການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ

ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງ ສ້າງແຜນເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນຂອງຕົນ ສອດຄ່ອງຕາມ ມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ທີ່ໄດ້ຜ່ານການຮັບຮອງ ໂດຍກອງ ປະຊຸມຜູ້ຖືຮຸ້ນ ຫຼື ຜູ້ມີສິດອຳນາດທີ່ກ່ຽວຂ້ອງຂອງສຳນັກງານໃຫຍ່ ແລ້ວ ສະເໜີກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານ ແຫ່ງ ສປປ ລາວ ເພື່ອພິຈາລະນາຮັບຮອງຂັ້ນສຸດທ້າຍ ພາຍໃນເວລາ ເກົ້າສິບວັນ ນັບແຕ່ ວັນທີ່ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້.

ເມື່ອກົມຄຸ້ມຄອງທະນາຄານທຸລະກິດ ຮັບຮອງເອົາແຜນດັ່ງກ່າວແລ້ວ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງ ປະຕິບັດຕາມແຜນການດັ່ງກ່າວ ຢ່າງເຂັ້ມງວດ.

ມາດຕາ 4 ຮູບການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ

ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ສາມາດ ເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນຂອງຕົນ ດ້ວຍຮູບການ ດັ່ງນີ້:

ຜູ້ຖືຮຸ້ນ ຫຼື ສຳນັກງານໃຫຍ່ ນຳເງິນຂອງຕົນ ມາເພີ່ມທຶນໃຫ້;

ນຳເອົາກຳໄລສຸດທິໃນປີ ຫຼື ກຳໄລສະສົມ ມາເພີ່ມທຶນໄດ້ ໂດຍໃຫ້ ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

ຫັນໜີ້ສິນຂອງຕົນ ເປັນທຶນຈົດທະບຽນ ຫຼື ເງິນລົງທຶນ;

ປັບປຸງໂຄງສ້າງຜູ້ຖືຮຸ້ນ ດ້ວຍການເພີ່ມຈຳນວນຮຸ້ນ ແລ້ວໃຫ້ຜູ້ລົງທຶນລາຍ ໃໝ່ເຂົ້າມາຊື້ຮຸ້ນ ໃນຮູບແບບບໍລິສັດ ຈຳກັດ ຫຼື ບໍລິສັດມະຫາຊົນ;

ຮູບການອື່ນ ຕາມການອະນຸຍາດ ຂອງທະນາຄານ ແຫ່ງ ສປປ ລາວ.

2) ດຳລັດວ່າດ້ວຍຄອນໂດມິນຽມ, ເລກທີ 352/ລບ, ລົງວັນທີ 14/11/2023.

ປະກາດໃຊ້ ເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາວຽກງານ ຄອນໂດມິນຽມ ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວ ດຳເນີນໄປຢ່າງມີ ປະສິດທິຜົນ ແນ ໃສ່ເພີ່ມມູນຄ່າທີ່ດິນປຸກສ້າງ ແລະ ນຳໃຊ້ທີ່ດິນ ໃຫ້ເກີດປະໂຫຍດ ສູງສຸດ ລວມທັງການປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຜູ້ທີ່ເປັນ ເຈົ້າຂອງກຳມະສິດຫ້ອງຊຸດ ໃນຄອນໂດມິນຽມ ປະກອບສ່ວນເຂົ້າໃນ ການພັດທະນາ ເສດຖະກິດ-ສັງຄົມ ໃຫ້ມີຄວາມຍືນຍົງ. (ລະອຽດຕາມ ດຳລັດວ່າດ້ວຍຄອນໂດມິນຽມ, ສະບັບເລກທີ 352/ລບ, ລົງວັນທີ 14/11/2023);

3) ຄຳແນະນຳ ວ່າດ້ວຍການຂຶ້ນທະບຽນ ກຳມະສິດຫ້ອງຊຸດ, ການ ຈົດທະບຽນ ການເຄື່ອນໄຫວ ແລະ ການປ່ຽນແປງ ກຳມະສິດຫ້ອງຊຸດ ໃນ ຄອນໂດມິນຽມ ສະບັບເລກທີ 0190/ກຊສ, ລົງວັນທີ 14/02/2025:

ຄຳແນະນຳສະບັບນີ້ ກຳນົດລະບຽບການ, ວິທີການ ແລະ ຂັ້ນຕອນ ກ່ຽວກັບການຂຶ້ນທະບຽນກຳມະສິດຫ້ອງຊຸດ, ການຈົດທະບຽນ ການເຄື່ອນໄຫວ ແລະ ການປ່ຽນແປງ ກຳມະສິດຫ້ອງຊຸດ ໃນຄອນໂດ ມິນຽມ ເພື່ອຄຸ້ມຄອງ, ຕິດຕາມ ກວດກາວຽກງານດັ່ງກ່າວ ດ້ວຍການ ບັນທຶກ ແລະ ຢັ້ງຢືນກຳມະສິດຫ້ອງຊຸດ ໃຫ້ຖືກຕ້ອງຕາມຄວາມເປັນຈິງ ແນ ໃສ່ປົກປ້ອງສິດຜົນປະໂຫຍດຂອງຜູ້ທີ່ເປັນເຈົ້າຂອງກຳມະສິດຫ້ອງ ຊຸດ, ຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບ ຮຽບຮ້ອຍ, ໂປ່ງໃສ, ຍຸຕິທຳ ແລະ ຖືກຕ້ອງຕາມກົດໝາຍ ປະກອບສ່ວນ ໃນການພັດທະນາ ເສດຖະກິດ-ສັງຄົມ.

4) ຂໍ້ຕົກລົງວ່າດ້ວຍວົງເງິນປົກປ້ອງ, ສະບັບເລກທີ 1170/ທຫລ, ລົງ ວັນທີ 28/11/2023;

ມາດຕາ 2 ວົງເງິນປົກປ້ອງ ລະບຸວ່າ:

ວົງເງິນປົກປ້ອງ ແມ່ນວົງເງິນສູງສຸດ ຈຳນວນ ໜຶ່ງຮ້ອຍລ້ານ (100,000,000) ກີບ ຕໍ່ຜູ້ຝາກເງິນໜຶ່ງລາຍ ຕໍ່ ສະມາຊິກໜຶ່ງແຫ່ງ ທີ່ ສຳນັກງານປົກປ້ອງເງິນຝາກ ຈ່າຍໃຫ້ຜູ້ຝາກເງິນ ທີ່ຝາກໄວ້ນຳສະມາຊິກ ໃດໜຶ່ງ ຂອງສຳນັກງານປົກປ້ອງເງິນຝາກ ພາຍຫຼັງທີ່ໄດ້ຮັບໜັງສືທາງ ລັດຖະການຈາກ ທະນາຄານແຫ່ງ ສປປ ລາວ ໃຫ້ດຳເນີນການຈ່າຍເງິນ ປົກປ້ອງ

(ລະອຽດຕາມ ຂໍ້ຕົກລົງວ່າດ້ວຍວົງເງິນປົກປ້ອງ, ສະບັບເລກທີ 1170/ ທຫລ, ລົງວັນທີ 28/11/2023);

5) ຄຳແນະນຳວ່າດ້ວຍການຈົດທະບຽນເຄື່ອນໄຫວ ແລະ ການປ່ຽນແປງ ສິດນຳໃຊ້ທີ່ດິນ, ສະບັບເລກທີ 0564/ກຊສ, ລົງວັນທີ 28/03/2024.

ຄຳແນະນຳສະບັບນີ້ ກຳນົດລະບຽບການ, ວິທີການ ແລະ ຂັ້ນຕອນ ກ່ຽວກັບການຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງ ສິດນຳ ໃຊ້ທີ່ດິນ ເພື່ອຄຸ້ມຄອງ, ຕິດຕາມ ກວດກາວຽກງານດັ່ງກ່າວ ດ້ວຍການ ບັນທຶກ ແລະ ຢັ້ງຢືນສິດນຳໃຊ້ທີ່ດິນ ໃຫ້ຖືກຕ້ອງຕາມຄວາມເປັນຈິງ ແນໃສ່ປົກປ້ອງສິດຜົນປະໂຫຍດຂອງລັດ ແລະ ປະຊາຊົນບັນດາເຜົ່າ ຜູ້ ທີ່ເປັນເຈົ້າຂອງສິດນຳໃຊ້ທີ່ດິນ, ຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ໂປ່ງໃສ, ຍຸຕິທຳ ແລະ ຖືກຕ້ອງຕາມ ກົດໝາຍ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ

(ລະອຽດຕາມຄຳແນະນຳວ່າດ້ວຍການຈົດທະບຽນເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ, ສະບັບເລກທີ 0564/ກຊສ, ລົງວັນທີ 28/03/2024)

6) ຂໍ້ຕົກລົງວ່າດ້ວຍການຫັນປ່ຽນປະເພດທີ່ດິນ, ສະບັບເລກທີ 1095/ ກຊສ, ລົງວັນທີ 18/06/2024.

ປະກາດໃຊ້ເພື່ອກຳນົດລະບຽບການ ແລະ ຂັ້ນຕອນການຫັນປ່ຽນປະເພດ ທີ່ດິນ ຈາກປະເພດໜຶ່ງໄປເປັນ ປະເພດອື່ນ ເພື່ອຮັບປະກັນຜົນປະໂຫຍດ ສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ, ມີການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນແຕ່ລະປະເພດ ໃຫ້ຖືກຕ້ອງ ຕາມເປົ້າໝາຍ, ກົດໝາຍ ແລະ ລະບຽບການ ແນໃສ່ຫັນປ່ຽນທີ່ດິນ ໃຫ້ໄປຕາມແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຈັດສັນທີ່ດິນຂັ້ນ ທ້ອງຖິ່ນ, ແຜນຍຸດທະສາດ, ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ເກີດຜົນປະໂຫຍດ ສູງສຸດ ປະກອບສ່ວນເຂົ້າໃນການນຳໃຊ້ທີ່ດິນໃຫ້ຖືກຕ້ອງຕາມເປົ້າໝາຍ ການອະນຸລັກ, ການປົກປັກຮັກສາສິ່ງແວດ ລ້ອມ ແລະ ພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ. (ລະອຽດ ຕາມ ຕົກລົງວ່າດ້ວຍການຫັນປ່ຽນປະເພດທີ່ດິນ, ສະບັບເລກທີ 1095/ ກຊສ, ລົງວັນທີ 18/06/2024);

7) ຂໍ້ຕົກລົງວ່າດ້ວຍການປັບປຸງອັດຕາສ່ວນເງິນແຂໜຝາກບັງຄັບ, ເລກທີ 483/ທຫລ, ລົງວັນທີ 16/06/2025.

ທະນາຄານທຸລະກິດຕ້ອງປະຕິບັດຫຼັກການຮັກສາເງິນແຂໜຝາກບັງຄັບ ໄວ້ ນຳທະນາຄານແຫ່ງ ສປປ ລາວ ໃຫ້ຄົບຖ້ວນດັ່ງນີ້:

- ອັດຕາສ່ວນເງິນແຂໜຝາກບັງຄັບສຳລັບສະກຸນເງິນກີບ ແລະ ສະກຸນ ເງິນຕາຕ່າງປະເທດ ແມ່ນໃຫ້ຮັກສາ ຕາມຂໍ້ຕົກລົງວ່າດ້ວຍການປັບປຸງ ອັດຕາສ່ວນເງິນແຂໜຝາກບັງຄັບ ສະບັບເລກທີ 903/ທຫລ, ລົງວັນທີ 27/08/2024;

- ການຮັກສາເງິນແຂໜຝາກບັງຄັບສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ ແມ່ນໃຫ້ຮັກສາເປັນເງິນສົດ ທັງໝົດ (ເງິນຝາກຢູ່ທະນາຄານແຫ່ງ ສປ ລາວ) ຂອງເງິນແຂໜຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຮັກສາ.

8) ຂໍ້ຕົກລົງວ່າດ້ວຍບໍລິສັດບໍລິຫານໜີ້ ແລະ ຊັບສິນ, ເລກທີ 323/ ທຫລ, ລົງວັນທີ 07/04/2023

ທະນາຄານແຫ່ງ ສປປລາວ ໄດ້ ປະກາດນຳໃຊ້ ຂໍ້ຕົກລົງວ່າດ້ວຍບໍລິສັດ ບໍລິຫານ ວ່າດ້ວຍບໍລິສັດບໍລິຫານໜີ້ ແລະ ຊັບສິນ ເພື່ອກຳນົດຫຼັກການ, ລະບຽບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ແລະ ເຄື່ອນໄຫວ ຂອງບໍລິສັດບໍລິຫານໜີ້ ແລະ ຊັບສິນ ເພື່ອເຮັດໃຫ້ບໍລິສັດດຳເນີນ ທຸລະກິດຢ່າງມີປະສິດທິພາບ ແນໃສ່ຮັບປະກັນການແກ້ໄຂ ບັນຫາໜີ້ສິນ ຕ້ອງຮັບທວງຍາກ ແລະ ຫຼັກຊັບ ທີ່ບໍ່ມີສະພາບຄ່ອງ ຂອງສະຖາບັນ ການເງິນ ພ້ອມທັງສ້າງຄວາມໝັ້ນຄົງໃຫ້ແກ່ສະຖາບັນການເງິນ.

(ລາຍລະອຽດກຳນົດໃນຂໍ້ຕົກລົງວ່າດ້ວຍບໍລິສັດບໍລິຫານໜີ້ ແລະ ຊັບສິນ, ເລກທີ 323/ທຫລ, ລົງວັນທີ 07/04/2023);

9) ຂໍ້ຕົກລົງວ່າດ້ວຍອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 1127/ທຫລ, ລົງວັນທີ 24/11/2025.

ມາດຕາ 2 ການປັບປຸງອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ ປັບຫຼຸດອັດຕາດອກເບ້ຍພື້ນຖານຂອງ ທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ ໄລຍະບໍ່ເກີນ 7 ວັນ ຈາກ 9% ຕໍ່ປີ ມາເປັນ 8.5% ຕໍ່ປີ.

10) ຄຳແນະນຳວ່າດ້ວຍການປະເມີນລາຄາທີ່ດິນ, ເລກທີ 0040/ກຊສ, ລົງວັນທີ 12/01/2023:

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ປະກາດ ນຳໃຊ້ຄຳແນະນຳສະບັບນີ້ ເພື່ອກຳນົດຫຼັກການ, ວິທີການ ແລະ ຂັ້ນ ຕອນ ກ່ຽວກັບວຽກງານປະເມີນ ລາຄາທີ່ດິນໃຫ້ເປັນເອກະພາບກັນໃນ ຂອບເຂດທົ່ວປະເທດ ເພື່ອນຳ ໃຊ້ເຂົ້າໃນການຄິດໄລ່ຄ່າທຳນຽມການ ຈົດທະບຽນການເຄື່ອນໄຫວ, ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ, ອາກອນລາຍໄດ້ຈາກທີ່ດິນ, ການປະຕິບັດນະໂຍບາຍຫັນສິດນຳໃຊ້ທີ່ດິນ ຂອງລັດ, ການທົດແທນ ຄ່າເສຍຫາຍຈາການໂອນສິດນຳໃຊ້ທີ່ດິນ ຄືນ, ການຂາຍສິດນຳໃຊ້ ທີ່ດິນ ຕາມການຕັດສິນຂອງສານ, ການຊື້ຂາຍ, ການແລກປ່ຽນສິດນຳ ໃຊ້ທີ່ດິນ, ການເອົາທີ່ດິນເຂົ້າເປັນຮຸ້ນ ແລະ/ຫຼື ເປັນຫຼັກຊັບຄ້ຳປະກັນ ແລະ ການຊື້-ຂາຍສິດນຳໃຊ້ທີ່ດິນຈັດສັນແບບມີ ກຳນົດ (ລາຍລະອຽດ ກຳນົດໃນຄຳແນະນຳວ່າດ້ວຍການປະເມີນລາຄາ ທີ່ດິນ, ເລກທີ 0040/ກຊສ, ລົງວັນທີ 12/01/2023);

11) ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນ ສານ, ສະບັບເລກທີ 1786/ກຍ, ລົງວັນທີ 28/12/2023.

ຄວາມຮັບຜິດຊອບຂອງອົງການທະບຽນສານ

ขันดาถอามส่วงพายใม และ ถอามส่วงพายนอก (ต่ำ)



ອົງການທະບຽນສານ ແຕ່ລະຂັ້ນມີຄວາມຮັບຜິດຊອບ ຄົ້ນຄວ້າ, ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງ ສັນຍາ ດັ່ງນີ້:

ກົມທະບຽນສານ ມີຄວາມຮັບຜິດຊອບ ໃນການຄົ້ນຄວ້າ, ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງສັນຍາ ຄື:

ສັນຍາ ທີ່ລັດຖະບານ, ກະຊວງ, ອົງການຂັ້ນສູນກາງ ເຊັ່ນກັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

ສັນຍາ ທີ່ສຳນັກງານໃຫຍ່ທະນາຄານທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ, ສະຖາບັນການເງິນ, ບໍລິສັດ ສິນເຊື່ອ ຊຶ່ງດຳເນີນທຸລະກິດ ຂອງຕົນ ຢູ່ ສປປ ລາວ ເຊັ່ນກັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

ສັນຍາ ລະຫວ່າງ ບຸກຄົນດ້ວຍກັນ, ບຸກຄົນກັບນິຕິບຸກຄົນ ຫຼື ນິຕິບຸກຄົນ ດ້ວຍກັນ ທັງພາຍໃນ ແລະ ຕ່າງປະເທດ.

ຂະແໜງທະບຽນສານ ມີຄວາມຮັບຜິດຊອບ ໃນການຄົ້ນຄວ້າ, ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງສັນຍາຕາມຂອບເຂດການ ຄຸ້ມຄອງຂອງ ຕົນ ດັ່ງນີ້:

ສັນຍາ ທີ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ພະແນກການ, ອົງການ ຂັ້ນແຂວງ ເຊັ່ນກັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ຂອງ ສປປ ລາວ ຫຼື ຂອງຕ່າງປະເທດ;

ສັນຍາ ທີ່ສຳນັກງານໃຫຍ່, ສາຂາທະນາຄານທຸລະກິດ ຫຼື ສະຖາບັນ ການເງິນ ຫຼື ບໍລິສັດ ເຊົ່າສິນເຊື່ອ ທັງ ພາຍໃນ ຫຼື ຕ່າງປະເທດ ເຊັ່ນກັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

ສັນຍາ ລະຫວ່າງ ບຸກຄົນດ້ວຍກັນ, ບຸກຄົນກັບນິຕິບຸກຄົນ ຫຼື ນິຕິບຸກຄົນ ດ້ວຍກັນ ທັງພາຍໃນ ແລະ ຕ່າງປະເທດ.

ໜ່ວຍງານທະບຽນສານ ມີຄວາມຮັບຜິດຊອບ ໃນການຄົ້ນຄວ້າ, ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງສັນຍາຕາມຂອບເຂດການ ຄຸ້ມຄອງຂອງ ຕົນ ຄື:

ສັນຍາ ທີ່ເຈົ້າເມືອງ, ຫົວໜ້າເຂດສະບານ, ເຈົ້ານະຄອນ, ຫ້ອງການ, ອົງການຂັ້ນເມືອງ ເຊັ່ນກັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

ສັນຍາ ທີ່ສາຂາ, ໜ່ວຍບໍລິການທະນາຄານທຸລະກິດ ຫຼື ສະຖາບັນ ການເງິນ ຫຼື ບໍລິສັດ ເຊົ່າສິນເຊື່ອ ທັງ ພາຍໃນ ຫຼື ຕ່າງປະເທດ ເຊັ່ນກັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

ສັນຍາ ລະຫວ່າງ ບຸກຄົນດ້ວຍກັນ, ບຸກຄົນກັບນິຕິບຸກຄົນ ຫຼື ນິຕິບຸກຄົນ ດ້ວຍກັນ ທັງພາຍໃນ ແລະ ຕ່າງປະເທດ.

12) ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ), ເລກທີ 33/ສພຊ, ລົງວັນທີ 29/12/2022.

ມາດຕາ 154 (ປັບປຸງ) ຄັງສຳຮອງ ແລະ ມາດຕາ 155 ການນຳໃຊ້ຄັງສຳ ຮອງ, ໄດ້ກຳນົດຄື:

ມາດຕາ 154 (ປັບປຸງ) ຄັງສຳຮອງ

ຄັງສຳຮອງ ມີ ສອງປະເພດຄືຄັງສຳຮອງຕາມລະບຽບການ ແລະ ຄັ້ງສຳ ຮອງອື່ນ.

ຄັງສຳຮອງຕາມລະບຽບການ ແມ່ນ ຄັງຮັບປະກັນຄວາມສ່ຽງ ຊຶ່ງ ບໍລິສັດຈຳກັດຕ້ອງຫັກ ສິບສ່ວນຮ້ອຍ ຂອງກຳໄລສຸດທິ ພາຍຫຼັງທີ່ໄດ້ ຫັກເງິນຂາດທຶນ ເພື່ອສ້າງເປັນຄັງສຳຮອງໄວ້ໃນແຕ່ລະປີ, ເວັ້ນເສຍແຕ່ ກົດໝາຍໄດ້ກຳນົດໄວ້ຢ່າງອື່ນ, ເມື່ອຄັງສຳຮອງມີເງິນສະສົມໄດ້ເຄິ່ງໜຶ່ງ ຂອງທຶນຈົດທະບຽນຂອງບໍລິສັດຈຳກັດແລ້ວ ບໍລິສັດຈຳກັດສາມາດ ໂຈະ ການຫັກເງິນເຂົ້າຄັງສຳຮອງດັ່ງກ່າວ, ເວັ້ນເສຍແຕ່ກົດລະບຽບຂອງບໍລິສັດ ໄດ້ກຳນົດໄວ້ຢ່າງອື່ນ.

ສຳລັບຄັງສຳຮອງອື່ນນັ້ນ ອາດຈະສ້າງກໍໄດ້ ຕາມການຕົກລົງຂອງກອງ ປະຊຸມຜູ້ຖືຮຸ້ນ.

ມາດຕາ 155 ການນຳໃຊ້ຄັງສຳຮອງ

ຄັງສຳຮອງຕາມລະບຽບການຂອງບໍລິສັດຈຳກັດ ຕ້ອງນຳໃຊ້ສະເພາະ ແຕ່ການຈ່າຍຖົມຂຸມຂາດທຶນຂອງບໍລິສັດຈຳກັດເທົ່ານັ້ນ, ເວັ້ນເສຍແຕ່ ກົດໝາຍໄດ້ກຳນົດໄວ້ຢ່າງອື່ນ. ຄັງສຳຮອງອື່ນຂອງບໍລິສັດຈຳກັດ ຈະນຳ ໃຊ້ເຂົ້າໃນການຖົມຂຸມຂາດທຶນໄດ້ ກໍຕໍ່ເມື່ອໄດ້ຮັບການເຫັນດີຈາກກອງ ປະຊຸມຜູ້ຖືຮຸ້ນເທົ່ານັ້ນ.

13) ກົດໝາຍວ່າດ້ວຍ ການປະຕິບັດຄຳຕັດສິນຂອງສານ (ສະບັບ ປັບປຸງ), ເລກທີ 12/ສພຊ, ລົງວັນທີ 17/11/2021:

ມາດຕາ 36 (ໃໝ່) ວິທີການຂາຍຊັບ, ຂໍ້ 01: ການຂາຍຊັບໂດຍເຈົ້າຂອງ ຫຼັກຊັບ, ວັກທີ 2 ໄດ້ກຳນົດ: ການຂາຍຫຼັກຊັບໃຫ້ປະຕິບັດຕາມເງື່ອນຄື:

ຊັບທີ່ຄະນະກຳມະການໄດ້ຕີລາຄາໄວ້ແລ້ວ ຖ້າມູນຄ່າສູງກ່ວາໜຶ່ສິນ ຫຼື ຄ່າເສຍຫາຍ ລວມທັງຄ່າທຳນຽມ ແລະ ຄ່າໃຊ້ຈ່າຍໃນການປະຕິບັດ ຄຳ ຕັດສິນຂອງສານ ສາມາດຂາຍຫຼຸດລາຄາໄດ້ ແຕ່ບໍ່ໃຫ້ຂາຍຫຼຸດມູນຄ່າ ທີ່ ກ່າວມານີ້, ຖ້າມູນຄ່າຊັບຫາກໜ້ອຍກ່ວາ ຫຼື ບໍ່ພຽງພໍກັບຄ່າໃຊ້ຈ່າຍທີ່ ກ່າວມານັ້ນ ແມ່ນບໍ່ໃຫ້ຂາຍຫຼຸດລາຄາທີ່ຄະນະກຳມະ ການໄດ້ຕີລາຄາໄວ້.

14) ປະມວນກົດໝາຍແພ່ງ, ເລກທີ 55/ສພຊ, ວັນທີ 06/12/2018.

ວ່າດ້ວຍອາຍຸຄວາມເສຍສິດ:

ມາດຕາ 52 ອາຍຸຄວາມເສຍສິດ.

ອາຍຸຄວາມເສຍສິດ ແມ່ນ ສາເຫດທີ່ພາໃຫ້ສິດສິ້ນສຸດລົງ ອັນເນື່ອງ ມາຈາກການບໍ່ເຄື່ອນໄຫວ ຂອງຜູ້ເປັນເຈົ້າຂອງສິດ ພາຍໃນເວລາ ສິບປີ ສຳລັບສັນຍາຮັບໝໍ້ກໍ່ສ້າງ, ສາມປີ ສຳລັບສັນຍາປະເພດ ອື່ນ ຫຼື ການ ໃຊ້ແທນຄ່າເສຍຫາຍ ແລະ ສິດທາງອື່ນ, ເວັ້ນເສຍແຕ່ ກົດໝາຍຫາກໄດ້ ກຳນົດໄວ້ເປັນຢ່າງ ອື່ນ.

ມາດຕາ 55 ການຮັບຮູ້ ໜີ້ສິນ ຫຼື ພັນທະອື່ນພາຍຫຼັງໝົດອາຍຸຄວາມ.

ການຮັບຮູ້ ໜີ້ສິນ ຫຼື ພັນທະອື່ນ ຂອງລູກໜີ້ ພາຍຫຼັງໝົດອາຍຸຄວາມ ແລ້ວ ໜີ້ສິນ ຫຼື ພັນທະດັ່ງກ່າວ ຍັງຈະສືບຕໍ່ປະຕິບັດຈົນກວ່າຈະໝົດອາຍຸ ຄວາມ ໂດຍເລີ່ມແຕ່ວັນຮັບຮູ້ໜີ້ສິນ ເປັນຕົ້ນໄປ. ກໍລະນີວັກທີໜຶ່ງ ຂອງ ມາດຕານີ້ ຈະບໍ່ມີຜົນປະຕິບັດຕໍ່ບຸກຄົນທີສາມ ເຊັ່ນ ຜູ້ຄ້ຳປະກັນ. ການ ເຫັນດີສິ່ງຊັບຄືນໃຫ້ແກ່ເຈົ້າກຳມະສິດເດີມຂອງຜູ້ຄອບຄອງ ພາຍຫຼັງໝົດ ອາຍຸຄວາມແລ້ວ ຊັບດັ່ງກ່າວ ຈະຮັບຮູ້ເປັນຂອງເຈົ້າກຳມະສິດເດີມ.

ມາດຕາ 57 ການນັບອາຍຸຄວາມເສຍສິດ.

ອາຍຸຄວາມ ໃຫ້ນັບຕາມແຕ່ລະກໍລະນີ ດັ່ງນີ້:

ການໄດ້ສິດ ໃຫ້ເລີ່ມນັບແຕ່ວັນເຂົ້າຄອບຄອງ ເປັນຕົ້ນໄປ ຈົນຄົບກຳນົດ ອາຍຸຄວາມ;

ການເສຍສິດ ໃຫ້ເລີ່ມນັບແຕ່ວັນທີ່ສາມາດນຳໃຊ້ສິດທາງ ເປັນຕົ້ນໄປ ຈົນ ໝົດກຳນົດອາຍຸຄວາມ.

ໃນກໍລະນີຜູ້ມີພັນທະຫາກໄດ້ເອົາຕົວຫຼົບໜີ ອາຍຸຄວາມໃຫ້ເລີ່ມນັບແຕ່

ขันดาถอามส่วงพายใม และ ถอามส่วงพายนอก (ต่ำ)

ວັນທີ່ຜູ້ມີສິດໄດ້ຮູ້ຂ່າວ ຫຼື ຄວນຈະຮູ້, ໄດ້ເຫັນ ຫຼື ຄວນຈະເຫັນ ຫຼື ຮູ້ບ່ອນຢູ່ສຸດທ້າຍຂອງຜູ້ກ່ຽວ ເປັນຕົ້ນໄປ.

ມາດຕາ 60 ສາເຫດຂອງການໂຈະອາຍຸຄວາມ ອາຍຸຄວາມ ຈະຖືກໂຈະຍ້ອນເຫດການ ດັ່ງນີ້:

ເຫດບັງເອີນ ຫຼື ເຫດສຸດວິໄສ;

ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ທີ່ຍັງບໍ່ທັນມີຜູ້ຕາງໜ້າຕາມກົດໝາຍ.

ມາດຕາ 61 ການຢຸດສະງັກຂອງອາຍຸຄວາມ ການຢຸດສະງັກຂອງອາຍຸຄວາມ ແມ່ນ ການບໍ່ນັບເອົາໄລຍະເວລາທີ່ຜ່ານມາ ເຂົ້າໃນອາຍຸຄວາມໃນການຮ້ອງຟ້ອງ. ອາຍຸຄວາມ ຈະຢຸດສະງັກ ຍ້ອນມີສາເຫດໃດໜຶ່ງ ດັ່ງນີ້:

ມີການທວງ ຫຼື ການຮ້ອງຟ້ອງ ຂອງຜູ້ມີສິດ;

ມີການຮັບຮູ້ໜີ້ສິນ ຫຼື ພັນທະອື່ນ ຂອງຜູ້ມີພັນທະ.

ເມື່ອມີສາເຫດໃດໜຶ່ງຕາມວັກທີສອງ ຂອງມາດຕານີ້ ໃຫ້ເລີ່ມຕົ້ນນັບອາຍຸຄວາມໃໝ່.

ມາດຕາ 62 ຜົນສະທ້ອນຂອງການຢຸດສະງັກອາຍຸຄວາມ

ການຢຸດສະງັກອາຍຸຄວາມ ຈະມີຜົນສະທ້ອນສະເພາະແຕ່ຄູ່ກໍລະນີ ແລະ ຜູ້ສືບທອດຂອງຜູ້ກ່ຽວເທົ່ານັ້ນ. ການທວງ, ການຮ້ອງຟ້ອງຮ່ວມຜູ້ໃດໜຶ່ງ ຈະພາໃຫ້ອາຍຸຄວາມຂອງຜູ້ມີສິດຮ່ວມອື່ນ ຢຸດສະງັກ ເຊັ່ນດຽວກັນ. ການທວງ, ການຮ້ອງຟ້ອງຕໍ່ລູກໜີ້ ຈະພາໃຫ້ອາຍຸຄວາມຂອງຜູ້ຄ້ຳປະກັນ ຢຸດສະງັກ ເຊັ່ນດຽວກັນ. ການຮັບຮູ້ ຫຼື ການໃຊ້ແທນໜີ້ສິນຂອງໜຶ່ງໃນບັນດາລູກໜີ້ຮ່ວມ ຈະພາໃຫ້ອາຍຸຄວາມຂອງລູກໜີ້ຮ່ວມອື່ນທັງໝົດ ຢຸດສະງັກ ເຊັ່ນດຽວກັນ. ການທວງມູນມໍລະດົກຂອງໜຶ່ງໃນບັນດາຜູ້ສືບທອດມູນມໍລະດົກຮ່ວມ ຫຼື ການຮັບຮູ້ສິດຂອງຜູ້ສືບທອດມູນມໍລະດົກໃດໜຶ່ງ ຈະພາໃຫ້ອາຍຸຄວາມຂອງຜູ້ສືບທອດຮ່ວມອື່ນ ຢຸດສະງັກ ເຊັ່ນດຽວກັນ.

ກົດໝາຍໄດ້ລະບຸ ອາຍຸຄວາມເສຍສິດ ຕໍ່ກັບບັນດາ ສັນຍາ ຫຼື ການໃຊ້ແທນຄ່າເສຍຫາຍ ແລະ ສິດທວງອື່ນ ແມ່ນມີກຳນົດ ເວລາ 03 ປີ; ດັ່ງນັ້ນ ທະນາຄານ ຄວນໄດ້ມີການຕິດຕາມ, ກວດກາ ຄືນລູກຄ້າແຕ່ລະລາຍຢ່າງຕໍ່ເນື່ອງເປັນປະຈຳ, ຄວນມີການແຈ້ງໃຫ້ລູກຄ້າມີການຮັບຮູ້ໜີ້ສິນຢ່າງເປັນປົກກະຕິ ແລະ ມີການເຊັນຮັບຮູ້ຂອງລູກໜີ້ຢ່າງຈະແຈ້ງ ຈຶ່ງເປັນການຕໍ່ອາຍຸຄວາມ; ຫາກກໍລະນີເກີນກຳນົດເວລາ 03 ປີ ຕາມອາຍຸຄວາມ ແລ້ວບໍ່ມີບ່ອນອີງໃນການທວງທາວ ຫຼື ຮັບຮູ້ໜີ້ສິນ ທີ່ເປັນລາຍລັກອັກສອນ ເຖິງວ່າ ສະຖານະການເປັນເຈົ້າໜີ້-ລູກໜີ້ ຈະຍັງຄົງເດີມ ແຕ່ຈະສິ້ນຜົນໃຫ້ທະນາຄານເສຍສິດໃນການທວງທາວໜີ້ສິນ, ຮ້ອງຟ້ອງ ຕາມກົດໝາຍ.

ການຄອບຄອງຊັບໂດຍບໍ່ຖືກຕ້ອງດ້ວຍຄວາມບໍລິສຸດໃຈ

ມາດຕາ 243 ວ່າດ້ວຍການສົ່ງຄືນຊັບສິ່ງຂອງທີ່ຄອບຄອງໂດຍບໍ່ຖືກຕ້ອງ, ວັກທີ 02 ໄດ້ກຳນົດວ່າ:

ຜູ້ຄອບຄອງອະສັງຫາລິມະຊັບໂດຍບໍ່ຖືກຕ້ອງ ດ້ວຍຄວາມບໍລິສຸດໃຈ ຕ້ອງສົ່ງອະສັງຫາລິມະຊັບທີ່ຄົນໄດ້ຄອບຄອງນັ້ນ ໃຫ້ເຈົ້າກຳມະສິດ ຖ້າຜູ້ກ່ຽວຫາກໄດ້ທວງເອົາຄືນ ໂດຍບໍ່ມີການທົດແທນຄືນແຕ່ຢ່າງໃດ. ແຕ່ສຳລັບຄ່າປົກປັກຮັກສາ ຫຼື ຄ່າທີ່ເຮັດໃຫ້ສະພາບອະສັງຫາລິມະຊັບດີຂຶ້ນນັ້ນ ສາມາດຮຽກຮ້ອງການທົດແທນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 242 ວັກທີໜຶ່ງ ແລະ ວັກທີສອງ ຂອງປະມວນກົດໝາຍສະບັບນີ້ ແຕ່ຜູ້ຄອບຄອງມີສິດທວງເອົາມູນຄ່າອະສັງຫາລິມະຊັບຈາກຜູ້ມອບໃຫ້ຕົນ. (ມາດຕານີ້ຈະສ້າງຄວາມອັບປະໂຫຍດ ແລະ ຄວາມສ່ຽງໃຫ້ແກ່ທະນາຄານ ໃນກໍລະນີຫຼັກຊັບຄ້ຳປະກັນ ຍັງມີຂໍ້ຂັດແຍ່ງກັບເຈົ້າຂອງເກົ່າ



ແລະ ການໂອນຊື່ເຈົ້າຂອງກຳມະສິດບໍ່ຖືກຕ້ອງ ແລະ ຍັງບໍ່ສິ້ນສຸດ ສິດຂອງເຈົ້າຂອງເກົ່າ, ຊຶ່ງກົດໝາຍສະບັບເກົ່າກໍຍັງປົກປ້ອງຜູ້ຄອບຄອງ ດ້ວຍຄວາມບໍລິສຸດໃຈ. ກໍຄືກັບວ່າ ທະນາຄານໄດ້ຮັບເອົາການຄ້ຳປະກັນ ດ້ວຍຫຼັກຊັບດັ່ງກ່າວ ຕາມລະບຽບ ແລະ ຂັ້ນຕອນຂອງກົດໝາຍ ໂດຍທີ່ບໍ່ຮູ້ກ່ອນວ່າ ຫຼັກຊັບດັ່ງກ່າວມີຂໍ້ຂັດແຍ່ງ).

ມາດຕາ 561 ການພົ້ນຈາກການຄ້ຳປະກັນ, ຂໍ້ 3 ໄດ້ກຳນົດວ່າ:

ມີການປ່ຽນແປງ, ເພີ່ມເຕີມເນື້ອໃນສັນຍາລະຫວ່າງລູກໜີ້ ແລະ ເຈົ້າໜີ້ ໂດຍຜູ້ຄ້ຳປະກັນບໍ່ເຫັນດີນຳ.

ສະນັ້ນ, ເພື່ອຮັບປະກັນວຽກງານກູ້ຢືມເງິນຂອງທະນາຄານ ການປັບປຸງ ຫຼື ແກ້ໄຂ, ເພີ່ມຕື່ມສັນຍາທີ່ພົວພັນເຖິງຫຼັກຊັບຄ້ຳປະກັນ ຂອງບຸກຄົນທີສາມ ແມ່ນຕ້ອງແຈ້ງ ແລະ ໃຫ້ເຊັນຄືນໂດຍກົງກັບເຈົ້າຂອງຫຼັກຊັບ, ຜູ້ກູ້ຢືມ, ເຊັນຢັ້ງຢືນຂັ້ນບ້ານ, ຢັ້ງຢືນທະບຽນສານ, ຢັ້ງຢືນຈາກ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ຫຼັກຊັບຄ້ຳປະກັນ ທີ່ອອກຊື່ ຫຼື ຊື່ຮ່ວມ ກັບເດັກທີ່ຍັງບໍ່ພົ້ນກະສຽນອາຍຸ.

ມາດຕາ 69 ວັກ 03 ປະມວນກົດໝາຍແພ່ງ ກ່າວຄື: ຜູ້ບໍ່ພົ້ນກະສຽນອາຍຸ ແມ່ນ ເດັກທີ່ມີອາຍຸຕ່ຳກວ່າສິບແປດປີ ແລະ ມີຄວາມສາມາດທາງດ້ານ

ການປະພຶດບໍ່ເຕັມສ່ວນ ;

ມາດຕາ 599 ວັກ 02 ກ່າວຄື: ສຳລັບການຄຸ້ມຄອງຊັບສົມບັດຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ທີ່ໄດ້ຮັບຈາການສືບທອດມູນມໍລະດົກຕາມກົດໝາຍ ຫຼື ບໍ່ໄດ້ກຳນົດໄວ້ໃນພິໄນກຳນົ້ນ ແມ່ນ ໃຫ້ພໍ່, ແມ່ ຫຼື ຜູ້ປົກຄອງເປັນຄຸ້ມຄອງຊັບສົມບັດຂອງຜູ້ກ່ຽວ. ວັກ 03 ກ່າວຄື: ສິດຂອງຜູ້ຄຸ້ມຄອງມູນມໍລະດົກຈະສິ້ນສຸດລົງ ເມື່ອເດັກນັ້ນ ຫາກພົ້ນກະສຽນອາຍຸ ສິບແປດປີ ຫຼື ຜູ້ເປັນບ້າເສຍຈິດ ຫາກໄດ້ກັບຄືນສູ່ສະພາບປົກກະຕິ.

ມາດຕາ 219: ຊັບຂອງ ພໍ່ ແມ່ ແລະ ລູກ: ວັກ 01: ລູກບໍ່ມີກຳມະສິດຕໍ່ຊັບຂອງພໍ່ ແລະ ແມ່ ແລະ ພໍ່ ແມ່ ກໍບໍ່ມີກຳມະສິດ ຕໍ່ຊັບຂອງລູກ ໃນເວລາທີ່ພວກກ່ຽວຍັງມີຊີວິດຢູ່; ວັກ 02: ພໍ່ ແມ່ ເປັນຜູ້ມີສິດຄຸ້ມຄອງຊັບຂອງເດັກ ທີ່ຍັງບໍ່ພົ້ນກະສຽນອາຍຸ).

ຫາກອີງຕາມ ກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ, ສະບັບເລກທີ 06/ສພຊ, ລົງວັນທີ 20/05/2005, ມາດຕາ 33 ສິດ ແລະ ພັນທະຂອງຜູ້ປົກຄອງ ກ່າວຄື: ຜູ້ປົກຄອງຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຜູ້ປົກຄອງຄົນເສຍຈິດ ຫຼື ຜູ້ຄຸ້ມຄອງຊັບສົມບັດ ຂອງຜູ້ຫາຍສາບສູນມີພັນທະປົກປັກຮັກສາຊັບສົມບັດຂອງພວກກ່ຽວ; ຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງດັ່ງກ່າວມີສິດນຳເອົາຊັບສົມບັດເດັກ ຫຼື ຜູ້ ເສຍຈິດ ໄປຄ້ຳປະກັນໜີ້ເພື່ອຮັບປະກັນການໃຊ້ຈ່າຍໃນການຄຸ້ມຄອງ ດູແລ ແລະ ຮັກສາຜົນປະໂຫຍດຂອງພວກກ່ຽວ ຕາມຄຳເຫັນດີຂອງສານ. ສະນັ້ນແລ້ວ, ຜູ້ປົກຄອງເດັກທີ່ມີຈຸດປະສົງຢາກກູ້ຢືມ ແລ້ວ ນຳຊັບເດັກທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນມາຄ້ຳກັບທະນາຄານ ຈະຕ້ອງໄດ້ຮັບການເຫັນດີຕົກລົງຈາສານທີ່ເປັນລາຍລັກອັກສອນ ແລ້ວນຳມາຍື່ນຕໍ່ທະນາຄານເພື່ອພິຈາລະນາຮັບເອົາຈຶ່ງເປັນເງື່ອນໄຂໃນການປ່ອຍກູ້ທີ່ຖືກຕ້ອງຕາມກົດໝາຍ; ຫາກຜູ້ສະເໜີກູ້ຢືມບໍ່ມີເອກະສານຄຳຕົກລົງຈາສານຄັດຕິດ ແມ່ນບໍ່ຄວນຮັບເອົາໃນທຸກກໍລະນີ.

ກໍລະນີເປັນຊັບຮ່ວມ ພໍ່ ແລະ/ຫຼື ແມ່ ແລະ ລູກ; ກໍລະນີຫາກບໍ່ມີຄຳຕົກລົງຂອງສານໃຫ້ນຳໃຊ້ສ່ວນພຸດຂອງລູກມາຄ້ຳປະກັນ ແມ່ນ ໃຫ້ພິຈາລະນາແຕ່ສ່ວນຂອງຊັບທີ່ເປັນພຸດ, ສ່ວນ ຂອງພໍ່ ແລະ/ຫຼື ແມ່ ເທົ່ານັ້ນມາເປັນຫຼັກຊັບຄ້ຳປະກັນ.

(ລະອຽດຕາມ ບົດແນະນຳ ວ່າດ້ວຍການພິຈາລະຮັບຫຼັກຊັບຄ້ຳປະກັນ ໂດຍ ເຈົ້າກຳມະສິດ - ເຈົ້າກຳມະສິດຮ່ວມ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ , ສະບັບເລກທີ 4052/ທລວ, ລົງວັນທີ 27/09/2024).

8. ถอามส่วงด้านละบับเต๊กาโนโลยิ และ ข้ำมูนข่าวสาน

ຄວາມສ່ຽງດ້ານເຕັກໂນໂລຢີ ແລະ ຂໍ້ມູນຂ່າວສານແມ່ນ ເຫດການທີ່ອາດຈະເກີດຂຶ້ນກັບລະບົບເຕັກໂນໂລຢີຂໍ້ມູນຂ່າວສານ ເຊັ່ນ: ລະບົບຂັດຂ້ອງ ບໍ່ສາມາດໃຊ້ງານໄດ້, ເຮັດທຸລະກຳມີຄວາມຊັກຊ້າ, ຄວາມບໍ່ສະຖຽນຂອງລະບົບ, ຂາດການເຊື່ອມຕໍ່, ອຸປະກອນຂັດຂ້ອງ ແລະ ບັນຫາຕ່າງໆທີ່ເຮັດໃຫ້ລະບົບບໍ່ສາມາດໃຊ້ງານໄດ້ຢ່າງປົກກະຕິ.

ໃນປີ 2025, LVB ໄດ້ປະຕິບັດບັນດາວຽກງານເພື່ອຍົກສູງລະບົບເຕັກໂນໂລຢີຂໍ້ມູນຂ່າວສານດັ່ງລຸ່ມນີ້:

- ປັບປຸງບັນດາກົດລະບຽບທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ນຳໃຊ້ລະບົບໃຫ້ມີປະສິຕິພາບ ແລະ ປອດໄພ;

- ລະບົບເຕັກໂນໂລຢີຂໍ້ມູນຂ່າວສານ ຂອງ LVB ໄດ້ຜ່ານມາດຕະຖານຂອງ PCI DSS V.4;

- ຈັດຕັ້ງການຝຶກອົບຮົມໃຫ້ແກ່ພະນັກງານໄອທີຢ່າງເປັນປະຈຳ ແລະ ຝຶກອົບຮົມພະນັກງານ LVB ທົ່ວລະບົບ ກ່ຽວກັບບັນຫາຄວາມສ່ຽງດ້ານລະບົບເຕັກໂນໂລຊີ;

- ທຳການກວດສອບຊ່ອງໂວ່ຂອງລະບົບ ແລະ ມາດຕະການປ້ອງກັນ;

- ປັບປຸງລະບົບຢ່າງຕໍ່ເນື່ອງໃຫ້ມີຄວາມສະຖຽນ ແລະ ປອດໄພ;

- ສືບຕໍ່ລົງທຶນດ້ານອຸປະກອນທີ່ທັນສະໄໝເພື່ອຕອບສະໜອງຕໍ່ການຂະຫຍາຍຕົວຂອງລະບົບນັບມື້ນັບເພີ່ມຂຶ້ນ;

- ເຝົ້າລະວັງ, ຕິດຕາມລະບົບຕະຫລອດ 24ຊົ່ວໂມງ ຢ່າງໃກ້ຊິດ, ກຽມພ້ອມຮັບມືບັນດາຄວາມສ່ຽງທີ່ອາດຈະເກີດຂຶ້ນເພື່ອຈັດການບັນຫາໃຫ້ທັນເຫດການ.



ບົດລາຍງານ ຂອງນັກກວດສອບອິດສະຫຼະ

ບົດລາຍງານຂອງນັກກວດສອບອິດສະຫຼະ 60

ໃບລາຍງານຖານະການເງິນ 64

ໃບສະຫຼຸບຜົນໄດ້ຮັບ ແລະ ຜົນໄດ້ຮັບສຸດທິອື່ນ 66

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ 67

ໃບລາຍງານກະແສເງິນສົດ 68

ສຳນັກງານໃຫຍ່, ບັນດາສາຂາ ແລະ ໜ່ວຍບໍລິການທົ່ວປະເທດ 70

05

ບົດລາຍງານຂອງນັກກວດສອບອິດສະຫຼະ

Deloitte.

ບໍລິສັດ ດີລອຍ (ລາວ) ຈຳກັດຜູ້ດຽວ
ອາຄານຕະຫຼາດຫຼັກຊັບລາວ
ບ້ານໂພນທັນ, ຖະໜົນ T4
ເມືອງໄຊເສດຖາ
ຕູ້ໄປສະນີ 2017, ນະຄອນຫຼວງວຽງຈັນ
ສປປ ລາວ

ໂທ : +856 21 419 300
ແຟັກ : +856 21 419 305

Deloitte (Lao) Sole Company Limited
Lao Securities Exchange Building
Phonthan Village, T4 Road
Saysettha District
P.O. Box 2017, Vientiane Capital
Lao PDR

Tel : +856 21 419 300
Fax : +856 21 419 305
www.deloitte.com

ບົດລາຍງານການກວດສອບຂອງນັກກວດສອບບັນຊີຕາມກົດໝາຍ

ເຖິງ: ຜູ້ຖືຫຸ້ນ ແລະ ສະພາບໍລິຫານ ທະນາຄານຮ່ວມທຸລະກິດ ລາວ-ຫວຽດ ຈຳກັດ

ຄຳເຫັນ

ຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນ ຂອງທະນາຄານຮ່ວມທຸລະກິດ ລາວ-ຫວຽດ ຈຳກັດ ("ທະນາຄານ") ເຊິ່ງລວມມີໃບລາຍງານຖານະການເງິນ ໃນວັນທີ 31 ທັນວາ 2025, ໃບສະຫຼຸບຜົນໄດ້ຮັບ ແລະຜົນໄດ້ຮັບສຸດທິອື່ນ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດການບັນຊີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ຊຶ່ງປະກອບດ້ວຍຂໍ້ມູນນະໂຍບາຍການບັນຊີທີ່ມີສາລະສຳຄັນ.

ຂ້າພະເຈົ້າເຫັນວ່າ ເອກະສານລາຍງານການເງິນຂອງທະນາຄານ ສຳລັບປີສິ້ນສຸດວັນທີ 31 ທັນວາ 2025 ໄດ້ຖືກກະກຽມໃນ ສາລະສຳຄັນ ໂດຍສອດຄ່ອງກັບລະບຽບການຂອງທະນາຄານ ແຫ່ງ ສປປ ລາວ ລວມເຖິງໜັງສືແຈ້ງການເລກທີ 1659/ທຫລ ລົງວັນທີ 14 ທັນວາ 2018 ແລະ ນະໂຍບາຍການບັນຊີຂອງທະນາຄານ ເຊິ່ງໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

ພື້ນຖານໃນການອອກຄຳເຫັນ

ຂ້າພະເຈົ້າໄດ້ປະຕິບັດການກວດສອບຕາມມາດຕະຖານສາກົນດ້ານການກວດສອບບັນຊີ (ISAs). ຄວາມຮັບຜິດຊອບຂອງຂ້າພະເຈົ້າພາຍໃຕ້ມາດຕະຖານດັ່ງກ່າວແມ່ນໄດ້ອະທິບາຍເພີ່ມເຕີມໃນວັກທີ່ມີຫົວຂໍ້ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີຕໍ່ການກວດສອບເອກະສານລາຍງານການເງິນຂອງບົດລາຍງານນີ້. ຂ້າພະເຈົ້າມີຄວາມເປັນອິດສະລະຈາກທະນາຄານໂດຍສອດຄ່ອງຕາມມາດຕະຖານສາກົນດ້ານຈັນຍາບັນສຳລັບນັກບັນຊີທີ່ອອກໂດຍຄະນະກຳມະການຈັນຍາບັນສາກົນສຳລັບນັກບັນຊີ (IESBA Code) ພ້ອມກັນນັ້ນກໍ່ໄດ້ປະຕິບັດຕາມຄວາມຮຽກຮ້ອງຕ້ອງການດ້ານຈັນຍາບັນທີ່ພົວພັນກັບການກວດສອບເອກະສານລາຍງານການເງິນຂອງພວກເຮົາ ແລະ ຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບດ້ານຈັນຍາບັນອື່ນໆຕາມກົດຈັນຍາບັນເຫຼົ່ານີ້. ຂ້າພະເຈົ້າເຊື່ອວ່າຫຼັກຖານການກວດສອບບັນຊີທີ່ຂ້າພະເຈົ້າໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃນການອອກຄຳເຫັນຂອງຂ້າພະເຈົ້າ.

ຂໍ້ມູນ ແລະ ເຫດການທີ່ເນັ້ນໜັກ - ຫຼັກການບັນຊີ ແລະ ຂໍ້ຈຳກັດໃນການນຳໃຊ້

ຂ້າພະເຈົ້າຂໍໃຫ້ທ່ານເບິ່ງບົດອະທິບາຍເລກທີ 2 ແລະ 3 ຂອງເອກະສານລາຍງານການເງິນ ເຊິ່ງໄດ້ອະທິບາຍພື້ນຖານການບັນຊີ ແລະຂໍ້ມູນນະໂຍບາຍການບັນຊີທີ່ມີສາລະສຳຄັນ. ເອກະສານລາຍງານການເງິນ ໄດ້ຖືກສ້າງຂຶ້ນ ເພື່ອສະໜອງຂໍ້ມູນສຳລັບໃຊ້ ໂດຍທະນາຄານ ແລະ ທະນາຄານ ແຫ່ງ ສປປ ລາວ. ສະນັ້ນ, ເອກະສານລາຍງານການເງິນ ອາດບໍ່ເໝາະສົມຫາກມີການນຳໃຊ້ເພື່ອຈຸດປະສົງອື່ນ. ຂ້າພະເຈົ້າບໍ່ໄດ້ສະແດງຄຳເຫັນແບບທີ່ປ່ຽນແປງໄປໃນເລື່ອງນີ້.

Deloitte refers to one or more of Deloitte Touche Tohmatsu Limited ("DTTL"), its global network of member firms, and their related entities (collectively, the "Deloitte organization"). DTTL (also referred to as "Deloitte Global") and each of its member firms and related entities are legally separate and independent entities, which cannot obligate or bind each other in respect of third parties. DTTL and each DTTL member firm and related entity is liable only for its own acts and omissions, and not those of each other. DTTL does not provide services to clients. Please see www.deloitte.com/about to learn more.

ຄວາມຮັບຜິດຊອບຂອງຜູ້ບໍລິຫານໃນເອກະສານລາຍງານການເງິນ

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນໂດຍເໝາະສົມ, ສອດຄ່ອງກັບລະບຽບການ, ແຈ້ງການຕ່າງໆ ຂອງທະນາຄານ ແຫ່ງ ສປປ ລາວ ລວມເຖິງໜັງສືແຈ້ງການເລກທີ 1659/ທຫລ ລົງວັນທີ 14 ທັນວາ 2018 ແລະ ນະໂຍບາຍການບັນຊີຂອງທະນາຄານ ເຊິ່ງໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ ແລະ ຮັບຜິດຊອບກ່ຽວກັບການຄວບຄຸມພາຍໃນທີ່ຜູ້ບໍລິຫານພິຈາລະນາວ່າຈຳເປັນເພື່ອໃຫ້ສາມາດກະກຽມບົດລາຍງານການເງິນທີ່ປາສະຈາກການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນບໍ່ວ່າຈະເກີດຈາກການທຸຈະລິດ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການປະເມີນຄວາມສາມາດຂອງທະນາຄານໃນການສືບຕໍ່ດຳເນີນງານແບບຕໍ່ເນື່ອງ, ຮັບຜິດຊອບເປີດເຜີຍຂໍ້ມູນທີ່ກ່ຽວກັບຄວາມສາມາດໃນການສືບຕໍ່ດຳເນີນງານແບບຕໍ່ເນື່ອງ (ຕາມຄວາມເໝາະສົມ) ແລະ ຮັບຜິດຊອບໃນການນຳໃຊ້ຫຼັກການບັນຊີແຫ່ງຄວາມຕໍ່ເນື່ອງ ຍົກເວັ້ນຜູ້ບໍລິຫານມີຄວາມຕັ້ງໃຈທີ່ຈະຍຸບເລີກທະນາຄານ ຫຼື ຢຸດການດຳເນີນກິດຈະການ ຫຼື ບໍ່ສາມາດດຳເນີນກິດຈະການແບບຕໍ່ເນື່ອງຕໍ່ໄປໄດ້.

ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີຕໍ່ການກວດສອບເອກະສານລາຍງານການເງິນ

ການກວດສອບຂອງຂ້າພະເຈົ້າມີຈຸດປະສົງເພື່ອໃຫ້ໄດ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນບໍ່ວ່າຈະເກີດຈາກການທຸຈະລິດ ຫຼື ຂໍ້ຜິດພາດ ແລະເພື່ອອອກບົດລາຍງານການກວດສອບທີ່ມີຄຳເຫັນຂອງຂ້າພະເຈົ້າ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງ ແຕ່ບໍ່ໄດ້ເປັນການຮັບປະກັນວ່າການປະຕິບັດການກວດສອບຕາມມາດຕະຖານສາກົນດ້ານການກວດສອບບັນຊີ ("ISAs") ຈະສາມາດກວດພົບຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນທີ່ມີຢູ່ໄດ້ສະເໝີໄປ. ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດຈະເກີດຈາກການທຸຈະລິດ ຫຼື ຂໍ້ຜິດພາດ ແລະ ຖືວ່າມີສາລະສຳຄັນເມື່ອຄາດຄະເນໄດ້ຢ່າງສົມເຫດສົມຜົນວ່າລາຍການທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມເຂົ້າກັນຈະມີຜົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ໃຊ້ເອກະສານລາຍງານການເງິນ ຈາກການນຳໃຊ້ບົດລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງຂ້າພະເຈົ້າຕາມມາດຕະຖານສາກົນດ້ານການກວດສອບບັນຊີ ("ISAs") ຂ້າພະເຈົ້າໄດ້ໃຊ້ດຸນພິນິດ ແລະ ການສັງເກດ, ການຕັ້ງຂໍ້ສົງໄສຕະຫຼອດການກວດສອບ. ການປະຕິບັດງານຂອງຂ້າພະເຈົ້າຍັງລວມເຖິງ:

- ກຳນົດ ແລະ ປະເມີນຄວາມສ່ຽງຈາກການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງໃນເອກະສານລາຍງານການເງິນບໍ່ວ່າຈະເກີດຈາກການທຸຈະລິດ ຫຼື ຂໍ້ຜິດພາດ, ອອກແບບ ແລະ ວາງແຜນການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະເກັບຫຼັກຖານການກວດສອບບັນຊີທີ່ພຽງພໍ ແລະ ເໝາະສົມເພື່ອເປັນບ່ອນອີງໃນການສະແດງຄຳເຫັນຂອງຂ້າພະເຈົ້າ. ຄວາມສ່ຽງທີ່ບໍ່ພົບຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນຊຶ່ງເປັນຜົນມາຈາກການທຸຈະລິດຈະສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ ເນື່ອງຈາກການທຸຈະລິດອາດກ່ຽວກັບການສົມຮູ້ຮ່ວມຄິດ, ການປອມແປງເອກະສານຫຼັກຖານ, ການຕັ້ງໃຈປິດບັງຂໍ້ມູນ, ການສະແດງຂໍ້ມູນທີ່ບໍ່ກົງກັບຄວາມເປັນຈິງ ຫຼື ການແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈໃນລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອອອກແບບວິທີການກວດສອບທີ່ເໝາະສົມກັບສະຖານະການ ແຕ່ບໍ່ແມ່ນເພື່ອຈຸດປະສົງສະແດງຄຳຄິດເຫັນຕໍ່ຄວາມມີປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ.

ບົດລາຍງານຂອງນັກກວດສອບອິດສະຫຼະ (ຕໍ່)

- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ຜູ້ບໍລິຫານໃຊ້ ແລະ ຄວາມສົມເຫດສົມຜົນຂອງການປະເມີນການ ທາງບັນຊີ ແລະ ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງເຊິ່ງກຳນົດຂຶ້ນໂດຍຜູ້ບໍລິຫານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ຫຼັກການບັນຊີແຫ່ງຄວາມຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຈາກຫຼັກຖານ ການກວດສອບບັນຊີທີ່ໄດ້ຮັບ ວ່າມີຄວາມບໍ່ແນ່ນອນສຳຫຼັບການດຳເນີນງານແບບຕໍ່ເນື່ອງທີ່ເປັນສາລະສຳຄັນບໍ່ຕໍ່ກັບ ເຫດການ ຫຼື ສະຖານະການທີ່ອາດກໍ່ໃຫ້ເກີດຄວາມສົງໄສທີ່ມີຄວາມສຳຄັນຕໍ່ຄວາມສາມາດໃນການດຳເນີນ ກິດຈະການແບບຕໍ່ເນື່ອງຂອງທະນາຄານ. ຖ້າຂ້າພະເຈົ້າໄດ້ສະຫຼຸບວ່າມີຄວາມບໍ່ແນ່ນອນສຳຫຼັບການດຳເນີນງານ ແບບຕໍ່ເນື່ອງທີ່ເປັນສາລະສຳຄັນ, ຂ້າພະເຈົ້າຕ້ອງກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບບັນຊີຂອງຂ້າພະເຈົ້າ ໃນການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ຫຼື ຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍ, ຄຳເຫັນ ຂອງຂ້າພະເຈົ້າອາດມີການປ່ຽນແປງໄປ. ຂໍ້ສະຫຼຸບຂອງຂ້າພະເຈົ້າຂຶ້ນຢູ່ກັບຫຼັກຖານການກວດສອບບັນຊີທີ່ໄດ້ຮັບ ຮອດວັນທີອອກບົດລາຍງານການກວດສອບບັນຊີຂອງຂ້າພະເຈົ້າ. ເຖິງຢ່າງໃດກໍ່ຕາມ, ເຫດການ ຫຼື ສະຖານະການ ທີ່ອາດເກີດຂຶ້ນໃນອະນາຄົດອາດເປັນສາເຫດໃຫ້ທະນາຄານຕ້ອງຢຸດຕິການດຳເນີນກິດຈະການແບບຕໍ່ເນື່ອງ.
- ປະເມີນການນຳສະເໜີ ໂຄງສ້າງ ແລະ ເນື້ອໃນຂອງເອກະສານລາຍງານການເງິນໂດຍລວມ, ລວມເຖິງການເປີດເຜີຍ ຂໍ້ມູນກ່ຽວກັບ ລາຍການ ແລະ ເຫດການໃນເອກະສານລາຍງານການເງິນຢ່າງຖືກຕ້ອງຕາມຄວາມເໝາະສົມ.

ຂ້າພະເຈົ້າໄດ້ສື່ສານກັບຜູ້ບໍລິຫານ ກ່ຽວກັບແຜນປະຕິບັດງານ, ໜ້າວຽກ, ເວລາທີ່ຈະໃຊ້ໃນການກວດສອບ ແລະ ປະເດັນ ທີ່ມີຄວາມສຳຄັນທີ່ພົບຈາກການກວດສອບ ລວມເຖິງຂໍ້ບົກພ່ອງທີ່ມີຄວາມສຳຄັນຕໍ່ລະບົບການຄວບຄຸມພາຍໃນ ຊຶ່ງຂ້າພະເຈົ້າໄດ້ພົບເຫັນໃນລະຫວ່າງການກວດສອບຂອງຂ້າພະເຈົ້າ.

ນະຄອນຫຼວງວຽງຈັນ,
ວັນທີ 31 ມີນາ 2026

ຊຸພິ ສຸຣະຊຸຕິການ
ຜູ້ກວດສອບບັນຊີຕາມກົດໝາຍ
ບໍລິສັດ ດີລອຍ (ລາວ) ຈຳກັດຜູ້ດຽວ



ໃບລາຍງານຖານະການເງິນ

ວັນທີ 31 ທັນວາ 2025

ໜ່ວຍ : ລ້ານກີບ

	ບົດອະທິບາຍ ເລກທີ	*2025*	*2024*
ຊັບສິນ			
ເງິນສົດໃນຄັງ	11	381,954	345,836
ເງິນຝາກຢູ່ ທຫລ	12	2,853,623	3,299,819
ໜີ້ຕ້ອງຮັບຈາກທະນາຄານອື່ນ	13	1,610,261	1,521,218
ຫຼັກຊັບມີໄວ້ເພື່ອຂາຍ	14.1	1,085	3,371
ຫຼັກຊັບປະເພດທີ່ຖືໄວ້ຈົນຄົບກຳນົດ	14.2	1,570,536	859,788
ການລົງທຶນໃນບໍລິສັດຮ່ວມທຸລະກິດ	15	2,700	2,700
ເງິນກູ້ສະໜອງໃຫ້ລູກຄ້າ, ຫັກລົບເງິນແຮສະເພາະ	16	15,285,174	13,929,302
ຊັບສິນບັດ ແລະ ອຸປະກອນ	18	174,781	184,835
ຊັບສິນທີ່ບໍ່ມີຕົວຕົນ	19	59,064	47,198
ສິດນຳໃຊ້ຊັບສິນ	20	64,916	65,143
ຊັບສິນພວມຊື້ ແລະ ພວມກໍ່ສ້າງ	21	14,391	21,141
ຊັບສິນອາກອນລໍຖ້າສະສາງ	26.3	93,926	98,675
ຊັບສິນອື່ນໆ	22	149,456	87,957
ລວມຍອດຊັບສິນ		**22,261,867**	**20,466,983**

ໃບລາຍງານຖານະການເງິນ (ຕໍ່)

ວັນທີ 31 ທັນວາ 2025

ໜ່ວຍ : ລ້ານກີບ

	ບົດອະທິບາຍ ເລກທີ	*2025*	*2024*
ໜີ້ສິນ ແລະ ທຶນ			
ເງິນກູ້ຢືມຈາກລັດຖະບານ ແລະ ທຫລ	23	279,009	243,655
ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ	24	5,083,166	4,265,139
ໜີ້ຕ້ອງສົ່ງໃຫ້ລູກຄ້າ	25	15,420,190	14,579,253
ຫນີ້ສິນອະນຸພັນ		-	1,372
ໜີ້ຕ້ອງສົ່ງອາກອນ	26.1	4,991	6,019
ໜີ້ສິນອາກອນລໍຖ້າຊຳລະສະສາງ	26.3	75,887	82,613
ໜີ້ສິນອື່ນໆ	27	228,871	162,509
ລວມໜີ້ສິນ		**21,092,114**	**19,340,560**
ທຶນ			
ທຶນຈົດທະບຽນ	28	791,358	791,358
ຄັງສຳຮອງຕາມກົດໝາຍ	29.1.1	80,709	76,407
ຄັງສະສົມຂະຫຍາຍທຸລະກິດ	29.1.2	58,697	54,395
ເງິນແຮສຳລັບຂາຍ	29.2	(1,429)	313
ກຳໄລສະສົມ		240,418	203,950
ລວມທຶນ		**1,169,753**	**1,126,423**
ລວມໜີ້ສິນ ແລະ ທຶນ		**22,261,867**	**20,466,983**

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ

ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

ໜ່ວຍ : ລ້ານກີບ

	ບົດອະທິບາຍ ເລກທີ	ທຶນຈົດທະບຽນ ທີ່ຖອກແລ້ວ	ທຶນສຳຮອງ ຕາມກົດໝາຍ	ຄັງຂະຫຍາຍ ທຸລະກິດ	ຄັງແຮຫຼັກຊັບ ມີໄວ້ເພື່ອຂາຍ	ກຳໄລສະສົມ	ລວມ
ຍອດຍົກມາໃນວັນທີ 1 ມັງກອນ 2024		**791,358**	**72,320**	**50,308**	**(297)**	**161,227**	**1,074,916**
ກຳໄລສຸດທິສຳລັບປີ		-	-	-	-	50,990	50,990
ໂອນເຂົ້າທຶນສຳຮອງຕາມກົດໝາຍ	29.1.1	-	4,087	-	-	(4,087)	-
ສ້າງຄັງຂະຫຍາຍທຸລະກິດ	29.1.2	-	-	4,087	-	(4,087)	-
ສ່ວນປ່ຽນແປງສຸດທິຂອງຄັງແຮຫຼັກຊັບຖືໄວ້ເພື່ອຂາຍ		-	-	-	762	-	762
ອາກອນກຳໄລທີ່ກ່ຽວຂ້ອງກັບລາຍຮັບອື່ນໆນອກການທຸລະກິດ		-	-	-	(152)	-	(152)
ສ່ວນຜິດຕ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ		-	-	-	-	(93)	(93)
ຍອດເຫຼືອທ້າຍໃນວັນທີ 31 ທັນວາ 2024		**791,358**	**76,407**	**54,395**	**313**	**203,950**	**1,126,423**
ຍອດຍົກມາໃນວັນທີ 1 ມັງກອນ 2025		**791,358**	**76,407**	**54,395**	**313**	**203,950**	**1,126,423**
ກຳໄລສຸດທິສຳລັບປີ		791.358	-	-	-	44,677	44,677
ໂອນເຂົ້າທຶນສຳຮອງຕາມກົດໝາຍ	29.1.1	-	4,302	-	-	(4,302)	-
ສ້າງຄັງຂະຫຍາຍທຸລະກິດ	29.1.2	-	-	4,302	-	(4,302)	-
ສ່ວນປ່ຽນແປງສຸດທິຂອງຄັງແຮຫຼັກຊັບຖືໄວ້ເພື່ອຂາຍ		-	-	-	(2,286)	-	(2,286)
ອາກອນກຳໄລທີ່ກ່ຽວຂ້ອງກັບລາຍຮັບອື່ນໆນອກການທຸລະກິດ		-	-	-	544	-	544
ສ່ວນຜິດຕ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ		-	-	-	-	395	395
ຍອດເຫຼືອທ້າຍໃນວັນທີ 31 ທັນວາ 2025		**791.358**	**80,709**	**58,697**	**(1,429)**	**240,418**	**1,169,753**

ໃບລາຍງານກະແສເງິນສົດ

ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

ໜ່ວຍ : ລ້ານກີບ

	ບົດອະທິບາຍ ເລກທີ	*2025*	*2024*
ກະແສເງິນສົດຈາກກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນກຳໄລ		55,199	51,111
ດັດແກ້ເພື່ອສົມທຽບກຳໄລກ່ອນອາກອນກຳໄລກັບ			
ເງິນສົດຮັບ (ຈ່າຍ) ຈາກກິດຈະກຳການດຳເນີນງານ:			
ຄ່າຫຼ້ຽຫ້ຽນ ແລະ ຄ່າເສື່ອມ	18, 19, 20	33,675	27,221
ຄ່າເສື່ອມມູນຄ່າ		251,932	289,239
ລາຍຮັບດອກເບ້ຍ	5	(1,011,221)	(826,557)
ລາຍຈ່າຍດອກເບ້ຍ	5	787,681	597,886
ກຳໄລຈາກການຂາຍຊັບສົມບັດຄົງທີ່		(187)	-
ລາຍຮັບຈາກປັນຜົນ		(1,106)	-
ເງິນສົດທີ່ມາຈາກການດຳເນີນງານ		115,973	138,900
ດອກເບ້ຍທີ່ໄດ້ຮັບ		1,101,113	814,666
ດອກເບ້ຍທີ່ຈ່າຍ		(750,655)	(556,936)
ຈ່າຍອາກອນກຳໄລ	26.1	(12,967)	(9,567)
ເງິນສົດສຸດທິຈາກ ກິດຈະກຳດຳເນີນງານ ກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນດຳເນີນງານ		453,464	387,063
ການປ່ຽນແປງຂອງຊັບສິນ ແລະ ໜີ້ສິນດຳເນີນງານ:			
ການຫຼຸດລົງ (ເພີ່ມຂຶ້ນ) ຂອງຊັບສິນດຳເນີນງານ:			
ເງິນຝາກຢູ່ ທະນາຄານ ແຫ່ງ ສປປ ລາວ		(73,428)	(270,058)
ໜີ້ຕ້ອງຮັບຈາກທະນາຄານອື່ນ		(8,209)	175,626
ເງິນກູ້ໃຫ້ລູກຄ້າ		(1,754,029)	(1,930,650)
ຊັບສິນອື່ນໆ		(60,749)	28,828
ເພີ່ມຂຶ້ນ (ຫຼຸດລົງ) ໃນໜີ້ສິນຈາກກິດຈະກຳການດຳເນີນງານ:			
ເງິນກູ້ຢືມຈາກລັດຖະບານ ແລະ ທຫລ		27,395	51,451
ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ		836,315	82,442
ໜີ້ຕ້ອງສົ່ງໃຫ້ລູກຄ້າ		802,147	1,630,386
ຫນີ້ສິນອະນຸພັນ		(1,372)	1,372
ໜີ້ສິນອື່ນໆ		57,047	(6,600)
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**278,581**	**149,860**

ໃບລາຍງານກະແສເງິນສົດ (ຕໍ່)

ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

ໜ່ວຍ : ລ້ານກີບ

	ບົດອະທິບາຍ ເລກທີ	*2025*	*2024*
ກະແສເງິນສົດຈາກກິດຈະກຳການລົງທຶນ			
ການລົງທຶນໃນບໍລິສັດຮ່ວມທຸລະກິດ		-	(1,000)
ການລົງທຶນໃໝ່ໃນຫຼັກຊັບ		(938,075)	(186,867)
ຫຼັບຊັບຄົບກຳນົດທີ່ໄດ້ຮັບຊຳລະ		286,377	322,405
ຊື້ຊັບສົມບັດຄົງທີ່ ແລະ ຊັບສົມບັດພວມກໍ່ສ້າງ		(18,069)	(19,139)
ເງິນສົດຈ່າຍໃນການຊື້ຊັບສົມບັດຄົງທີ່		(5,899)	(2,543)
ເງິນສົດຮັບຈາກການຂາຍຊັບສົມບັດ ແລະ ອຸປະກອນ		187	-
ເງິນສົດຮັບຈາກປັນຜົນ		1,106	-
ເງິນສົດສຸດທິ(ໃຊ້ໃນ)ກິດຈະກຳການລົງທຶນ		(674,373)	112,856
ກະແສເງິນສົດຈາກກິດຈະກຳທາງການເງິນ			
ເງິນສົດຈ່າຍໜີ້ສິນຕາມສັນຍາເຊົ່າ	27	(4,163)	(1,933)
ເງິນສົດສຸດທິໃຊ້ໃນກິດຈະກຳທາງການເງິນ		(4,163)	(1,933)
ປ່ຽນແປງສຸດທິ ເພີ່ມຂຶ້ນ(ຫຼຸດລົງ) ຂອງເງິນສົດ ແລະ ທຽບເທົ່າເງິນສົດ		(399,955)	260,783
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ		4,185,457	3,924,674
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ	**30**	**3,785,502**	**4,185,457**

ສຳນັກງານໃຫຍ່, ບັນດາສາຂາ ແລະ ໜ່ວຍບໍລິການທົ່ວປະເທດ



ສຳນັກງານໃຫຍ່ ແລະ ບັນດາໜ່ວຍບໍລິການທີ່ຂຶ້ນກັບ

ລດ	ພາກສ່ວນ	ທີ່ຢູ່
1	**ສຳນັກງານໃຫຍ່**	ເລກທີ 44, ຖະໜົນລ້ານຊ້າງ, ບ້ານຫັດສະດີ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ
2	ໜ່ວຍບໍລິການ ຕະຫຼາດເຊົ້າ	ຊັ້ນ 1 ຕະຫຼາດເຊົ້າຊອບປິ້ງມໍ 1, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ.
3	ໜ່ວຍບໍລິການ ສີໄຄ	ບ້ານສີໄຄ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ.
4	ໜ່ວຍບໍລິການ ດອນໜູນ	ບ້ານໄຊສະຫວ່າງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ສປປ ລາວ.
5	ໜ່ວຍບໍລິການ ສາລາຄຳ	ບ້ານສາລາຄຳ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ, ສປປ ລາວ.
6	ໜ່ວຍບໍລິການ ດົງໂດກ	ບ້ານດົງໂດກ, ໜ່ວຍ 2, ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ສປປ ລາວ.
7	ໜ່ວຍບໍລິການ ລາວ - ໄອເຕັກ	ຊັ້ນ 1 ຕຶກໄອເຕັກໃຫມ່, ນະຄອນຫຼວງວຽງຈັນ, ສປປ ລາວ.
8	ໜ່ວຍບໍລິການ ວັດໄຕ	ບ້ານນາຄຳ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ.
9	ໜ່ວຍບໍລິການນາໄຊ	ຕຶກ Unitel, ຖະໜົນໜອງບອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ບັນດາສາຂາ ແລະ ໜ່ວຍບໍລິການທີ່ຂຶ້ນກັບ

ລດ	ພາກສ່ວນ	ທີ່ຢູ່
1	**ສາຂາຫຼວງພະບາງ**	ເຮືອນເລກທີ 04, ບ້ານໂພນເພຍ, ນະຄອນຫຼວງພະບາງ, ແຂວງຫຼວງພະບາງ, ສປປ ລາວ.
	ຈຸດບໍລິການ ເລກ 1	ຖະໜົນ 13 ເໜືອ, ບ້ານຊ່າງຄ້ອງ, ນະຄອນຫຼວງພະບາງ, ແຂວງຫຼວງພະບາງ, ສປປ ລາວ.
2	**ສາຂາຊຽງຂວາງ**	ເລກທີ 07, ບ້ານໂພນສະຫວັນໄຊ, ເມືອງແປກ, ແຂວງຊຽງຂວາງ, ສປປ ລາວ.
	ໜ່ວຍບໍລິການ ໂພນສະຫວັນ	ບ້ານນ້ຳໜ້ຳ, ເມືອງແປກ, ແຂວງຊຽງຂວາງ, ສປປ ລາວ.
3	**ສາຂາອຸດົມໄຊ**	ຖະໜົນ 13 ເໜືອ, ບ້ານວັງໄຮ, ເມືອງໄຊ, ແຂວງອຸດົມໄຊ, ສປປ ລາວ.
4	**ສາຂາຄຳມ່ວນ**	ເຮືອນເລກທີ 001, ບ້ານສັນຕິສຸກ, ເມືອງທ່າແຂກ, ແຂວງຄຳມ່ວນ, ສປປ ລາວ.
	ໜ່ວຍບໍລິການ ຫຼັກ 3	ບ້ານໜອງບົວຄຳ, ເມືອງທ່າແຂກ, ແຂວງຄຳມ່ວນ, ສປປ ລາວ.
	ໜ່ວຍບໍລິການ ບໍລິຄຳໄຊ	ຖະໜົນ 13 ໃຕ້, ບ້ານໂພນໄຊເໜືອ, ເມືອງປາກຊັນ, ແຂວງບໍລິຄຳໄຊ, ສປປ ລາວ.
5	**ສາຂາ ສະຫວັນນະເຂດ**	**ຖະໜົນທ່າແຮ່. ບ້ານໄຊຍະມຸງຄຸນ. ນະຄອນໄກສອນພົມວິຫານ. ແຂວງສະຫວັນນະເຂດ, ສປປ ລາວ.**
	ໜ່ວຍບໍລິການ ເຊໂນ	ຖະໜົນເລກ 9. ບ້ານໄຊຍະມຸງຄຸນ. ເມືອງອຸທຸມພອນ. ແຂວງສະຫວັນນະເຂດ, ສປປ ລາວ.
	ໜ່ວຍບໍລິການ ໄກສອນ	ເຮືອນເລກທີ 178. ຖະໜົນສີສະຫວ່າງວົງ. ບ້ານລັດຕະນະລັງສີໃຕ້. ນະຄອນໄກສອນ. ແຂວງ ສະຫວັນນະເຂດ, ສປປ ລາວ.
6	**ສາຂາຈຳປາສັກ**	ເສັ້ນທາງເລກທີ 13 ໃຕ້, ບ້ານໂພນສະອາດ, ຫຼັກ 02, ນະຄອນປາກເຊ, ແຂວງຈຳປາສັກ, ສປປ ລາວ.
	ໜ່ວຍບໍລິການດວງດີ	ຕະຫຼາດດວງດີພຣາຊາ, ຖະໜົນເລກທີ 46, ບ້ານ ພັດທະນາຫຼັກເມືອງ, ນະຄອນປາກເຊ, ແຂວງຈຳປາສັກ, ສປປ ລາວ.
	ໜ່ວຍບໍລິການ ຫຼັກ 8	ບ້ານໜອງບົວທອງ, ເມືອງບາຈຽງຈະເລີນສຸກ, ແຂວງຈຳປາສັກ, ສປປ ລາວ.
7	**ສາຂາອັດຕະປື**	ຖະໜົນເລກ 11 ບ້ານຫຼັກສາມ, ເມືອງ ສາມັກຄີໄຊ, ແຂວງ ອັດຕະປື, ສປປ ລາວ.

07 ສາຂາ

15 ໜ່ວຍບໍລິການ

01 ຈຸດບໍລິການ

TABLE OF CONTENTS

01 MESSAGE

76 Message from the Chairman of the Board of Directors

78 Outstanding Awards 2024

02 LAOVIETBANK OVERVIEW 2025

82 General information about LaoVietBank

84 The process of establishment and development

86 Mission and vision

